# ໂຄງການທັກສະບູລິມະສິດ ສຳລັບການເຕີບໂຕ ຂອງ ສປປ ລາວ

# Lao PDR Priority Skills for Growth Project

# ແຜນການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ

# Stakeholder Engagement Plan (SEP)

## ກະຊວງສຶກສາ ແລະກິລາ ແລະກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ມັງກອນ 2022

# ອະທິບາຍອັກສອນຫຍໍ້ພາສາອັງກິດ

CSO ອົງການຈັດຕັ້ງສັງຄົມ
DOF ກົມການເງິນ
DSDE ກົມພັດທະນາທັກສະ ແລະການຈ້າງງານ
GBV ການໃຊ້ຄວາມຮຸນແຮງທາງເພດ
GOL ລັດຖະບານລາວ
GRM ກົນໄກແກ້ໄຂຄຳຮ້ອງທຸກ
LMIS ລະບົບຂໍ້ມູນຂ່າວສານຕະຫຼາດແຮງງານ
LMP ລະບຽບການຄຸ້ມຄອງແຮງງານ
LNCCI ສະພາການຄ້າ ແລະອຸດສາຫະກຳ ລາວ
LSW ແຮງງານ ແລະສະຫວັດດີການສັງຄົມ
LSWDO ເຈົ້າໜ້າທີ່ດ້ານສະວັດດີການສັງຄົມ ແລະການພັດທະນາ ທ້ອງຖິ່ນ
M&E ການຕິດຕາມກວດກາ ແລະປະເມີນຜົນ
MIS ລະບົບການຄຸ້ມຄອງຂໍ້ມູນຂ່າວສານ
MoES ກະຊວງສຶກສາ ແລະກິລາ
MoF ກະຊວງການເງິນ
MoLSW ກະຊວງແຮງງານ ແລະສະຫວັດດີການສັງຄົມ
INGO ອົງການບໍ່ສັງກັດລັດສາກົນ
NPA ສະມາຄົມບໍ່ຫວັງຜົນກຳໄລ (NGOໃນປະເທດ)
NTC ສະພາTVET ແຫ່ງຊາດ
NTC–PO ຫ້ອງການໃຫ້ຄຳປຶກສາດ້ານຝຶກອົບຮົມແຫ່ງຊາດ
PCU ໜ່ວຍງານປະສານໂຄງການ
PES ສູນການຈ້າງງານລັດ
PESS ບໍລິການດ້ານການສຶກສາ ແລະກິລາ ຂັ້ນແຂວງ
PDO ຈຸດປະສົງການພັດທະນາຂອງໂຄງການ
PIM ຄູ່ມືປະຕິບັດໂຄງການ
PLSW ພະແນກແຮງງານ ແລະສະຫວັດດີການສັງຄົມ ແຂວງ

PO ຫ້ອງການຜູ້ຕາງໜ້າຖາວອນ
POM ຄູ່ມືດຳເນີນງານຂອງໂຄງການ
PSC ຄະນະກຳມະການຊີ້ນຳໂຄງການ
SEP ແຜນການເຮັດວຽກກັບຜູມີສ່ວນຮ່ວມ
SDC ສູນພັດທະນາທັກສາະ
SDED ກົມພັດທະນາສີມືແຮງງານ

# 1. ພາກສະເໜີ

ແຜນການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ (SEP) ສະບັບນີ້ ແມ່ນສໍາລັບໂຄງການທັກສະບູລິມະສິດ ສໍາລັບການເຕີບໂຕ ຂອງສປປ ລາວ. ຈຸດປະສົງຂອງໂຄງການແມ່ນເພື່ອເພີ່ມ ແລະປັບປຸງການມີທັກສະທີ່ແທດເໝາະກັບຄວາມຕ້ອງການຂອງຕະຫຼາດ ແລະເພື່ອໃຫ້ມີການກ້າວໄປສູ່ການມີວຽກເຮັດຢ່າງປະສິບຜົນສໍາລັບ ຢູ່ ສປປ ລາວ, ແລະໃນກໍລະນີ ຂອງວິກິດການ ຫຼື ເຫດການສຸກເສີນ ທີ່ບັນລຸໄດ້ຕາມເງື່ອນໄຂ, ຈະມີການຕອບໂຕ້ຢ່າງທັນການ ແລະມີປະສິດທິຜົນ. ຂອບເຂດປົກຄຸມຂອງໂຄງການແມ່ນທົ່ວປະເທດ, ຍ້ອນຈຸດສຸມຂອງມັນແມ່ນ ການປະຕິຮູບລະບົບ. ຈະມີການສະໜັບສະໜູນຊ່ວຍເຫຼືອສະຖາບັນສະເພາະແຫ່ງໜຶ່ງ (ສູນຫຼືໂຮງຮຽນຝຶກອົບຮົມວິຊາຊີບ (TVET), ສູນພັດທະນາທັກສະ (SDCs), ສູນຈັດຫາງານ ແລະອື່ນໆ) ໃນ 17 ແຂວງ ຊຶ່ງມີຈຸດສຸມໃສ່ເມືອງທີ່ທຸກຍາກທີ່ສຸດ, ແຜນ SEP ສະບັບນີ້ ແມ່ນແຜນການຮ່ວມມງານກັບບັນດາຜູ້ມີສ່ວນຮ່ວມໃນວຽກງານໂຕຈິງ ຂອງກິດຈະກໍາພັດທະນາທັກສະ, ແລະບັນດານັກສຶກສາ (ນັກສໍາມະນາກອນ), ຊາວໜຸ່ມ ແມ່ນມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ຢ່າງມີຄວາມໝາຍ, ຮອບດ້ານ, ແບບມີການປຶກສາຫາລື ແລະເຮັດວຽກຮ່ວມກັນ ຕະຫຼອດຮອບວຽນຂອງໂຄງການ. ແຜນ SEP ແມ່ນຖືກອອກແບບໃຫ້ແທດເໝາະກັບຄຸນລັກສະນະ ແລະຂະໜາດຂອງໂຄງການ ແລະຄວາມສ່ຽງ ແລະຜົນກະທົບ ທີ່ອາດເກີດຂຶ້ນຂອງໂຄງການ, ຊຶ່ງອາດເຫຼັກນ້ອຍ ຍ້ອນສ່ວນໃຫ່ຍບໍ່ໄດ້ມີການກິດຈະກໍາການກໍ່ສ້າງ.

ເປັນໄປໄດ້ວ່າ ໂຄງການນີ້ ສ່ວນໃຫ່ຍຈະມີຜົນກະທົບດ້ານບວກ ແລະເປັນການເພີ່ມກາລະໂອກາດໃນການພັດທະນາທັກສະ ແລະການຈ້າງງານ. ຍ້ອນວ່າກິດຈະກໍາຕ່າງໆ ຂອງໂຄງການ ບໍ່ພຽງແຕ່ປັບປຸງດ້ານຄຸນນະພາບ ຂອງທັກສະດ້ານເຕັກນິກ ສໍາລັບໄວໜຸ່ມ ແລະ/ຫຼື ຄົນໃນໄວອອກແຮງງານເທົ່ານັ້ນ ແຕ່ຍັງມີການສະໜອງທັກສະ ແລະຄວາມຮູ້ໃຫ້ແກ່ສູນຝຶກອົບຮົມຕ່າງໆ ໃນການສິດສອນ ແລະຄຸ້ມຄອງຢ່າງມີປະສິດທິຜົນ, ປັບປຸງສິ່ງອໍານວຍຄວາມສະດວກຂອງການຝຶກອົບຮົມ, ແລະ ສະໜອງກິດຈະກໍາການສົ່ງເສີມການເຮັດທຸລະກິດສ່ວນຕົວ. ເຖິງແນວໃດກໍ່ຕາມ, ອາດມີຄວາມສ່ຽງ ແລະຜົນກະທົບທາງອ້ອມ ເໜື່ອງຈາກໂຄງການສະໜອງໃຫ້ແກ່ວຽກງານທີ່ເປັນລະບົບ ໃນລະບົບຄຸ້ມຄອງການສຶກສາ ແລະຊັບພະຍາກອນມະນຸດແຫ່ງຊາດ. ຄວາມສ່ຽງສ່ວນໃຫ່ຍທີ່ອາດເປັນໄປໄດ້ ຂອງກິດຈະກໍາຂອງໂຄງ ແມ່ນກິດຈະກໍາອາດບໍ່ສາມາດແກ້ໄຂຄວາມບໍ່ສະເໝີພາບດ້ານໂຄງສ້າງ ໃນການຮັບເອົາໄວໜຸ່ມ ແລະສົ່ງເສີມການມີສ່ວນຮ່ວມໄລຍະຍາວ ຂອງຊົນເຜົ່າ ແລະຊຸມຊົນໃນເຂດຫ່າງໄກຊອກຫຼີກ. ຖ້າ ບໍ່ມີການເອົາໃຈໃສ່, ກິດຈະກໍາໂຄງການອາດເບິ່ງຂ້າມການປົກປ້ອງທາງສັງຄົມ ຄວາມສ່ຽງຕ່າງໆ ທີ່ພົວພັນກັບການໃຊ້ຄວາມຮຸນແຮງທາງເພດ ແລະທາງຮ່າງກາຍ ຕໍ່ແມ່ຍິງ ແລະໄວລຸ້ນ.

ແຜນ SEP ລວມມີຍຸດທະສາດ ແລະຂໍ້ມູນຂ່າວສານ ກ່ຽວກັບວິທີເຮັດວຽກກັບຜູ້ມີສ່ວນຮ່ວມຂອງໂຄງການ ເພື່ອຮັບປະກັນ ວ່າຜູ້ມີສ່ວນຮ່ວມ ສາມາດເຂົ້າເຖິງຂໍ້ມູນໂຄງການໄດ້ງ່າຍ, ວິທີໄດ້ຮັບຜົນປະໂຫຍດຂອງໂຄງຂອງ, ພ້ອມທັງ ສະໜອງຄໍາຄິດເຫັນ ແລະຄໍາແນະນໍາ, ແລະສະແດງຄວາມກັງວົນ ຂອງເຂົາເຈົ້າ ໂດຍຜ່ານກົນໄກການຮ້ອງທຸກ ໃນລະດັບກິດຈະກໍາຂອງໂຄງການ. ແຜນ SEP ສົ່ງເສີມສາຍພົວພັນແບບສ້າງສັນ ແລະຕອບສະໜອງຄວາມຕ້ອງການ ທີ່ສໍາຄັນ ສໍາລັບການບໍລິຫານຢ່າງປະສິບຜົນສໍາເລັດຄວາມສ່ຽງດ້ານສິ່ງແວດລ້ອມ ແລະສັງຄົມ ຂອງໂຄງການ. ເຖິງວ່າ ການປະເມີນໂດຍກົງ ຈະມີຂໍ້ຈໍາກັດຍ້ອນສະພາບໂຄວິດ-19, ໄດ້ມີການປຶກສາຫາລື ກ່ຽວກັບSEP ທາງອອນລາຍ ກັບພາກສ່ວນກ່ຽວຂ້ອງຕ່າງໆ ລວມທັງ ຕົວແທນຄົນສໍາຄັນ ຈາກກົມທີ່ຈັດຕັ້ງປະຕິບັດໂຄງການ ຂອງກະຊວງສຶກສາ ແລະກິລາ (MOES) ແລະກະຊວງແຮງງານ ແລະສະຫວັດດີການສັງຄົມ (MOLSW) ເຊັ່ນດຽວກັນກັບຕົວແທນ ຈາກບັນດາສູນຝຶກອົບຮົມທີ່ຖືກຄັດເລືອກ ແລະຊາວໜຸ່ມທີ່ເຮັດວຽກໃນຂະແໜງກະສິກໍາ ແລະນັກທຸລະກິດທີ່ເຮັດວຽກການຕະຫຼາດ, ພ້ອມທັງ ນັກຮຽນ ແລະຜູ້ທີ່ຍັງບໍ່ທັນມີວຽກເຮັດ ທີ່ເປັນຄົນ ຂອງແຂວງ ຊຽງຂວາງ, ຫົວພັນ, ວຽງຈັນ, ສະຫວັນນະເຂດ ແລະຈໍາປາສັກ. ໄດ້ມີການສໍາພາດທາງອອນລາຍ ໃນກາງເດືອນ ຕຸລາ 2021, ຊຶ່ງຈຸດປະສົງແມ່ນ ເພື່ອໃຫ້ເຂົ້າໃຈຫຼາຍຂຶ້ນ ກ່ຽວກັບແຮງບັນດານໃຈ ຂອງຊາວໜຸ່ມ ແລະກາລະໂອກາດດ້ານການເຮັດວຽກຂອງເຂົາເຈົ້າໃນອະນາຄົດ, ຄວາມຄາດຫວັງດ້ານອາຊີບ ແລະຂີດຄວາມສາມາດ ແລະຄວາມຕ້ອງການປະຕິບັດ/ຄວາມພ້ອມ ຂອງສູນຝຶກອົບຮົມທີ່ຖືກຄັດເລືອກ. ຍັງມີການສໍາພາດ ເພື່ອອອກແບບຍຸດທະສາດການເຮັດວຽກ ທີ່ຍືນຍົງໃນສະພາບເງື່ອນໄຂ ຂອງ ປະເທດ ລາວ. ແຜນ SEP ມີການພິຈາລະນາສະພາບເງື່ອນໄຂຕ່າງໆ ຂອງກຸ່ມຄົນດ້ອຍໂອກາດ ແລະຄົນສ່ວນນ້ອຍ ໃນສັງຄົມ ແລະບັນດາຊົນເຜົ່າ. ໄດ້ມີການ

ອອກແບບ ເພື່ອໃຫ້ເປັນສ່ວນໜຶ່ງ ຂອງການຕີລາຄາ, ປະເມີນຜົນ, ການຕັດສິນບັນຫາ ໂຄງການຍ່ອຍ ແລະການບໍລິຫານ ແລະ ຕິດຕາມຄວາມສ່ຽງ ແລະຜົນກະທົບທາງສິ່ງແວດລ້ອມ ແລະສັງຄົມ ໃນຕອນຕົ້ນຂອງໂຄງການ.

ໃນການສ້າງແຜນ SEP ສະບັບນີ້ ໄດ້ມີການປະຕິບັດຕາມເຂັ້ມງວດ ກັບ ຂໍ້ຕົກລົງແຫ່ງຊາດ ກ່ຽວກັບບົດແນະນຳການອະນຸມັດ ແລະປະຕິບັດການລົງທຶນຂອງລັດ ໃນຂະບວນການປະເມີນຜົນກະທົບທາງສິ່ງແວດລ້ອມ ແລະສັງຄົມຂອງໂຄງການ ເລກທີ 707/MoNRE (2013); ດຳລັດ ຂອງລັດຖະບານ ວ່າດ້ວຍ ຊົນເຜົ່າ ເລກທີ207/ລບ (2020), ມາດຕາ 17 ກ່ຽວກັບ ເຜີຍແຜ່ຂໍ້ມູນຂ່າວສານ, ການມີສ່ວນຮ່ວມ, ນະໂຍບາຍ, ກົດໝາຍ ແລະລະບຽບການ ທີ່ພົວພັນກັບປະຊາຊົນລາວ ບັນດາເຜົ່າ; ແຜນຕອບໂຕ້ກັບພະຍາດ COVID–19 ຂອງກະຊວງສຶກສາ ແລະກິລາ (2020); ແລະມາດຕະຖານທາງສິ່ງແວດລ້ອມ ແລະສັງຄົມ ຂອງທະນາຄານໂລກ (ESSs)[1], ໂດຍສະເພາະ ແມ່ນມາດຕະຖານ ESS10: ການເຮັດວຽກກັບຜູ້ມີສ່ວນຮ່ວມ ແລະການເຜີຍແຜ່ຂໍ້ມູນຂ່າວສານ. ໂຄງການນີ້ ແມ່ນອີງໃສ່ການເຮັດວຽກຮ່ວມກັບຊົນເຜົ່າ ແລະຊຸມຕ່າງໆ ເປັນຫຼັກ ຊຶ່ງເຂົາເຈົ້າອາດຕ້ອງໄດ້ມີການເຮັດວຽກຮ່ວມນຳ, ການເຜີຍແຜ່ຂໍ້ມູນຂ່າວສານ ແລະຂະບວນການປຶກສາຫາລື ແບບພິເສດສະເພາະ ຕາມທີ່ລະບຸໄວ້ໃນ ESS1 ແລະESS7.

## 2. ຈຸດປະສົງຂອງແຜນ SEP

ຈຸດປະສົງ ຂອງແຜນ SEP ສະບັບນີ້ ແມ່ນເພື່ອກຳນົດວິທີການທີ່ເປັນລະບົບ ໃນການເຮັດວຽກຮ່ວມກັບບັນດາຜູ້ມີສ່ວນຮ່ວມ ທີ່ຈະຊ່ວຍໂຄງການກຳນົດ ຜູ້ມີສ່ວນຮ່ວມທີ່ໄດ້ຮັບຜົນກະທົບ ແລະທີ່ມີຄວາມສົນໃຈເຂົ້າຮ່ວມ, ໂດຍສະເພາະ ຄົນໝູ່ມທີ່ບໍ່ມີວຽກເຮັດ ແລະສ້າງ ແລະຮັກສາການສື່ສານແບບສອງສົ້ນແບບຈິງຈັງ ກັບບັນດາຜູ້ມີສ່ວນຮ່ວມເຫຼົ່ານີ້ ກ່ຽວກັບຄວາມສ່ຽງ ແລະຜົນປະໂຫຍດຂອງໂຄງການ. ແຜນການສະບັບນີ້ ຈະປະເມີນລະດັບຄວາມສົນໃຈ ແລະການສະໜັບສະໜູນ ຂອງຜູ້ມີສ່ວນຮ່ວມ ສຳລັບໂຄງການ ແລະພິຈາລະນາທັດສະນະ ຂອງຜູ້ມີສ່ວນຮ່ວມ ໃນການອອກແບບ ແລະບໍລິຫານຜົນກະທົບດ້ານສິ່ງແວດລ້ອມ ແລະສັງຄົມ ທີ່ອາດເກີດຂຶ້ນ ຂອງໂຄງການ, SEP ແມ່ນແນໃສ່ສົ່ງເສີມການເຮັດວຽກຮ່ວມກັນຢ່າງມີປະສິດທິຜົນ, ຈິງຈັງ ແລະແບບມີສ່ວນຮ່ວມຂອງທຸກຄົນ ກັບຜູ້ມີສ່ວນຮ່ວມ ລວມທັງ ໄວລຸ້ນ ຈາກຊຸມຊົນຊົນນະບົດ ແລະຊົນເຜົ່າຕ່າງໆ, ກ່ຽວກັບຂໍ້ມູນຂ່າວສານຕ່າງໆ ທີ່ອາດເປັນຜົນປະໂຫຍດແກ່ເຂົາເຈົ້າ ພ້ອມທັງ ບັນຫາຕ່າງໆ ທີ່ອາດກະທົບຕໍ່ເຂົາເຈົ້າ. SEP ສະບັບນີ້ ຈະຮັບປະກັນ ວ່າມີການສື່ສານ ແລະເຜີຍແຜ່ ກ່ຽວກັບຂໍ້ມູນຂ່າວສານຂອງໂຄງການ ກ່ຽວກັບຄວາມສ່ຽງ ທາງສິ່ງແວດລ້ອມ ແລະສັງຄົມ ໃຫ້ແກ່ທຸກພາກສ່ວນກ່ຽວຂ້ອງ ຢ່າງທັນການ, ແບບເຂົ້າໃຈໄດ້ງ່າຍ, ເຂົ້າເຖິງໄດ້ງ່າຍ ແລະແທດເໝາະທາງວັດທະນະທຳ.

## 3. ລາຍລະອຽດຂອງໂຄງການ

## 4. ການຈັດຕັ້ງປະຕິບັດໂຄງການ

---

[1] ESS 1: Assessment and Management of Environmental and Social Risks and Impacts; ESS 2: Labor and Working Conditions; ESS 3: Resource Efficiency and Pollution Prevention and Management; ESS 4: Community Health and Safety; ESS 5: Land Acquisition, Restrictions on Land Use, and Involuntary Resettlement; ESS 6: Biodiversity Conservation and Sustainable Management of Living Natural Resources; ESS 7: Indigenous Peoples/Sub-Saharan African Historically Underserved Traditional Local Communities; ESS 8: Cultural Heritage; ESS 9: Financial Intermediaries; ESS 10: Stakeholder Engagement and Information Disclosure.

# 5. ຂອບການຄຸ້ມຄອງ

## ຂອບການຄຸ້ມຄອງລະດັບຊາດ

ຂອບວຽກແຫ່ງຊາດປະກອບດ້ວຍ ຄໍາແນະນໍາສໍາລັບການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ ແລະ ການປຶກສາຫາລືຊຸມຊົນ. ຈໍານວນຂອງດໍາລັດ ແລະ ຄໍາແນະນໍາແມ່ນສະໜອງໃຫ້ໂດຍ ກະຊວງຊັບພະຍາກອນ ທໍາມະຊາດ ແລະ ສິ່ງແວດລ້ອມ (MoNRE) ເພື່ອຊ່ວຍເຫຼືອໃນການປະເມີນ ແລະ ການຄຸ້ມຄອງຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ. ຂອບວຽກທີ່ໄດ້ສ້າງຂຶ້ນໃນຂະນະນີ້ແມ່ນໄດ້ລະບຸໄວ້ໃນນີ້.

**ຂໍ້ຕົກລົງວ່າດ້ວຍການອະນຸມັດ ແລະ ປະຕິບັດບົດແນະນາ ກ່ຽວກັບການມີສ່ວນຮ່ວມຂອງລັດ ໃນຂະບວນການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມຂອງໂຄງການ 707/ MoNRE (05 ກຸມພາ 2013)**: ກ□ານົດຂະບວນການຕ່າງໆ ແລະ ໂອກາດໃຫ້ບັນດາຊຸມຊົນໄດ້ເຂົ້າຮ່ວມໃນການວາງແຜນ ແລະ ການຕັດສິນບັນຫາ ກ່ຽວກັບໂຄງການລົງທຶນ, ຍົກບັນຫາກ່ຽວກັບການຈັດຕັ້ງປະຕິບັດໂຄງການ ລວມທັງຂະບວນການໃນການແກ້ໄຂຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ທີ່ອາດເກີດຂຶ້ນ (ແລະ ດໍາເນີນການໃນລັກສະນະທີ່ເປັນທໍາ ແລະ ປັດສະຈາກຂໍ້ຂັດແຍ່ງ). ຂໍ້ຕົກລົງນີ້ໄດ້ລະບຸສອງຈຸດປະສົງຫຼັກ:

- ເພື່ອຮັບປະກັນການຈັດຕັ້ງປະຕິບັດໂຄງການໃຫ້ເປັນໄປຕາມກົດລະບຽບ, ໃຫ້ໂປ່ງໃສ ແລະ ໃຫ້ທຸກຄົນມີສ່ວນຮ່ວມ (ໂດຍສະເພາະຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ)
- ເພື່ອຮັບປະກັນຜູ້ໄດ້ຮັບຜົນກະທົບໄດ້ຮັບການເບິ່ງແຍງ ແລະ ການຕອບແທນທີ່ເປັນທໍາ ແລະ ເປັນເຫດເປັນຜົນ ຈາກຜົນກະທົບທີ່ເກີດຂຶ້ນຈາກໂຄງການ.

**ຄໍາແນະນໍາຂອງລັດຖະມົນຕີວ່າດ້ວຍການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ສໍາລັບໂຄງການ ແລະ ກິດຈະກໍາການລົງທຶນ ເລກທີ 8030/MoNRE (17 ທັນວາ 2013)**: ມາດຕາ 2.14 ວ່າດ້ວຍການລົງທຶນຂອງລັດຂອງໂຄງການ ແລະ ມາດຕາ 2.15 ວ່າດ້ວຍຂະບວນການລົງທຶນຂອງລັດ ໃຫ້ຄໍາແນະນໍາກ່ຽວກັບວິທີການທີ່ ບຸກຄົນໄດ້ຮັບຜົນກະທົບຈາກໂຄງການ ((PAP) ແລະ ຜູ້ມີສ່ວນຮ່ວມອື່ນໆ ສາມາດເຂົ້າຮ່ວມ ແລະ ໄດ້ຮັບຂໍ້ມູນກ່ຽວກັບແຜນພັດທະນາໂຄງການ ແລະ ກິດຈະກໍາການລົງທຶນ. ໂຄງການມີພັນທະໃນການຮ່ວມມື ແລະ ສະໜອງຂໍ້ມູນກ່ຽວກັບສະຖານະພາບສິ່ງແວດລ້ອມ ດ້ານແວດລ້ອມສັງຄົມທ້ອງຖິ່ນ. ຕ້ອງລາຍງານຕໍ່ບັນດາຜູມີສ່ວນຮ່ວມ ກ່ຽວກັບຄວາມຄືບໜ້າຂອງການຄຸ້ມຄອງ ແລະ ມາດຕະການໃນການຕິດຕາມທາງດ້ານສິ່ງແວດລ້ອມ ແລະ ດ້ານສັງຄົມ ຢູ່ໃນເຂດທ້ອງຖິ່ນ ແລະ ສະຖານທີ່ໃກ້ຄຽງ.

**ກົດໝາຍທີ່ພົວພັນກັບການແກ້ໄຂຄໍາຮ້ອງທຸກ ເລກທີ 012/ສພຊ (2015)**: ກໍານົດຈຸດປະສົງ, ຫຼັກການ, ແລະ ຂະບວນການ ໃນການນໍາໃຊ້ ແລະ ຈັດການກັບປະເພດຕ່າງໆຂອງຄໍາຮ້ອງທຸກ, ຄໍາຮ້ອງທຸກ (ເປັນກຸ່ມ) ແລະ ການຮ້ອງຮຽນ ທີ່ອາດຍົກຂຶ້ນມາໂດຍພົນລະເມືອງ. ບົດແນະນໍາ ແມ່ນແນະນໍາໃຫ້ ການຮ້ອງຮຽນ ແລະ ຄໍາຮ້ອງທຸກ (ເປັນກຸ່ມ) ທັງໝົດຖືກເອົາເຂົ້າສໍານວນໄວ້ໂດຍອໍານາດການປົກຄອງຂອງເຂົາເຈົ້າ ຢູ່ລະດັບທ້ອງຖິ່ນຂຶ້ນຫາລະດັບຊາດ.

**ດໍາລັດຂອງລັດຖະບານ ວ່າດ້ວຍ ຊົນເຜົ່າ ເລກທີ 207/ລບ (20 ມີນາ 2020)**: ມາດຕາ 17 ວ່າດ້ວຍການເຜີຍແຜ່ຂໍ້ມູນຂ່າວສານ, ບົດແນະນໍາ, ນະໂຍບາຍ, ກົດໝາຍ ແລະ ກົດລະບຽບ ໃຫ້ກັບປະຊາຊົນລາວບັນດາເຜົ່າ, ຂໍ້ 1, ຮຽກຮ້ອງວ່າຂໍ້ມູນຂ່າວສານຖືກສະແດງອອກໂດຍຜ່ານທາງຜູ້ແປພາສາ, ໜັງສືພິມ ແລະ ອຸປະກອນດີຈີຕອນ ຫຼື ເອເລັກໂຕຣນິກ. ຂໍ້ 2 ຮຽກຮ້ອງວ່າການຂະຫຍາຍຕົວຂອງເຄືອຄ່າຍການສືສານ ແລະ ສື່ມວນຊົນ ໄປທົ່ວປະເທດ ໃຫ້ເຂົ້າເຖິງໄດ້ໂດຍທຸກຊົນເຜົ່າ. ຂໍ້ 3 ຮຽກຮ້ອງໃຫ້ມີການພັດທະນາ ແລະ ການປັບປຸງຂອງລະບົບການສື່ສານໃນທົ່ວປະເທດ, ໂດຍມີຈຸດປະສົງໃນການປັບປຸງຄຸນນະພາບ ແລະ ການຝຶກອົບຮົມ ເພື່ອເພີ່ມການເຂົ້າເຖິງຂໍ້ມູນຂ່າວສານຂອງບັນດາຊົນເຜົ່າ. ມາດຕາ 18, ການເຂົ້າເຖິງຂໍ້ມູນຂ່າວສານ ແລະ ຄວາມຍຸດຕິທໍາທາງດ້ານກົດໝາຍ, ຂໍ້ 2, ສົ່ງເສີມການຊ່ວຍເຫຼືອຊົນເຜົ່າຜູ້ທີ່ດ້ອຍໂອກາດ, ມີຄວາມສ່ຽງ ແລະ ພິການ ໃຫ້ເຂົ້າເຖິງຂໍ້ມູນຂ່າວສານ ແລະ ຄວາມຍຸດຕິທໍາທາງດ້ານກົດໝາຍ - ບັນດາຊົນເຜົ່າສາມາດດໍາເນີນການຕາມຂັ້ນຕອນຍຸດຕິທໍາ ແລະ ການປະກອບເອກະສານ ແລະ ການບໍລິຫານທາງການ ໂດຍບໍ່ໄດ້ເສຍຄ່າທໍານຽມ.

**ບົດແນະນໍາດ້ານການປຶກສາຫາລືກັບຊົນເຜົ່າ (2012):** ອອກໂດຍແນວລາວສ້າງຊາດ, ສະໜອງບົດແນະນໍາສໍາລັບການປຶກສາຫາລືກັບຊົນເຜົ່າ. ແມ່ນເລັງໃສ່ເພື່ອຮັບປະກັນຊົນເຜົ່າທັງໝົດ ຜູ້ທີ່ໄດ້ຮັບປະໂຫຍດຈາກ ຫຼື ໄດ້ຮັບຜົນກະທົບທາງລົບຈາກໂຄງການພັດທະນາ, ໂດຍບໍ່ຄໍານຶງເຖິງ ທີ່ມາຂອງການສະໜອງທຶນ, ແມ່ນມີສ່ວນຮ່ວມຢ່າງສົມບູນໃນການປຶກສາຫາລືຢ່າງຈິງຈັງໃນທຸກໆຂັ້ນຕອນ - ແຕ່ການກະກຽມໂຄງການຈົນເຖິງການຈັດຕັ້ງປະຕິບັດ. ບົດແນະນໍາຍັງໄດ້ເລັງໃສ່ເພື່ອຮັບປະກັນວ່າ ຊົນເຜົ່າທີ່ອາດໄດ້ຮັບຜົນກະທົບ ໄດ້ຮັບຮູ້ຂໍ້ມູນຢ່າງຄົບຖ້ວນກ່ຽວກັບຈຸດປະສົງໂຄງການ, ລວມທັງຜົນກະທົບໃນທາງບວກ ແລະ ທາງລົບຕໍ່ການດໍາລົງຊີວິດ ແລະ ສະພາບແວດລ້ອມຂອງເຂົາເຈົ້າ. ບັນດາຊົນເຜົ່າຕ້ອງໄດ້ຮັບໂອກາດ ເພື່ອສະແດງອອກເຖິງຄວາມກັງວົນຂອງເຂົາເຈົ້າ. ບົດແນະນໍາໄດ້ໃຫ້ຫຼັກການ ແລະ ຂະບວນການເພື່ອຊ່ວຍເຫຼືອດ້ານການອໍານວຍຄວາມສະດວກ ການປຶກສາຫາລືຢ່າງຈິງຈັງ ເພື່ອໃຫ້ໄດ້ຮັບຄວາມຍິນຍອມທີ່ບໍ່ເສຍຄ່າ, ລ່ວງໜ້າ ແລະ ຮັບຮູ້ຂໍ້ມູນ ຂອງຊົນເຜົ່າທັງໝົດ ທີ່ຖືກກະທົບຈາກໂຄງການພັດທະນາ ທີ່ມີລັກສະນະອ່ອນໄຫວທາງວັດທະນະທໍາ.

## ຂໍ້ກໍານົດ ຂອງທະນາຄານໂລກ ສໍາລັບການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ

ມາດຕະຖານທາງສິ່ງແວດລ້ອມ ແລະສັງຄົມ ຂອງທະນາຄານໂລກ (ESSs) ຮັບຮູ້ເຖິງຄວາມສ□າຄັນຂອງການເຮັດວຽກທີ່ເປີດເຜີຍ ແລະ ໂປ່ງໃສ ລະຫວ່າງຜູ້ກູ້ຢືມ ແລະ ຜູ້ມີສ່ວນຮ່ວມຂອງໂຄງການ. ນີ້ແມ່ນອົງປະກອບອັນສໍາຄັນຂອງການປະຕິບັດສາກົນທີ່ດີ. ທີ່ໄດ້ຖະແຫຼງວ່າ ການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມທີ່ມີປະສິດທິຜົນ ສາມາດປັບປຸງຄວາມຍືນຍົງທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການ, ເສີມຂະຫຍາຍການຍອມຮັບໂຄງການ ແລະ ສ້າງການປະກອບສ່ວນອັນສໍາຄັນໃຫ້ກັບການອອກແບບ ແລະ ການຈັດຕັ້ງປະຕິບັດໂຄງການທີ່ໄດ້ຮັບຜົນສໍາເລັດ. ESS 10: ການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ ແລະ ການເປີດເຜີຍຂໍ້ມູນຂ່າວສານ ຮຽກຮ້ອງວ່າໂຄງການ:

- ເຮັດວຽກຮ່ວມກັບຜູ້ມີສ່ວນຮ່ວມຕະຫຼອດຮອບວຽນອາຍຸໂຄງການ ແລະ ການເຮັດວຽກນັ້ນ ຕ້ອງແມ່ນແຕ່ຕົ້ນໆເທົ່າທີ່ເປັນໄປໄດ້ ໃນຂະບວນການພັດທະນາໂຄງການ ແລະ ໃນຂອບເວລາທີ່ເຮັດໃຫ້ມີການປຶກສາຫາລືຢ່າງຈິງຈັງ ກັບຜູ້ມີສ່ວນຮ່ວມດ້ານການອອກແບບໂຄງການ
- ສະໜອງຂໍ້ມູນຂ່າວສານທີ່ວ່ອງໄວ, ກ່ຽວຂ້ອງ, ເຂົ້າໃຈໄດ້ ແລະ ເຂົ້າເຖິງໄດ້ ໃຫ້ຜູ້ມີສ່ວນຮ່ວມ, ແລະ ປຶກສາຫາລືກັບເຂົາເຈົ້າໃນລັກສະນະທີ່ແທດເໝາະທາງວັດທະນະທໍາ, ເຊິ່ງປັດສະຈາກການຫຼອກລວງ, ການແຊກແຊງ, ການບີບບັງຄັບ, ການຈໍາແນກ ແລະ ການຂົ່ມຂູ່
- ຮັກສາ ແລະ ເຜີຍແຜ່ບັນທຶກເອກະສານຂອງການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ, ລວມທັງລາຍລະອຽດຂອງຜູ້ມີສ່ວນຮ່ວມທີ່ໄດ້ຮັບການປຶກສາຫາລື, ບົດສະຫຼຸບຂອງຄໍາຄິດເຫັນທີ່ໄດ້ຮັບ ແລະ ຄໍາອະທິບາຍໂດຍຍໍ້ກ່ຽວກັບ ແນວໃດຄໍາຄິດເຫັນຈຶ່ງຖືກພິຈາລະນາ, ຫຼື ເຫດຜົນອັນໃດຈຶ່ງບໍ່ຖືກພິຈາລະນາ.

ຂະບວນການຂອງການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ ຮຽກຮ້ອງໂດຍ ESSs ປະກອບດ້ວຍຕໍ່ໄປນີ້:

- ການກໍານົດຕົວ ແລະ ການວິເຄາະຜູ້ມີສ່ວນຮ່ວມ
- ການແຜນວາງເຮັດວຽກຮ່ວມກັນ ຫຼື ແນວໃດທີ່ ການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ ຈະເກີດຂຶ້ນ
- ການປຶກສາຫາລືກັບຜູ້ມີສ່ວນຮ່ວມດ້ານການເຜີຍແຜ່ຂໍ້ມູນຂ່າວສານ
- ການແກ້ໄຂ ແລະ ການຕອບໂຕ້ຕໍ່ຄໍາຮ້ອງທຸກ.

# 6. ການກໍານົດຕົວ ແລະ ການວິເຄາະຜູ້ມີສ່ວນຮ່ວມ

ມີບັນດາອົງການຈັດຕັ້ງ ແລະ ຜູ້ທີ່ກ່ຽວຂ້ອງຈໍານວນຫຼາກຫຼາຍ ທີ່ເຂົ້າຮ່ວມໃນການສົ່ງເສີມ ແລະ ປັບປຸງບັນຫາຕ່າງໆພົວພັນກັບການເສີມສ້າງທັກສະ ແລະ ໂອກາດໃນການເຮັດວຽກ, ໂດຍສະເພາະການແກ້ໄຂບັນຫາຊາວໜຸ່ມ ແລະ ຜູ້ປະກອບການໄວໜຸ່ມ. ໃນຂະນະທີ່ຜູ້ມີສ່ວນຮ່ວມ ແລະ ຜູ້ກ່ຽວຂ້ອງເຫຼົ່ານີ້ ມີຈຸດປະສົງອັນດຽວກັນ, ເຂົາເຈົ້າກໍ່ມາຈາກພື້ນຖານທີ່ແຕກຕ່າງກັນ. ຕາຕະລາງ 1 ເຖິງ ຕາຕະລາງ 6 ໃນພາກນີ້ ແມ່ນກໍານົດຕົວ ແລະ ສະຫຼຸບຜູ້ມີສ່ວນຮ່ວມຕົ້ນຕໍ່ ແລະ ຈັດປະເພດເຂົາເຈົ້າເປັນກຸ່ມ

ອີງໃສ່ພື້ນຖານ ແລະ ທັດສະນະຂອງວຽກ ຂອງຜູ້ກ່ຽວ ແລະ ສະໜອງການວິເຄາະຂອງການເປັນສ່ວນຮ່ວມ ໃນການປັບປຸງການສຶກສາ ແລະ ທັກສະ ໃນປະຈຸບັນຂອງຕົນ.

**ຕາຕະລາງ 1 ການກໍານົດຕົວຜູ້ມີສ່ວນຮ່ວມ: ການຊ່ວຍເຫຼືອສາກົນເພື່ອການພັດທະນາດ້ານຄວາມຮູ້, ທັກສະ, ການສຶກສາ**

| **ຜູ້ມີສ່ວນຮ່ວມ** | **ຄວາມສອດຄ່ອງຂອງໂຄງການ: ການຊ່ວຍເຫຼືອສາກົນເພື່ອການພັດທະນາດ້ານຄວາມຮູ້, ທັກສະ, ການສຶກສາ** |
|---|---|
| **ກຸ່ມທະນາຄານໂລກ** | ໂຄງການປັບປຸງການສຶກສາ ແລະ ທັກສະທີ່ຊ່ວຍເຫຼືອໂດຍ WBG ໃນຂະນະນີ້ແມ່ນ ECE and GPE II. ໂຄງການ ECE ໃນປະຈຸບັນນີ້ ແມ່ນຊ່ວຍເຫຼືອການຂະຫຍາຍຕົວຂອງການບໍລິການ ECE ທີ່ມີຄຸນນະພາບ, ກັບຈຸດປະສົງເພື່ອການປັບປຸງການພັດທະນາໂດຍລວມ, ຄວາມພ້ອມຂອງໂຮງຮຽນ ແລະ ຜົນໄດ້ຮັບທາງການຮຽນຮູ້ຂອງເດັກນ້ອຍຢູ່ໃນຊຸມຊົນທີ່ດ້ອຍໂອກາດ. ໂຄງການນີ້ໄດ້ສົ່ງເສີມ ແລະ ສ້າງຕັ້ງການຮ່ວມມືລະຫວ່າງບັນດາພະແນກການຂອງລັດຖະບານ, ໂດຍສະເພາະທີ່ພົວພັນກັບສຸຂະພາບ ແລະ ໂພຊະນາການ; ຄູ່ຮ່ວມພັດທະນາອື່ນໆ (ໂຄງການອາຫານໂລກ (WFP), ກອງທຶນເດັກຂອງສະຫະປະຊາຊາດ (UNICEF), ອົງການຊ່ວຍເຫຼືອເດັກ, ອົງການແພລນສາກົນ); ແລະ ບັນດາຊຸມຊົນ, ໂດຍທົ່ວໄປລວມທັງການມີສ່ວນຮ່ວມຂອງ VEDCs ແລະ ພາກເອກະຊົນ. ການແຊກແຊງຂອງ ECE ໄດ້ສະແດງໃຫ້ເຫັນການຫຼຸດລົງຂອງການອອກໂຮງຮຽນ ແລະ ອັດຕາການຄ້າງຫ້ອງ, ການເພີ່ມຂຶ້ນຂອງອັດຕາການຈົບຮຽນໃນຊັ້ນມັດທະຍົມສຶກສາປາຍ, ແລະ ປັບປຸງຜະລິດຕະພາບຂອງແຮງງານ ແລະ ຄວາມສາມາດໃນການໄດ້ຮັບຄ່າຈ້າງທີ່ສູງຂຶ້ນ. |
| **ອົງການຮ່ວມມືສາກົນຍີ່ປຸ່ນ (JICA):** | JICA ກໍາລັງເຮັດວຽກໂດຍມີການຮ່ວມມືກັບລັດຖະບານຂອງ ສປປ ລາວ ໃນສີ່ຂອບເຂດບູລິມະສິດ:<br>• ການພັດທະນາໂຄງລ່າງທາງດ້ານເສດຖະກິດ ແລະ ສັງຄົມ<br>• ການພັດທະນາກະສິກໍາ ແລະ ການປົກປັກຮັກສາປ່າໄມ້<br>• ການພັດທະນາສະພາບແວດລ້ອມການສຶກສາ ແລະ ການຝຶກອົບຮົມຊັບພະຍາກອນມະນຸດ<br>• ການປັບປຸງການບໍລິການດ້ານການດູແລສຸຂະພາບ<br><br>ເປັນເວລາຫຼາຍປີ, JICA ໄດ້ຊ່ວຍເຫຼືອການພັດທະນາຂະແໜງສຶກສາ ມາຕະຫຼອດຢ່າງຫ້າວຫັນ, ລວມທັງການກໍ່ສ້າງ ແລະ ການປັບປຸງອາຄານຮຽນຂອງໂຮງຮຽນປະຖົມ ແລະ ມັດທະຍົມ. ສໍາລັບໂຮງຮຽນເຕັກນິກ/ວິຊາຊີບ ແລະ ການສຶກສາຊັ້ນສູງ, JICA ມີປະຫວັດອັນຍາວນານໃນການຊ່ວຍເຫຼືອຄົນໄວໜຸ່ມ ໂດຍຜ່ານໂຄງການທຶນການສຶກສາ ບໍ່ວ່າຈະເປັນການສົ່ງເຂົາເຈົ້າເຂົ້າໂຮງຮຽນເຕັກນິກທ້ອງຖິ່ນຢູ່ໃນ ສປປ ລາວ ແລະ/ຫຼື ສົ່ງເຂົາເຈົ້າໄປປະເທດຍີ່ປຸ່ນ. |
| **ກະຊວງຕ່າງປະເທດ ແລະ ການຄ້າ ອົດສະຕາລີ (DFAT) ແລະ ຄຸນນະພາບການສຶກສາພື້ນ ແລະ ການເຂົ້າເຖິງຢູ່ໃນ ສປປ** | ກະຊວງຕ່າງປະເທດ ແລະ ການຄ້າ ອົດສະຕາລີ (DFAT) ກໍ່ມີປະຫວັດອັນຍາວນານເຊັ່ນກັນ ໃນການຊ່ວຍເຫຼືອການພັດທະນາຄວາມຮູ້ ແລະ ທັກສະ ໂດຍຜ່ານການສຶກສາຊັ້ນສູງ ແລະ ການສ້າງຄວາມເຂັ້ມແຂງດ້ານອາຊີບວິຊາສະເພາະໃຫ້ກັບຜູ້ທີ່ມີວຽກເຮັດຢູ່ແລ້ວ ເຊັ່ນດຽວກັບການປັບປຸງທັກສະຄວາມເປັນຜູ້ນໍາຂອງຜູ້ທີ່ຢູ່ຕໍ່າແໜ່ງອາວຸໂຍ. ໂດຍຜ່ານໂຄງການທຶນການສຶກສາ, DFAT ສືບຕໍ່ອຸປະຖ□າ ນັກສຶກສາຊາວໜຸ່ມ, ແນ່ໃສ່ຜູ້ຍິງ, ຊົນນະບົດ ແລະ ຊົນເຜົ່າ ໂດຍຜ່ານມະຫາວິທະຍາໄລທ້ອງຖິ່ນ: ມະຫາວິທະຍາໄລຈໍາປາສັກ,ມະຫາວິທະຍາໄລເຈົ້າອານຸວົງ, ມະຫາວິທະຍາໄລຫຼວງພະບາງ ແລະ ມະຫາວິທະຍາໄລແຫ່ງຊາດ ນະຄອນຫຼວງວຽງຈັນ. |

| **ຜູ້ມີສ່ວນຮ່ວມ** | **ຄວາມສອດຄ່ອງຂອງໂຄງການ: ການຊ່ວຍເຫຼືອສາກົນເພື່ອການພັດທະນາດ້ານຄວາມຮູ້, ທັກສະ, ການສຶກສາ** |
|---|---|
| **ລາວ (BEQUAL))** | ໂດຍການນຳພາຂອງລັດຖະບານແຫ່ງ ສປປ ລາວ, MoES, DFAT ແລະ ສະຫະພາບເອີລົບ (EU), BEQUAL ແມ່ນຊ່ວຍເຫຼືອໂດຍກົງບັນດາບູລິມະສິດຂອງລັດຖະບານແຫ່ງ ສປປ ລາວ ເຊິ່ງໄດ້ອະທິບາຍໄວ້ໃນແຜນພັດທະນາຂະແໜງສຶກສາ ແລະ ສອດຄ່ອງກັບທິດທາງຍຸດທະສາດທີ່ໄດ້ວາງອອກ ໃນຍຸດທະສາດວຽກງານການສຶກສາ 2013-2018 ຂອງອົດສະຕາລີ. ໄລຍະ 1 ຈະເລີ່ມແຕ່ 2015 ເຖິງ 2020 ແລະ ໄລຍະ 2, ໃນຂະນະທີ່ຍັງຢູ່ພາຍໃຕ້ການພັດທະນາ, ຄາດວ່າຈະເລີ່ມຈາກ 2021 ເຖິງ 2025. ໂດຍຜ່ານ BEQUAL, ຄາດຄະເນວ່າ ມີເດັກປະມານ 740,000 ຄົນ ຈະໄດ້ຮັບການສຶກສາຢ່າງມີຄຸນນະພາບທີ່ດີຂຶ້ນ, ໂດຍຈຸດສຸມສະເພາະແມ່ນເດັກຜູ້ທີ່ຕາມປະເພນີປະສົບກັບຜົນໄດ້ຮັບດ້ານການສຶກສາທີ່ຕໍ່າກ່ວາ, ເຊັ່ນ ເດັກຍິງ, ເດັກທີ່ພິການ ແລະ ເດັກທີ່ມາຈາກຊຸມຊົນຫ່າງໄກສອກຫຼີກ.<br><br>BEQUAL ໃຫ້ບູລິມະສິດ 66 ເມືອງທີ່ດ້ອຍໂອກາດທີ່ສຸດດ້ານການສຶກສາ ເພື່ອ:<br>• ເພີ່ມການເຂົ້າຮ່ວມຂອງນັກຮຽນ<br>• ສົ່ງເສີມຄວາມພ້ອມຂອງການສິດສອນທີ່ມີຄຸນນະພາບ (ເຊັ່ນ ດ້ວຍການສະໜອງ ການພັດທະນາວິຊາສະເພາະໃຫ້ບັນດາຄູທີ່ມີຢູ່ຂອງໂຮງຮຽນປະຖົມ ແລະ ຜູ້ອົບຮົມຄູ, ແລະ ການຝຶກອົບຮົມຜູ້ຊາຍ ແລະ ແມ່ຍິງຊົນເຜົ່າ ຈຳນວນ 520 ຄົນ ໃຫ້ກາຍເປັນຄູ)<br>• ປັບປຸງສະພາບແວດລ້ອມຂອງການຮຽນ (ເຊັ່ນ ດ້ວຍການສະໜອງການສິດສອນ ແລະ ອຸປະກອນການຮຽນທີ່ມີຄຸນນຸພາບ ແລະ ຍົກລະດັບພື້ນຖານໂຄງລ່າງຂອງໂຮງຮຽນ) |
| **Partnership to Strengthen the Education System (PSES):**<br><br>**(ການຮ່ວມງານເພື່ອເຮັດໃຫ້ລະບົບການສຶກສາເຂັ້ມແຂງຂຶ້ນ)** | ເປັນການສົມທົບທຶນໂດຍ EU ແລະ UNICEF, ໂຄງການນີ້ແນ່ໃສ່ເພື່ອຊ່ວຍເຫຼືອຈຸດປະສົງຂອງແຜນພັດທະນາຂະແໜງສຶກສາ, ໂດຍອີງຕາມແຜນພັດທະນາດ້ານເສດຖະກິດ-ສັງຄົມແຫ່ງຊາດ ແລະ ເປົ້າໝາຍການພັດທະນາ 4 ທາງດ້ານຄຸນນະພາບຂອງການສຶກສາ. ຖືກແບບອອກມາເພື່ອ ເສີມແຜນງານດ້ານການຊ່ວຍເຫຼືອງົບປະມານຂອງ EU ທີ່ສຸມໃສ່ການປັບປຸງຄຸນນະພາບການສຶກສາພື້ນຖານ ສ□າລັບເດັກທີ່ດ້ອຍໂອກາດ, ແລະ ການປະຕິຮູບໃນການຄຸ້ມຄອງຄູອາຈານ, ການວາງແຜນສຶກສາ ແລະ ການສະໜອງທຶນ. PSES ຖືກອອກແບບມາເພື່ອເສີມການຊ່ວຍເຫຼືອຂະແໜງສຶກສາໂດຍຄູ່ຮ່ວມພັດທະນາທີ່ກ□າລັງດໍາເນີນຢູ່, ລວມທັງອົງການຈັດຕັ້ງສາກົນ ແລະ ຮ່ວມມືສອງຝ່າຍ ແລະ CSOs. ແຜນງານດັ່ງກ່າວແມ່ນສຸມໃສ່:<br>• ສ້າງຄວາມເຂັ້ມແຂງໃຫ້ການປົກຄອງ, ການວາງແຜນ ແລະ ການເຮັດງົບປະມານດ້ານຂະແໜງສຶກສາ<br>• ຍົກລະດັບການຄຸ້ມຄອງ ແລະ ຄຸນນະພາບຄູອາຈານ<br>• ສົ່ງເສີມການວິເຄາະຂະແໜງການທີ່ອີງໃສ່ຫຼັກຖານຕົວຈິງ ແລະ ການປຶກສາຫາລືດ້ານນະໂຍບາຍ.<br><br>PSES ເຮັດວຽກຜ່ານ CSOs ເພື່ອສ້າງຄວາມເຂັ້ມແຂງດ້ານການວາງແຜນ ແລະ ການຈັດຕັ້ງປະຕິບັດໂດຍອີງໃສ່ນະໂຍບາຍ ຢູ່ຂັ້ນແຂວງ, ເມືອງ ແລະ ບ້ານ, ໂດຍສະເພາະ 40 ເມືອງທຸກຍາກບູລິມະສິດ. |
| **Room to Read Laos Literacy** | ພັດທະນາທັກສະການຮູ້ໜັງສື ແລະ ນິໄສການອ່ານ, ໂດຍສະເພາະເພື່ອຊ່ວຍເຫຼືອເດັກຍິງໃຫ້ຈົບໂຮງຮຽນມັດທະຍົມ, ແລະ ເຮັດວຽກກັບຜູ້ມີສ່ວນພາກລັດ ເພື່ອສົ່ງເສີມການສຶກສາຂອງເດັກຍິງ. ລູມ |

| ຜູ້ມີສ່ວນຮ່ວມ | ຄວາມສອດຄ່ອງຂອງໂຄງການ: ການຊ່ວຍເຫຼືອສາກົນເພື່ອການພັດທະນາດ້ານຄວາມຮູ້, ທັກສະ, ການສຶກສາ |
|---|---|
| **Program:**<br><br>**(ແຜນງານປະຊາສຶກສາຂອງອົງການລູມທູຣິດ** | ທູຣິດເຮັດວຽກຢູ່ໃນໂຮງຮຽນຂອງລັດ ຢູ່ແຂວງສາລະວັນ, ສະຫວັນນະເຂດ, ວຽງຈັນ, ໄຊຍະບູລີ ແລະ ອຸດົມໄຊ ເພື່ອຊ່ວຍລັດຖະບານແກ້ໄຂອຸປະສັກ ແລະ ປັບປຸງໂອກາດດ້ານການສຶກສາໃຫ້ແກ່ເດັກ. ຍັງໄດ້ສ້າງຕັ້ງຫໍສະໝຸດໂຮງຮຽນ ແລະ ຫ້ອງອ່ານໜັງສືໃນບາງໂຮງຮຽນ. ລູມທູຣິດປະເທດລາວ ອາດເປັນແຫຼ່ງສໍາຄັນຂອງການເຊື່ອມຕໍ່ເພື່ອດຶງດູດນັກຮຽນໜຸ່ມນ້ອຍຜູ້ທີ່ບໍ່ວ່າໄດ້ອອກຮຽນແລ້ວ ແລະ/ຫຼື ບໍ່ສືບຕໍ່ການສຶກສາຊັ້ນສູງ ແລະ ບໍ່ສາມາດຊອກວຽກເຮັດ. |

**ຕາຕະລາງ 2 ການກໍານົດຕົວຜູ້ມີສ່ວນຮ່ວມ: ການຊ່ວຍເຫຼືອສາກົນເພື່ອການພັດທະນາຊາວໜຸ່ມ ແລະ ການປົກປ້ອງເດັກ**

| ຜູ້ມີສ່ວນຮ່ວມ | ຄວາມສອດຄ່ອງຂອງໂຄງການ: ການຊ່ວຍເຫຼືອສາກົນເພື່ອການພັດທະນາຊາວໜຸ່ມ ແລະ ການປົກປ້ອງເດັກ |
|---|---|
| **ອົງການ UNICEF** | ມີປະຫວັດອັນຍາວນານໃນການຊ່ວຍເຫຼືອລັດຖະບານແຫ່ງ ສປປ ລາວ ໃນຂົງເຂດຂອງສາທາລະນະສຸກ, ໂພສະນາການ, ນໍ້າ ແລະ ສຸຂາພິບານ, ການປົກປ້ອງເດັກ, ການສຶກສາ ແລະ ການປະກອບສ່ວນໃນສັງຄົມ. UNICEF ແມ່ນໜຶ່ງໃນຜູ້ມີສ່ວນຮ່ວມສ□າຄັນທີ່ເຮັດວຽກຮ່ວມມືກັບ MoES ແລະ ອົງການຈັດຕັ້ງລັດດ້ານສາທະລະນະສຸກ ແລະ ການສຶກສາຂອງນັກຮຽນໄວໜຸ່ມ, ຊ່ວຍເຫຼືອບາງໂຄງການທີ່ຕິດພັນກັບໄວລຸ້ນ, ໂດຍສະເພາະໃນຂົງເຂດດ້ານສາທາລະນະສຸກຂອງແມ່ຍິງ ແລະ ເດັກ, ການແຕ່ງດອງໄວ ແລະ ການຄ້າມະນຸດຂອງແມ່ຍິງ ແລະ ເດັກ. UNICEF ເຮັດວຽກເພື່ອສົ່ງເສີມ ແລະ ປົກປ້ອງສິດຂອງເດັກ ແລະ ແມ່ຍິງໃນ ສປປ ລາວ. ໃນປະຈຸບັນ, UNICEF ໄດ້ສະໜອງໂຄງການສ້າງຄວາມອາດສາມາດໃຫ້ພະນັກງານຮັບຜິດຊອບດ້ານກົດໝາຍຢູ່ໃນ ສປປ ລາວ (ພາຍໃຕ້ກະຊວງຍຸດຕິທໍາ) ເພື່ອສະໜອງຄວາມຊ່ວຍເຫຼືອໃຫ້ຜູ້ເຄາະຮ້າຍເດັກຈາກຄວາມຮຸນແຮງ ແລະ ຂັດກັບກົດໝາຍ. |
| **ອົງການ GIZ, the German Federal Ministry for Economic Cooperation and Development (BMZ)**<br><br>**(ກະຊວງເພື່ອການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ເຢຍລະມັນ)** | ກະຊວງເພື່ອການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ເຢຍລະມັນ (BMZ) ແມ່ນຊ່ວຍເຫຼືອການສຶກສາວິຊາຊີບເຕັກນິກແຫ່ງຊາດ ແລະ ລະບົບການຝຶກອົບຮົມເພື່ອສະໜອງທັກສະ ທີ່ຕ້ອງການໂດຍຕະຫຼາດແຮງງານລາວ ໃຫ້ກັບຜູ້ຈົບໂຮງຮຽນໄວໜຸ່ມ. ການຊ່ວຍເຫຼືອດັ່ງກ່າວນີ້ແມ່ນສະໜອງຜ່ານ ຫຼັກສູດການຝຶກອົບຮົມແບບປະສົມປະສານສໍາລັບວິຊາສະເພາະທີ່ກ່ຽວຂ້ອງ ຖືກສ້າງຕັ້ງຂຶ້ນຢູ່ໃນສູນກາງທີ່ມີການພັດທະນາເສດຖະກິດທີ່ອອນໄວໃນ ສປປ ລາວ ເພື່ອຕອບສະໜອງຄວາມຕ້ອງການທີ່ດີກ່າວຂອງຕະຫຼາດແຮງງານໃນປະເທດ. |

**ຕາຕະລາງ 3 ການກໍານົດຕົວຜູ້ມີສ່ວນຮ່ວມ: ການພັດທະນາແມ່ຍິງ ແລະ ຊາວໜຸ່ມ ແລະ ການປົກປ້ອງແມ່ຍິງ ແລະ ເດັກ ແຫ່ງຊາດ**

| ຜູ້ມີສ່ວນຮ່ວມ | ຄວາມກ່ຽວຂ້ອງຂອງໂຄງການ: ການພັດທະນາແມ່ຍິງ ແລະ ຊາວໜຸ່ມ ແລະ ການປົກປ້ອງເດັກ ແຫ່ງຊາດ |
|---|---|
| **ສະຫະພັນ ແມ່ຍິງສູນກາງ (LWU)** | ແມ່ນອົງການຈັດຕັ້ງມະຫາຊົນທີ່ຖືກມອບໝາຍໃຫ້ຍົກລະດັບຄວາມສາມາດຂອງແມ່ຍິງເພື່ອການພັດທະນາດ້ວຍຕົວເອງ ແລະ ສົ່ງເສີມບົດບາດຂອງແມ່ຍິງຢູ່ໃນສັງຄົມ ເພື່ອຈັດຕັ້ງປະຕິບັດນະໂຍບາຍ ແລະ ແຜນການທີ່ກ່ຽວຂ້ອງ. LWU ໄດ້ຖືກມອບໝາຍໃຫ້ສະໜອງກິດຈະກ□າປ້ອງກັນດ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ; ປົກປ້ອງ ແລະ ຊ່ວຍເຫຼືອຜູ້ເຄາະຮ້າຍດ້ວຍການສະເໜີການໃຫ້ຄໍາປຶກສາ, ການດູແລສຸຂະພາບ, ການຊ່ວຍເຫຼືອດ້ານກົດໝາຍໂດຍເສຍຄ່າໃຊ້ຈ່າຍ ແລະ ການປ້ອງກັນພະຍານຂອງຜູ້ເຄາະຮ້າຍ ໃນລະຫວ່າງການດໍາເນີນຄະດີ ໂດຍການສະໜອງບ່ອນພັກອາໃສຊົ່ວຄາວທີ່ປອດໄພສໍາລັບຜູ້ເຄາະຮ້າຍ, ການຝຶກອົບຮົມວິຊາຊີບ ແລະ ການເຊື່ອມໂຍງໂດຍຜ່ານການໃຫ້ຄໍາປຶກສາກັບແມ່ຍິງ ແລະ ເດັກ ແລະ ເຄືອຄ່າຍການປ້ອງກັນຢູ່ຂັ້ນສູນກາງ, ນະຄອນຫຼວງວຽງຈັນ, ແຂວງ, ເມືອງ ແລະ ຂັ້ນບ້ານ. |
| **ຄະນະສະມາຊິກ ສະພາເພດຍິງ, ໃນຖານະເປັນ ກອງເລຂາຄະນະ ກໍາມາທິການ** | ຖືກມອບໝາຍໃຫ້ຊ່ວຍໃນດ້ານຍຸດທະຍາດການຄົ້ນຄ້ວາ, ແຜນປະຕິບັດ, ກົດໝາຍ ແລະໂຄງການດ້ານຄວາມສະເໝີພາບຍິງຊາຍ; ຈັດຕັ້ງປະຕະບັດສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບແບບຂອງການຈໍາແນກຕໍ່ແມ່ຍິງ; ສົ່ງເສີມການໃຫ້ສິດແກ່ແມ່ຍິງໃນການຕັດສິນບັນຫາ; ແລະ ປະຕິບັດການຝຶກອົບຮົມ. ພ້ອມທັງສຸມໃສ່ການປັບປຸງການປະສານງານກັບອົງການຈັດຕັ້ງແຫ່ງຊາດ ແລະ ສາກົນ, ການຕິດຕາມ ແລະ ການລາຍງານ. ສະມາຊິກເພດຍິງຂອງສະພາແຫ່ງຊາດ ປະພຶດເປັນຜູ້ໃຫ້ຄໍາແນະນໍາແກ່ຄະນະປະຈໍາຂອງສະພາແຫ່ງຊາດ ແລະ ເບິ່ງແຍງການສົ່ງເສີມບົດບາດຍິງຊາຍ ແລະ ຄວາມພະຍາຍາມທາງດ້ານຄວາມກ້າວໜ້າຂອງແມ່ຍິງ ໃນລະດັບຊາດ. ຄະນະສະມາຊິກເພດຍິງເຮັດວຽກໃຫ້ສະມາຊິກສະພາເພດຍິງ ພາຍໃຕ້ການຄວບຄຸມຂອງຄະນະປະຈໍາຂອງສະພາແຫ່ງຊາດ. ໃຫ້ຄວາມຊ່ວຍເຫຼືອສະພາແຫ່ງຊາດໃນການເຊື່ອມບົດບາດຍິງຊາຍເຂົ້າໃນກົດໝາຍ; ກວດກາເບິ່ງການຈັດຕັ້ງປະຕິບັດຂອງລັດຖະທໍາມະນູນ ແລະ ກົດໝາຍ ແລະ ນະໂຍບາຍຕ່າງໆທີ່ພົວພັນກັບຄວາມສະເໝີພາບບົດບາດຍິງຊາຍ, ຄວາມກ້າວໜ້າຂອງແມ່ຍິງ ແລະ ສຸຂະພາບຂອງແມ່ ແລະ ເດັກ; ສົ່ງເສີມການພັດທະນາ; ແລະ ປ້ອງກັນສິດຜົນປະໂຫຍດຂອງແມ່ຍິງ ແລະ ເດັກ. |
| **ຄະນະກໍາມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ເດັກ (NCAWMC)** | ຊ່ວຍເຫຼືອລັດຖະບານດ້ານການຄົ້ນຄ້ວານະໂຍບາຍ ແລະ ຍຸດທະຍາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແລະ ປະສານງານການຈັດຕັ້ງປະຕິບັດນະໂຍບາຍ ດ້ານຄວາມສະເໝີພາບຍິງຊາຍ ແລະ ການລົບລ້າງການຈໍາແນກຕໍ່ແມ່ຍິງ ກັບຜູ້ມີສ່ວນຮ່ວມແຫ່ງຊາດ ແລະ ສາກົນ. |
| **ສູນກາງຊາວໜຸ່ມປະຕິວັດ ປະຊາຊົນລາວ** | ເປັນອົງການຈັດຕັ້ງມະຫາຊົນທີ່ເອົາໃຈໃສ່ດ້ານການລະດົມຄົນໄວໜຸ່ມໃນທົ່ວປະເທດດ້ວຍທັດສະນະເພື່ອປະກອບສ່ວນເຂົ້າໃນການພັດທະນາແຫ່ງຊາດ. ດໍາເນີນວຽກຢູ່ຂັ້ນສູນກາງ, ແຂວງ, |

| ຜູ້ມີສ່ວນຮ່ວມ | ຄວາມກ່ຽວຂ້ອງຂອງໂຄງການ: ການພັດທະນາແມ່ຍິງ ແລະ ຊາວໜຸ່ມ ແລະ ການປົກປ້ອງເດັກ ແຫ່ງຊາດ |
|---|---|
| | ເທດສະບານ, ເມືອງ ແລະ ບ້ານ. ບັນດາສະມາຊິກເຮັດວຽກເພື່ອເພີ່ມທະວີອຸດົມ ໃນການຍາກແຍ່ງເພື່ອຄວາມກ້າວໜ້າ ສີ່ດ້ານຂອງລັດຖະບານ:<br>• ການຝຶກອົບຮົມ ແລະ ການຄົ້ນຄ້ວາ<br>• ກິດຈະກໍາການຈັດຕັ້ງ ແລະ ການສ້າງຊາດ<br>• ການຝຶກອົບຮົມວິຊາຊີບ (ທັກສະດ້ານພາສາຕ່າງປະເທດ, ທັກສະດ້ານ ເຕັກໂນໂລຊີ)<br>• ການສ້າງວຽກເຮັດງານທໍາໂດຍຜ່ານກິດຈະກໍາທາງເສດຖະກິດ . |
| **ກະຊວງ ສາທາລະນະສຸກ** | ຮັບຜິດຊອບດ້ານການສ້າງຕັ້ງ ແລະ ຈັດຕັ້ງປະຕິບັດບັນດາກິດຈະກໍາທີ່ກ່ຽວພັນກັບສາທາລະນະສຸກ, ໂພຊະນາການ, ນໍ້າ ແລະ ສຸຂາພິບານ, ແລະ ໃນມໍ່ໆມານີ້ ແມ່ນການໂຄສະນາເຜີຍແຜ່ຄວາມຮັບຮູ້ກ່ຽວກັບ COVID-19. ທັງຮັບຜິດຊອບດ້ານການສະໜອງສູນວິກິດປະຕູດຽວ, ການບໍລິການສຸກເສີນ ແລະ ການປິ່ນປົວທາງດ້ານຮ່າງກາຍ ແລະ ຈິດໃຈໄລຍະຍາວ ໃຫ້ແມ່ຍິງ ແລະ ເດັກ ຜູ້ທີ່ລອດຊີວິດຈາກການໃຊ້ຄວາມຮຸນແຮງ. |
| **ກະຊວງແຮງງານ ແລະ ສະຫວັດດີການສັງຄົມ** | ມີໜ້າທີ່ອັນສໍາຄັນໃນການສົ່ງເສີມການຝຶກອົບຮົມວິຊາຊີບ, ການພັດທະນາທາງດ້ານຝີມືແຮງງານອາຊີບ, ການຊອກຫາວຽກໃຫ້ແມ່ຍິງ, ການຊ່ວຍເຫຼືອເດັກທີ່ມີຄວາມສ່ຽງ ແລະ ການຊ່ວຍເຫຼືອຄອບຄົວຂອງຜູ້ເຄາະຮ້າຍເດັກ. ທັງຮັບຜິດຊອບໃນການລົບລ້າງການໃຊ້ແຮງງານເດັກ ແລະ ການປະສານງານດ້ານການປ້ອງກັນເດັກ ແລະ ການສະໜອງຄວາມຊ່ວຍເຫຼືອໃຫ້ແກ່ຜູ້ເຄາະຮ້າຍເດັກ. |

### ຕາຕະລາງ 4 ການກໍານົດຕົວຜູ້ມີສ່ວນຮ່ວມ: ການພັດທະນາຊົນເຜົ່າແຫ່ງຊາດ

| ຜູ້ມີສ່ວນຮ່ວມ | ຄວາມກ່ຽວຂ້ອງຂອງໂຄງການ: ການພັດທະນາຊົນເຜົ່າແຫ່ງຊາດ |
|---|---|
| **ອົງການ ແນວລາວສ້າງຊາດ** | ແມ່ນອົງການຈັດຕັ້ງຫຼັກທີ່ກວດກາເບິ່ງບັນຫາທີ່ພົວພັນກັບຊົນເຜົ່າ. ເຖິງຢ່າງໃດກໍ່ຕາມ, ຍັງໄດ້ຮັບການຮັບຮູ້ຈໍາກັດຈາກອົງການຈັດຕັ້ງແຫ່ງຊາດ ແລະ ສາກົນ, ສະນັ້ນຈຶ່ງໄດ້ຮັບຊັບພະຍາກອນທີ່ຈໍາກັດ. ເຖິງແມ່ນວ່າມີການຄົ້ນຄ້ວາທີ່ລະອຽດ, ການປະເມີນຜົນບໍ່ສາມາດກໍານົດກິດຈະກໍາອັນໃດໂດຍແນວລາວສ້າງຊາດໄດ້ ໃນຂະແໜງພັດທະນາ. ນອກຈາກນັ້ນ, ດໍາລັດຂອງລັດຖະບານ ວ່າດ້ວຍຊົນເຜົ່າ ເລກທີ 207/ລບ (20 ມີນາ 2020) ໄດ້ກ□ານົດພາລະບົດບາດ ແລະ ໜ້າຮັບຜິດຊອບຂອງທຸກຊົນເຜົ່າໃຫ້ກະຊວງພາຍໃນ. |
| **ຄະນະກາມາທິການຊົນເຜົ່າ ຂອງ ສະພາແຫ່ງຊາດ** | ສ່ວນໜຶ່ງຂອງຄະນະປະຈໍາສະພາແຫ່ງຊາດ ແມ່ນເປັນຕົວແທນໃຫ້ຊົນເຜົ່າ, ມີພາລະບົດບາດໃນການກວດກາເບິ່ງກົດລະບຽບກ່ຽວກັບຊົນເຜົ່າຜູ້ທີ່ມີຄວາມສ່ຽງ ແລະ ທຸກຍາກ, ໂດຍສະໜອງຄໍາແນະນໍາກ່ຽວກັບສິດ ແລະ ຜົນປະໂຫຍດຂອງແມ່ຍິງຊົນເຜົ່າທຸກຄົນ, ແລະ ຕິດຕາມການນໍາໃຊ້ກົດໝາຍ ແລະ ນະໂຍບາຍທີ່ກ່ຽວພັນກັບຊົນເຜົ່າ. ຮັບຜິດຊອບກ່ຽວກັບການຮ່າງ ແລະ ການປະເມີນກົດໝາຍທີ່ໄດ້ສະເໜີກ່ຽວກັບຊົນເຜົ່າ ແລະ ພັກດັນໃຫ້ມີການຈັດຕັ້ງປະຕິບັດ, ເຊັ່ນດຽວກັນກັບການຈັດຕັ້ງປະຕະບັດຂອງແຜນພັດທະນາເສດຖະກິດສັງຄົມ. ການຄົ້ນຄ້ວາດ້ານຊົນເຜົ່າ ແມ່ນໜ້າຮັບຜິດຊອບຂອງ ສະຖາບັນເພື່ອການຄົ້ນຄ້ວາດ້ານວັດທະນະທໍາ ພາຍໃຕ້ກະຊວງຖະແຫຼງຂ່າວ |

| **ຜູ້ມີສ່ວນຮ່ວມ** | **ຄວາມກ່ຽວຂ້ອງຂອງໂຄງການ: ການພັດທະນາຊົນເຜົ່າແຫ່ງຊາດ** |
|---|---|
| | ແລະ ວັດທະນະທໍາ. ສະຖາບັນນໍາດ້ານການພົວພັນຊົນເຜົ່າ ແມ່ນອົງການຈັດຕັ້ງການເມືອງມະຫາຊົນ, ແນວລາວສ້າງຊາດ, ເຊິ່ງມີກົມພົວພັນຊົນເຜົ່າ. |
| **ພະນັກງານບໍລິຫານສຶກສາເມືອງ ແລະ ສຶກສາກຸ່ມບ້ານ** | ໃນຂະນະທີ່ບໍ່ໄດ້ຖືກວ່າຈ້າງໂດຍໂຄງການໂດຍກົງ, ຂອບເຂດຂອງພາລະບົດບາດບໍລິຫານແມ່ນຊ່ວຍເຫຼືອໃນການຈັດຕັ້ງປະຕິບັດໂຄງການ ແລະ ຕ້ອງຮັບຮູ້ຄວາມສ່ຽງທີ່ພົວພັນກັບສິ່ງກີດຂວາງຕໍ່ການມີສ່ວນຮ່ວມໃນຜົນປະໂຫຍດ ຂອງຊົນເຜົ່າ ແລະ ຊຸມຊົນຫ່າງໄກສອກຫຼີກ, ແລະ ຄວາມຕ້ອງການທີ່ຈໍາເປັນສໍາລັບມາດຕະການເພື່ອການປ້ອງກັນທາງສັງຄົມ ໃຫ້ແມ່ຍິງ ແລະ ເດັກ. ພະນັກງານບໍລິຫານສຶກສາເມືອງ ແລະ ສຶກສາກຸ່ມບ້ານ ແມ່ນຜູ້ມີປະສິດພາບ ເພື່ອສົ່ງຕໍ່ຂໍ້ມູນຂ່າວສານກ່ຽວກັບໂຄງການ ເຊັ່ນດຽວກັນກັບ ຊຸກຍູ້ຄົນໄວໜຸ່ມໃນການສະແຫວງຫາຄວາມຮູ້, ທັກສະ ແລະ ການສຶກສາຊັ້ນສູງດ້ານເຕັກນິກ. |

**ຕາຕະລາງ 5 ການກໍານົດຕົວຜູ້ມີສ່ວນຮ່ວມ: ການພັດທະນາຝີມືແຮງງານ ແລະ ການສຶກສາດ້ານສິ່ງແວດລ້ອມ**

| **ຜູ້ມີສ່ວນຮ່ວມ** | **ຄວາມກ່ຽວຂ້ອງຂອງໂຄງການ: ການສຶກສາດ້ານສິ່ງແວດລ້ອມ** |
|---|---|
| The National TVET Council (NTC)<br>**ສະພາອາຊີວະສຶກສາ** | NTC ດໍາເນີນວຽກ ແລະ ສະໜອງທຶນພາຍໃຕ້ MoES ແລະ ໂດຍການເປັນປະທານຂອງກະຊວງສຶກສາທິການ ແລະ ກິລາ ພ້ອມກັບ ສອງຮອງປະທານ: ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ປະທານສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດ (LNCCI). ມີໜ້າທີ່ຮັບຜິດຊອບຄື: (i) ການພັດທະນາ ແລະ ໃຫ້ຄ□າແນະນ□າດ້ານນະໂຍບາຍຂອງ TVET; (ii) ການປະສານງານລະຫວ່າງພາກລັດ ແລະ ພາກເອກະຊົນດ້ານການຝຶກອົບຮົມຝີມືແຮງງານ; (iii) ການສ້າງຕັ້ງ, ຊ່ວຍເຫຼືອ ແລະ ຕິດຕາມຂອງ TWG ເພື່ອກໍານົດຂົງເຂດບູລິມະສິດດ້ານ ວິຊາອາຊີບ/ຝີມືແຮງງານ; ແລະ (iv) ການພັດທະນາມາດຕະຖານວິຊາອາຊີບ. |
| **ສະພາການຄ້າ ແລະ ອຸດສາຫະກໍາ (LNCCI)** | LNCCI ສ້າງຕັ້ງຂຶ້ນໃນປີ 1989 ເປັນອົງການອິດສະຫຼະທີ່ຕ່າງໜ້າໃຫ້ຊຸມຊົນທຸລະກິດ ຢູ່ໃນ ສປປ ລາວ. ເປັນການເຊື່ອມຕໍ່ລະຫວ່າງລັດ ແລະ ວິສາຫະກິດເອກະຊົນ ແລະ ຕ່າງໜ້າໃຫ້ນາຍຈ້າງ, ກຸ່ມ ແລະ ການຮ່ວມທຶນ ທົ່ວທຸກອົງກອນທີ່ໄດ້ສ້າງຕັ້ງຂຶ້ນພາຍໃຕ້ກົດໝາຍຂອງ ສປປ ລາວ. ປະຈຸບັນມີສະມາຊິກຫຼາຍກ່ວາ 4,000 ຄົນ ຕ່າງໜ້າໂດຍຜ່ານສະພາການຄ້າ ຢູ່ໃນ 17 ແຂວງ ບວກນະຄອນຫຼວງວຽງຈັນ ແລະ ສະມາຄົມ ແລະ ກຸ່ມທຸລະກິດ. ນັ້ນເຮັດໃຫ້ LNCCI ເປັນຊຸມຊົນທຸລະກິດທີ່ໃຫ່ຍທີ່ສຸດ ແລະ ມີຜູ້ຕ່າງໜ້າຫຼາຍສຸດໃນ ສປປ ລາວ.<br><br>LNCCI ຕ່າງໜ້າໃຫ້ຊຸມຊົນທຸລະກິດຂອງ ສປປ ລາວ ເຮັດວຽກໃນການເຈລະຈາ ແລະ ຈັດການດ້ານການຄ້າ ແລະ ບັນຫາແຮງງານຢູ່ທັງຂັ້ນພາກພື້ນ ແລະ ສາກົນ ກັບທັດສະນະໃນການຂະຫຍາຍການຄ້າ ແລະ ການລົງທຶນ. LNCCI ເຮັດວຽກເພື່ອສ້າງຄວາມເຂັ້ມແຂງໃຫ້ CCIs ແຂວງ, CCIs ວຽງຈັນ, ສະມາຄົມ ແລະ ທຸລະກິດ ໂດຍການຍົກລະດັບການບໍລິການ ແລະ ການຄຸ້ມຄອງ. ຄືດັ່ງການພັດທະນາເສດຖະກິດແຫ່ງຊາດຮຽກຮ້ອງການຮອບຮອມຄວາມຮູ້ ແລະ ທັກສະ, LNCCI ພະຍາຍາມສ້າງຄວາມອາດສາມາດ ໂດຍຜ່ານ |

| ຜູ້ມີສ່ວນຮ່ວມ | ຄວາມກ່ຽວຂ້ອງຂອງໂຄງການ: ການສຶກສາດ້ານສິ່ງແວດລ້ອມ |
|---|---|
| | ການສໍາມະນາ, ກອງປະຊຸມທຸລະກິດ, ງານວາງສະແດງບ່ອນທີ່ສາມາດແລກປ່ຽນຄວາມຄິດ ແລະ ແບ່ງປັນປະສົບການ ແລະ ທັກສະ ໄດ້. |
| Trade Working Groups (TWG)<br>**(ຄະນະວິຊາການດ້ານການຄ້າ)** | TWG ຖືກສ້າງຕັ້ງຂຶ້ນໂດຍ NTC ແລະ ກ□ານົດໃຫ້ມີບົດບາດເປັນໜ່ວຍເຕັກນິດຮັບຜິດຊອບໃນການໃຫ້ຄໍາປຶກສາ ຕໍ່ຄະນະກໍາການດ້ານການພັດທະນາ ມາດຕະຖານການຝຶກອົບຮົມ, ການປະເມີນຜົນ ແລະ ການໃບຢັ້ງຢືນ, ການພັດທະນາຫຼັກສູດການສິດສອນ ແລະ ການຕີລາຄາຂອງແຜນງານການພັດທະນາຝີມືແຮງງານ. ປະທານຂອງສະມາຄົມທຸລະກິດທີ່ກ່ຽວຂ້ອງ ມີໜ້າທີ່ເປັນປະທານຂອງ TWG, ແລະ ຜູ້ຕ່າງໜ້າທີ່ມາຈາກສະຖາບັນສຶກສາຊັ້ນສູງ ຫຼື ສະຖາບັນ TVET ເປັນຮອງປະທານ. ໃນປະຈຸບັນ, ສິບສອງ TWG ແມ່ນດໍາເນີນງານຢູ່ໃສຂະແໜງການດັ່ງຕໍ່ໄປນີ້: ໂຮງແຮມ, ຮ້ານອາຫານ, ເຟີນີເຈີ, ຫັດຖະກໍາ, ເຄື່ອງນຸ່ງຫົ່ມ, ICT, ການກໍ່ສ້າງ, ເຄື່ອງຍານຍົນ, ທັກສະດ້ານທຸລະກິດພື້ນຖານ, ບໍ່ແຮ່, ແລະ ການໄຟຟ້າ/ພະລັງງານ. ຫຼັກຖານໄດ້ບົ່ງບອກວ່າ ຫຼາຍໆ TWGs ແມ່ນບໍ່ຫ້າວຫັນ, ສະແດງອອກດ້ວຍຄຸນລັກສະນະທີ່ຂາດຄວາມຈັດເຈນໃນພາລະບົດບາດ, ໜ້າທີ່ຮັບຜິດຊອບ ແລະ ໂຄງສ້າງຂອງອໍານາດການປົກຄອງ (LNCCI-ILO 2016; GIZ 2020). |
| **ກະຊວງ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ** | ໂດຍຮ່ວມກັບ UNEP, ກົມສິ່ງແວດລ້ອມ ຂອງກະຊວງຊັບພະຍາກອນທ□າມະຊາດ ແລະ ສິ່ງແວດລ້ອມ ໄດ້ພັດທະນາອຸປະກອນການສິດສອນດ້ານຊີວະນາພັນ ແລະ ອາກາດ ໃຫ້ກັບຫ້ອງຮຽນຂອງ ໂຮງຮຽນກຽມປະຖົມ ແລະ ປະຖົມ ດ້ວຍການສະໜອງທຶນຈາກມູນລະນິທິ Hans Scheidel. ໂດຍຮ່ວມກັບ ສະຖາບັນຄົ້ນຄ້ວາດ້ານການສຶກສາແຫ່ງຊາດ, ກົມສິ່ງແວດລ້ອມກໍາລັງພັດທະນາເຄື່ອງມື ສໍາລັບການສິດສອນດ້ານສິ່ງແວດລ້ອມ. |

## ຕາຕະລາງ 6 ການກໍານົດຕົວຜູ້ມີສ່ວນຮ່ວມ: ຜູ້ໄດ້ຮັບຜົນກະທົບ ຫຼື ຜູ້ໄດ້ຮັບປະໂຫຍດ

| ຜູ້ມີສ່ວນຮ່ວມ | ຄວາມກ່ຽວຂ້ອງຂອງໂຄງການ: ຜູ້ໄດ້ຮັບຜົນກະທົບ ຫຼື ຜູ້ໄດ້ຮັບປະໂຫຍດ |
|---|---|
| **ຊຸມຊົນຫ່າງໄກສອກຫຼີກ ແລະ ຜູ້ທີ່ພາສາລາວເປັນພາສາທີສອງ** | ປະເທດລາວເປັນສັງຄົມທີ່ມີຫຼາຍຊົນເຜົ່າ ກັບ 50 ຊົນເຜົ່າທີ່ຖືກຮັບຮູ້ເປັນທາງການ ແລະ ຄວາມແຕກຕ່າງທີ່ກວ້າງຂວາງຂອງຊົນເຜົ່າກຸ່ມຫຍ່ອຍ. ກິດຈະກໍາຂອງໂຄງການຈະຖືກກະຈາຍທົ່ວປະເທດກວມໝົດ 18 ແຂວງ (ລວມທັງນະຄອນຫຼວງວຽງຈັນ) ແລະ 148 ເມືອງໃນປະເທດ. ນັກສຶກສາຈໍານວນຫຼາຍ, ຊາວໜຸ່ມຜູ້ວ່າງງານທີ່ໄດ້ຮັບການຊ່ວຍເຫຼືອຈາກໂຄງານ ແມ່ນມີແນວໂນ້ມຢູ່ບ່ອນເມືອງຊົນນະບົດ ແລະ ປະກອບດ້ວຍນັກສຶກສາໄວໜຸ່ມທີ່ມາຈາກປະຊາຊົນຊົນເຜົ່າ ຜູ້ທີ່ເວົ້າພາສາລາວເປັນພາສາທີ່ສອງ. ບາງເມືອງ ແລະ ປະຊາຊົນໃນນີ້ ອາດອ່ອນໄຫວຕໍ່ຜົນກະທົບທາງດ້ານລົບ ຫຼື ຄວາມບໍ່ສາມາດໄດ້ຮັບຜົນປະໂຫຍດຂອງໂຄງການ ຫຼາຍກ່ວາຄົນອື່ນໆ. |
| **ນັກສໍາມະນາກອນ ແລະ ຜູ້ຈົບການສຶກສາໄວໜຸ່ມ ໂດຍໃຫ້ບູລິມະ** | ມີຄົນໄວໜຸ່ມທີ່ສະແຫວງຫາເພື່ອໃຫ້ໄດ້ມາ ແລະ ຍົກລະດັບຝີມືແຮງງານ ແລະ ໂອກາດມີວຽກເຮັດຂອງເຂົາເຈົ້າ ໂດຍສະເພາະຜູ້ທີ່ຕ້ອງໄດ້ອອກໂຮງຮຽນປະຖົມ, ມັດທະຍົມຕົ້ນ ແລະ ມັດທະຍົມປາຍ ແລະ ຜູ້ທີ່ບໍ່ສາມາດສືບຕໍ່ການສຶກສາຊັ້ນສູງ (ພາຍຫຼັງທີ່ຈົບຈາກໂຮງຮຽນມັດທະຍົມປາຍ). |

| ຜູ້ມີສ່ວນຮ່ວມ | ຄວາມກ່ຽວຂ້ອງຂອງໂຄງການ: ຜູ້ໄດ້ຮັບຜົນກະທົບ ຫຼື ຜູ້ໄດ້ຮັບປະໂຫຍດ |
|---|---|
| **ສິດ ແກ່ຜູ້ຢູ່ເມືອງ ທີ່ດ້ອຍໂອກາດ, ແລະ ຊຸມຊົນ ຊົນເຜົ່າຢູ່ເຂດ ຊົນນະບົດຫ່າງ ໄກຊອກຫຼີກ** | |
| **ຜູ້ຊອກຫາວຽກ ແລະ ຜູ້ວ່າງງານ ໂດຍໃຫ້ບູລິມະ ສິດກັບຜູ້ຢູ່ເມືອງ ທີ່ດ້ອຍໂອກາດ, ແລະ ຊຸມຊົນ ຊົນເຜົ່າຢູ່ເຂດ ຊົນນະບົດ** | ຜູ້ມີສ່ວນຮ່ວມນີ້ ປະກອບດ້ວຍ:<br>• ແຮງງານ ແລະ ຜູ້ຊອກຫາວຽກພ້ອມດ້ວຍປະເພດ ແລະ ລະດັບຂອງທັກສະບາງຢ່າງ ຫຼື ແຮງງານທີ່ມີຄວາມຊຳນິຊຳນານ (ລວມທັງຜູ້ທີ່ມາຈາກປະເທດເພື່ອນບ້ານ ຍ້ອນການ ລະບາດຂອງ COVID-19) ຜູ້ທີ່ສະແຫວງຫາໂອກາດໃນການຈ້າງງານຢູ່ໃນປະເທດບ້ານ ເກີດ;<br>• ແຮງງານ ແລະ ຜູ້ຊອກຫາວຽກພ້ອມດ້ວຍປະເພດ ແລະ ລະດັບຂອງທັກສະບາງຢ່າງ ຫຼື ແຮງງານທີ່ມີຄວາມຊຳນິຊຳນານ (ລວມທັງຜູ້ທີ່ມາຈາກປະເທດເພື່ອນບ້ານ ຍ້ອນການ ລະບາດຂອງ COVID-19) ທີ່ສະແຫວງຫາເພື່ອຍົກລະດັບຝີມືແຮງງານທີ່ມີຢູ່ແລ້ວ ຫຼື ເພື່ອໃຫ້ໄດ້ມາທັກສະໃໝ່ໆ ເພື່ອເປັນການຕອບສະໜອງຕໍ່ຄວາມຕ້ອງການຂອງຕະຫຼາດ ແຮງງານ ແລະ ການເຕີບໂຕຢ່າງໄວ; ແລະ<br>• ແຮງງານທີ່ບໍ່ມີຄວາມຊຳນິຊຳນານຜູ້ທີ່ອາດຕ້ອງການໃຫ້ໄດ້ມາທັກສະວິຊາຊີບ ທີ່ສາມາດ ສະໝັກວຽກແທດເໝາະ ກັບທັກສະທີໄດ້ມາຂອງເຂົາເຈົ້າໄດ້. |

## ການຈັດປະເພດ ແລະ ການວິເຄາະຜູ້ມີສ່ວນຮ່ວມ

ຜູ້ມີສ່ວນຮ່ວມຂອງໂຄງການສາມາດແບ່ງອອກ ເປັນໝວດຕົ້ນຕໍ່ດັ່ງຕໍ່ໄປນີ້:

- **ອົງການຈັດຕັ້ງປະຕິບັດ:** MoES (ໜ່ວຍປະສານງານສຶກສາ (ECU), ກົມແຜນການ ແລະ ການເງິນ), ແລະ MoLSW (ກົມພັດທະນາຝີມືແຮງງານ). ກ□ານົດໄວ້ຢູ່ໃນດ□າລັດນາຍົກລັດຖະມົນຕີ ເລກທີ 036/PM ວ່າດ້ວຍ TVET ແຕ່ 2010, TVET ກ່ອນການຈ້າງງານ ທີ່ເປັນທາງການ, ນອກລະບົບ ແລະ ບໍ່ເປັນທາງການ, ທັງລັດ ແລະ ເອກະຊົນ, ແມ່ນບໍລະຫານ ໂດຍ MoES, ຂະນະທີ່ການພັດທະນາທັກສະແຮງງານ, ຍົຈະແຈ້ງໄປກ່ວານັ້ນ ການຝຶກອົບຮົມຂອງກ□າລັງແຮງງານ, ແມ່ນຢູ່ ພາຍໃຕ້ໜ້າທີ່ຮັບຜິດຊອບຂອງ MoLSW. ມີ 23 ສະຖາບັນ TVET ພາຍໃຕ້ MoES, ກັບການຮັບເອົານັກຮຽນເຂົ້າປະມານ 15,700 ຄົນໃນປີ 2019-20, ແລະ ປະມານ 67 ສະຖາບັນ TVET ເອກະຊົນ, ກັບການຮັບເອົານັກຮຽນເຂົ້າຢູ່ 26,000 ຄົນ ໃນປີ 2019-20. MoLSW ດຳເນີນ 11 ສູນພັດທະນາຝີມືແຮງງານ (SDC) ກັບຈ□ານວນນັກຮຽນ ທີ່ຮຽນເຕັມເວລາ ແລະ ບໍ່ເຕັມເວລາ ທັງໝົດ 5,585 ຄົນ. ໃນຂະນະທີ SDCs ສຸມໃສ່ຫຼັກສູດການຮຽນໄລຍະສັ້ນ (ຮອດ 1 ປີ) ສ□າລັບແຮງງານໃນ ຕະຫຼາດແຮງງານ, ວິທະຍາໄລ TVET ສະໜອງການຝຶກອົບຮົມໄລຍະສັ້ນ ແລະ ໄລຍະຍາວ (ຮອດ 3 ປີ), ໂດຍທົ່ວໄປສ□າລັບ ຜູ້ທີ່ເຂົ້າຕະຫຼາດແຮງງານໃໝ່. MoES ຍັງຄົງເປັນກະຊວງທີ່ສ□າຄັນເພື່ອການພັດທະນາຝີມືແຮງງານຢູ່ໃນ ສປປ ລາວ ເຊິ່ງລວມເອົາໜ້າທີ່ຮັບຜິດຊອບໃນສ່ວນທີ່ຫຼາຍຂຶ້ນ ຂອງການຝຶກອົບຮົມໃນປະເທດ ພ້ອມກັບພາລະໜ້າທີ່ອັນສຳຄັນ ໃນ ການປະສານງານ ແລະ ການພັດທະນານະໂຍບາຍ. ຢູ່ໃນ MoES, ກົມ TVET ແມ່ນອົງກອນທີ່ສ□າຄັນໃນການກວດກາເບິ່ງ ສະຖາບັນ TVET ຂອງລັດ ແລະ ເອກະຊົນ. ຢູ່ໃນ MoLSW, ກົມພັດທະນາຝີມືແຮງງານ ແລະ ການຈັດຫາງານ (DSDE) ມີ

ໜ້າທີ່ຮັບຜິດຊອບທີ່ແຜ່ໄປໄກ ໃນດ້ານການພັດທະນານະໂຍບາຍ ແລະ ຍຸດທະສາດ, ການຄຸ້ມຄອງ ແລະ ກ່ານຊ່ວຍເຫຼືອດ້ານການພັດທະນາຝີມືແຮງງານ.

- **ອົງການລັດຖະບານ:** ທຸກໆອົງການຈັດຕັ້ງລັດຖະບານ ຫຼື ກະຊວງ ແລະ ການຄຸ້ມຄອງ ແລະ ລະບົບບໍລິຫານການຈັດຕັ້ງປະຕະບັດ ແລະ ການລາຍງານ - ຈາກລະດັບຊາດຫາລະດັບແຂວງ ແລະ ເມືອງ. ເປັນຕົ້ນ MoES, PESS, DESB, ແລະ ສູນ TVET ຂອງຊຸມຊົນ/ກຸ່ມ/ບ້ານ, ລ້ວນແຕ່ມີໜ້າທີ່ຮັບຜິດຊອບເພື່ອກວດກາເບິ່ງບັນຫາການສຶກສາ.
- ຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ ແລະ **PAP**: ບຸກຄົນ, ກຸ່ມ ແລະ ຫົວໜ່ວຍອື່ນໆພາຍໃນພື້ນທີ່ໂຄງການທີ່ມີຜົນກະທົບ ຜູ້ທີ່ມີຜົນກະທົບທາງກົງ ຫຼື ທາງອ້ອມ (ຢ່າງແທ້ຈິງ ຫຼື ອາດມີຄວາມເປັນໄປໄດ້) ໂດຍໂຄງການ ແລະ ໄດ້ຖືກກຳນົດໃຫ້ເປັນຜູ້ອ່ອນໄຫວງ່າຍທີ່ສຸດ ຕໍ່ການປ່ຽນແປງທີ່ກ່ຽວພັນກັບໂຄງການ, ແລະ ຕ້ອງໄດ້ເຮັດວຽກຮ່ວມກັນຢ່າງໃກ້ສິດ ໃນການກຳນົດຜົນກະທົບ ແລະ ຄວາມສຳຄັນ, ເຊັ່ນດຽວກັນກັບໃນການຕັດສິນບັນຫາດ້ານມາດຕະການຜ່ອນຜັນ ແລະ ຄຸ້ມຄອງ, ຕົວຢ່າງ ນັກຮຽນ, ຊາວໜຸ່ມ/ໄວລຸ້ນ, ຄົນເຮັດວຽກ, ຄູອາຈານ, ອຳນວຍການ, ສູນຝຶກອົບຮົມ ແລະ ພະນັກງານໂຄງການ. ໃນຮູບການຂອງໂຄງການນີ້, ຜູ້ໄດ້ຮັບຜົນປະໂຫຍດ ແລະ ບຸກຄົນທີ່ໄດ້ຮັບຜົນກະທົບ ໂດຍທາງກົງ ຫຼື ທາງອ້ອມ ຄວນແຈ້ງເຖິງຫ້ອງການທີ່ຮັບຜິດຊອບຂອງ ກະຊວງສຶກສາ ແລະ ກິລາ ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.
- **ຄູ່ຮ່ວມພັດທະນາ**: ໃນຮູບການນີ້, ແມ່ນໝາຍເຖິງອົງການຈັດຕັ້ງສາກົນທີ່ເຮັດວຽກຮ່ວມກັນດ້ານການພັດທະນາທັກສະການຊ່າງ ແລະ ການສຶກສາ ກັບ MoES, ເຊັ່ນ WB, ADB, DFAT, GIZ, UNICEF, EU ແລະ JICA.
- **ສື່ສານມວນຊົນ**: LWU, ແນວລາວສ້າງຊາດ, ສູນກາງຊາວໜຸ່ມ, ວິດທະຍຸກະຈາຍສຽງຊາວໜຸ່ມລາວ, ສູນກາງສະຫະພັນແມ່ຍິງລາວ, ສະມາຄົມເພື່ອສຸຂະພາບລາວ, ສະມາຄົມທັກສະເພື່ອການດຳລົງຊີວິດລາວ, ອົງການກາແດງລາວ, ສະມາຄົມນັກທຸລະກິດໜຸ່ມຂອງ ສປປ ລາວ.
- **ພາກສ່ວນອື່ນທີ່ມີຄວາມສົນໃຈ**: ບຸກຄົນ, ກຸ່ມ ແລະ ຫົວໜ່ວຍອື່ນໆ ຜູ້ທີ່ອາດບໍ່ໄດ້ປະສົບຜົນປະໂຫຍດ ແລະ ຜົນກະທົບໂດຍກົງຈາກໂຄງການ ແຕ່ພິຈາລະນາວ່າ ຫຼື ເຫັນວ່າ ສິດຜົນປະໂຫຍດຂອງເຂົາເຈົ້າ ໄດ້ຮັບຜົນກະທົບຈາກໂຄງການ ຫຼື ອາດກະທົບການຈັດຕັ້ງປະຕິບັດຂອງໂຄງການໃນທາງໃດທາງໜຶ່ງ.
- **ຜູ້ໄດ້ຮັບຜົນປະໂຫຍດຕົ້ນຕໍ**: ຊາວໜຸ່ມ/ໄວລຸ້ນ, ນັກສຶກສາວິທະຍາໄລ, ຄູອາຈານ, ອຳນວຍການ, ແມ່ຍິງ, ລວມທັງຊົນເຜົ່າຢູ່ຊົນນະບົດ (ເຊັ່ນ ຊົນເຜົ່າປະຊາຊົນລາວ ຜູ້ເວົ້າພາສາລາວເປັນພາສາທີ່ສອງ) ແລະ ກຸ່ມຜູ້ດ້ອຍໂອກາດ ຫຼື ມີຄວາມສ່ຽງ (ເຊັ່ນ ຜູ້ທີ່ມີທ່າອ່ຽງອາດຖືກກະທົບໃນທາງລົບໂດຍຜົນສະທ້ອນຂອງໂຄງການ ຫຼື ຖືກຈຳກັດຫຼາຍກ່ວາຄົນອື່ນໆໃນດ້ານຄວາມສາມາດຂອງເຂົາເຈົ້າ ທີ່ຈະໄດ້ປຽບໃນຜົນປະໂຫຍດຂອງໂຄງການ). ບຸກຄົນ ຫຼື ກຸ່ມດັ່ງກ່າວມີທ່າອ່ຽງເຊັ່ນກັນທີ່ຈະຖືກຍົກເວັ້ນຈາກ ຫຼື ບໍ່ສາມາດຈະເຂົ້າຮ່ວມຢ່າງເຕັມເມັດເຕັມສ່ວນ ໃນຂະບວນການປຶກສາຫາລືກະແສຫຼັກ ແລະ ອາດຮຽກຮ້ອງມາດຕະການສະເພາະ ຫຼື ຄວາມຊ່ວຍເຫຼືອທີ່ຈະເຮັດໃຫ້ໄດ້ດັ່ງນັ້ນ. ອັນນີ້ຈະໄດ້ເອົາເຂົ້າພິຈາລະນາກ່ຽວກັບອາຍຸ (ຕົວຢ່າງ ຜູ້ສູງອາຍຸ ແລະ ເຍົາວະຊົນ) ແລະ ກໍລະນີທີ່ເຂົາເຈົ້າອາດຈະຖືກແຍກອອກຈາກຄອບຄົວຂອງຕົວ, ຊຸມຊົນ ຫຼື ບຸກຄົນອື່ນໆຜູ້ທີ່ເຂົາເຈົ້າເພິ່ງພາຢູ່.[2]

**ການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມໃນຂັ້ນຕອນການກະກຽມໂຄງການ**: ເນື່ອງຈາກສະຖານະການລະບາດຂອງ COVID-19 ແລະ ມາດຕະການປ້ອງກັນທີ່ກ່ຽວຂ້ອງ, ການສື່ສານແບບພາກສະໜາມ ແລະ ແບບຊ່ອງໜ້າ ກັບຜູ້ມີສ່ວນຮ່ວມ ບໍ່ສາມາດເປັນໄປໄດ້. ການສື່ສານແມ່ນດຳເນີນການໂດຍຜ່ານທາງເຄື່ອງມື ດີຈີຕອນ ແລະ ລະບົບອອນລາຍ. ອີງໃສ່ປະສົບການດັ່ງກ່າວນີ້, ຮູບແບບການນຳໃຊ້ຂອງການສື່ສານ ດ້ວຍເຕັກໂນໂລຊີທັນສະໄໝ ແລະ ການເຂົ້າເຖິງອິນເຕີແນັດ ແມ່ນສຳຄັນຫຼາຍ. ດັ່ງນັ້ນ, SEP ດັ່ງກ່າວນີ້ແມ່ນຖືກອອກແບບມາໃຫ້ເຂົ້າໃຈໄດ້ງ່າຍ, ຕອບສະໜອງດ້ານເຕັກໂນໂລຊີ ແລະ ປັບຕົວໄດ້ງ່າຍ ຕໍ່ຜູ້ມີສ່ວນຮ່ວມທີ່ແຕກຕ່າງກັນ ເພື່ອຂະຫຍາຍການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມໃຫ້ໄດ້ຫຼາຍສຸດ. ໃນຂະນະທີ່ຫ້ອງການຢູ່ເຮືອນໄດ້ກາຍເປັນສ່ວນໃຈກາງ

---

[2] The World Bank Environmental and Social Framework, 2018, <http://documents1.worldbank.org/curated/en/383011492423734099/pdf/114278-WP-REVISED-PUBLIC-Environmental-and-Social-Framework.pdf>, accessed 4 July 2020.

ຂອງການປະສານງານ ແລະ ສື່ສານ, ການຕິດຕໍ່ພົວພັນໂດຍກົງຮຽກຮ້ອງມາດຕະການພະເສດ ກ່ຽວກັບການເວັ້ນໄລຍະຫ່າງທາງສັງຄົມ ແລະ ການນໍາໃຊ້ອຸປະກອນໃນການປ້ອງກັນຕົນເອງ (ຕົວຢ່າງ ໜ້າກາກ, ຖົງມື ແລະ ຜະລິດຕະພັນຕ້ານເຊື້ອແບັດທີເຣຍ). ວິທີການສື່ສານທີ່ຖືກນໍາໃຊ້ເພື່ອການກະກຽມໂຄງການ ປະກອບດ້ວຍ:

- ການສື່ສານທີ່ເບິ່ງເຫັນ ແລະ ເວົ້າແບບດີຈິຕອນ: ນໍາໃຊ້ອຸປະກອນເຊັ່ນ WhatsApp, SMS, ໂທລະສັບມືຖື, Webex and Zoom
- ການສື່ສານດ້ວຍ Email.

ບົດຮຽນທີ່ໄດ້ຮຽນຮູ້ແນະນໍາວ່າ ໃນຂັ້ນບຸນຄົນ ຄວາມຕ້ອງຕໍ່ການເຂົ້າເຖິງອິນເຕີແນັດທີ່ຄົງທີ່ ແລະ ອຸປະກອນທີ່ເໝາະສົມ ເຊັ່ນ ຄອມປີເຕີ, ໂທລະສັບມືຖື ແລະ ການບັນຈຸເອກະສານແບບອອນລາຍ ແມ່ນສໍາຄັນຫຼາຍສໍາລັບການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ. ປັດໃຈອັນນີ້ຢ່າງດຽວອາດກໍ່ໃຫ້ເກີດຄວາມທ້າທາຍໃນໄລຍະການຈັດຕັ້ງປະຕິບັດໂຄງການ. ໃນຂັ້ນສະຖາບັນ, ການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ ດໍາເນີນໄປຢ່າງຊ້າໆ ຍ້ອນວ່າກ່ຽວຂ້ອງກັບການຮຽກຮ້ອງ, ການອະນຸຍາດ ແລະ ການຈັດປະຊຸມ ແບບທາງການທີ່ໃຊ້ໄລຍະເວລາ ອາທິດໜຶ່ງເຖິງສອງອາທິດ ເພື່ອໄດ້ຮັບການຢືນຢັນ. ໃນຂັ້ນແຂວງ, ຍ້ອນຂໍ້ຈໍາກັດຕ່າງໆ, ການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ ແມ່ນເປັນໄປໄດ້ພຽງແຕ່ຜ່ານທາງອຸປະກອນອອນລາຍ.

ເຖິງແມ່ນວ່າມີຂໍ້ຈໍາກັດ, ທີມງານການກະກຽມ ແລະ ປະເມີນຜົນໂຄງການ ສາມາດເຂົ້າຮ່ວມ ແລະ ປຶກສາຫາລືກັບຜູ້ມີສ່ວນຮ່ວມຕ່າງໆ, ລວມທັງການຝຶກອົບຮົມອໍານວຍການ, ຄູອາຈານ, ຊາວໜຸ່ມ ແລະ ຊົນເຜົ່າ ຢູ່ໃນນະຄອນຫຼວງວຽງຈັນ ເຊັ່ນດຽວກັນກັບບາງແຂວງ (ເບິ່ງຕາມລາຍຊື່ຂອງບຸກຄົນທີ່ໄດ້ປຶກສາຫາລື). ອັນນີ້ຈະຊຸກຍູ້ການເຂົ້າຮ່ວມຂອງເຂົາເຈົ້າທີ່ໄດ້ແຈ້ງຂໍ້ມູນແລ້ວ ໃນມາດຕະການອອກແບບ, ຈັດຕັ້ງປະຕິບັດ ແລະ ຕິດຕາມ ເພື່ອຫຼີກລ້ຽງຜົນກະທົບທາງລົບຕໍ່ເຂົາເຈົ້າ ແລະ ເພື່ອຂະຫຍາຍຜົນປະໂຫຍດໃຫ້ສູງສຸດ ດ້ວຍການປັບປຸງກິດຈະກໍາໂຄງການທີ່ເພີ່ມພູນເຂົາເຈົ້າ ໃນລັກສະນະທີ່ເໝາະສົມທາງວັດທະນະທໍາ.

ການເຂົ້າຮ່ວມກັບຜູ້ມີສ່ວນຮ່ວມທີ່ຖືກກໍານົດຕົວ ຈະຊ່ວຍຮັບປະກັນການປະກອບສ່ວນອັນໃຫ່ຍຫຼວງສຸດເທົ່າທີ່ເປັນໄປໄດ້ ຈາກຝ່າຍຜູ້ມີສ່ວນຮ່ວມໄປຫາການຈັດຕັ້ງປະຕິບັດທີ່ສໍາເລັດຂອງໂຄງການ ແລະ ຈະເຮັດໃຫ້ໂຄງການສາມາດອີງຕາມວິຊາສະເພາະ, ເຄືອຄ່າຍ ແລະ ວາລະທີ່ມີຢູ່ແລ້ວຂອງເຂົາເຈົ້າ. ພ້ອມກັນນັ້ນ ກໍ່ຈະອໍານວຍຄວາມສະດວກໃຫ້ຊຸມຊົນ ແລະ ການຮັບຮອງໂຄງການຈາກສະຖາບັນ ໂດຍຫຼາຍຝ່າຍ. ການເຂົ້າເຖິງພູມປັນຍາ ແລະ ປະສົບປະການທ້ອງຖິ່ນ ກໍ່ເປັນໄປໄດ້ເຊັ່ນກັນ ໂດຍຜ່ານການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ.

## ຍຸດທະສາດການການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ

ຫຼັກການພື້ນຖານທີ່ຄໍ້າໜູນການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ ຂອງໂຄງການທັກສະບູລິມະສິດສໍາລັບການເຕີບໂຕ ແມ່ນວ່າການເຂົ້າຮ່ວມກັບຜູ້ມີສ່ວນຮ່ວມ ຕ້ອງໄດ້ເຮັດດ້ວຍສະຕິປັນຍາ, ການໃຫ້ກຽດ ແລະ ການເປີດກ້ວາງ. ການເຂົ້າຮ່ວມຄວນໄດ້ວາງແຜນ ແລະ ດໍາເນີນການເພື່ອສ້າງບັນຍາກາດໃຫ້ການເປີດກວ້າງ ແລະ ການໃຫ້ກຽດເຊິ່ງກັນ ແລະ ກັນ - ເຮັດໃຫ້ມີຊ່ອງວ່າງສໍາລັບສະຕິປັນຍາມະຫາຊົນ ເພື່ອແກ້ໄຂບັນຫາ ແລະ ຊອກຫາວິທີແກ້ໄຂ. ເຖິງແມ່ນວ່າເປັນປະໂຫຍດ ແລະ ມີຄວາມຈໍາເປັນໃນການກໍານົດໂຄງການ, ການມີແຜນການ, ຂໍ້ບັງຄັບ ແລະ ຂັ້ນຕອນດໍາເນີນງານ ສໍາລັບການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມນັ້ນ ແມ່ນບໍ່ຄໍ້າປະກັນຜົນໄດ້ຮັບທີ່ສະເລັດໄດ້. ສະນັ້ນ, ແຜນການດ້ານການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ ຕ້ອງບໍ່ໃຫ້ກາຍເປັນໂຄງສ້າງທີ່ຕາຍຕົວຈັກເທື່ອ, ຈໍາເປັນຕ້ອງມີຄວາມປັບຕົວໄດ້ງ່າຍ ເພາະວ່າສ່ວນໃຫ່ຍແລ້ວ ພວກເຮົາຈະບໍ່ຮູ້ວ່າອັນໃດເຮັດໄດ້ ຈົນກ່ວາພວກເຮົາໄດ້ລອງເຮັດຕົວຈິງ.

ການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ ແມ່ນສ່ວນປະສົມປະສານຂອງອົງການຈັດຕັ້ງ ແລະ ການຄຸ້ມຄອງ ຂອງໂຄງການທັກສະບູລິມະສິດສໍາລັບການເຕີບໂຕ. ຫົວໜ່ວຍລັດຖະບານ ແລະ ຄົນທີ່ຢູ່ໃນຫົວໜ່ວຍດັ່ງກ່າວທີ່ນໍາພາ ແລະ ຄຸ້ມຄອງໂຄງການ ແລະ ຕັດສິນບັນຫາດ້ານບູລິມະສິດໂຄງການ ແລະ ການຈັດຕັ້ງປະຕິບັດຂອງບັນດາກິດຈະກໍາ ແມ່ນເປັນຜູ້ມີສ່ວນຮ່ວມໃນຕົວຂອງເຂົາເອງ ແລະ ສ່ວນປະກອບຂອງອົງການຈັດຕັ້ງໂຄງການ ແລະ ວິທີທີ່ວຽກຖືກຈັດຕັ້ງ ແລະ ປະສານງານ ແມ່ນພາກສ່ວນອັນສໍາຄັນຫຼາຍ ໃນຂະບວນການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ ຂອງໂຄງການ ຍ້ອນວ່າກະທົບຕໍ່ວິທີທີ່ຜູ້ມີສ່ວນຮ່ວມທີ່ບໍ່ແມ່ນສ່ວນໜຶ່ງຂອງ

ການຈັດຕັ້ງໂຄງການ ໄດ້ຮັບຂໍ້ມູນ ແລະ ຮັບຮູ້ ແລະ ວິທີທີ່ເຂົາເຈົ້າຖືກນໍາເຂົ້າມາຢູ່ໃນການພັດທະນາ ແລະ ການຈັດຕັ້ງປະຕິບັດກິດຈະກໍາຂອງໂຄງການ.

ດັ່ງທີ່ເປັນໂຄງການທົ່ວປະເທດ, ການປະສານງານຢູ່ຂັ້ນນະໂຍບາຍ ແມ່ນອົງປະກອບທີ່ສໍາຄັນໃນຂະບວນການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມຂອງໂຄງການ. ໂຄງການຈະໝູນໃຊ້ຂະບວນການໂຕະມົນແຫ່ງຊາດ ສໍາລັບການປະສານງານຂອງຄູ່ຮ່ວມງານດ້ານການພັດທະນາລັດຖະບານລະດັບສູງ. ຂະບວນການໂຕະມົນແມ່ນນໍາພາໂດຍກະຊວງແຜນການ ແລະ ການລົງທຶນ ແລະ ນໍາເອົາບັນດາຫົວໜ່ວຍລັດ, ຄູ່ຮ່ວມພັດທະນາ, ອົງການພັດທະນາແຫ່ງຊາດ, ອົງການຕ່າງໆຂອງສະຫະປະຊາຊາດ, ອົງການຈັດຕັ້ງສັງຄົມ ແລະ ພາກເອກະຊົນ ມາຮ່ວມກັນເພື່ອປະສານຜົນການຄົ້ນຄ້ວາ ແລະ ການພັດທະນາ ແລະ ການຈັດຕັ້ງປະຕິບັດກິດຈະກໍາ. ກະຊວງສຶກສາທິການ ແລະ ກິລາ ເປັນປະທານໜ່ວຍວິຊາການພາກການສຶກສາ ກັບປະເທດອົດສະຕາລີ ແລະ ສະຫະພາບເອີລົບ ເປັນປະທານຮ່ວມ.

ອົງການຈັດຕັ້ງ ແລະ ການຄຸ້ມຄອງຂອງໂຄງການ ຖືກອອກແບບມາເພື່ອຊ່ວຍເຫຼືອ ແລະ ຊຸກຍູ້ການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມໃນການຕັດສິນບັນຫາດ້ານກິດຈະກໍາໂຄງການ ທີ່ອາດກະທົບເຂົາເຈົ້າ ຫຼື ທີ່ເຂົາມີຜົນໄດ້ຜົນເສຍນໍາ. ດັ່ງນັ້ນ, ໂຄງການຈຶ່ງມີໂຄງສ້າງແບບກະຈາຍ ທີ່ເຮັດໃຫ້ຜູ້ມີສ່ວນຮ່ວມທ້ອງຖິ່ນສາມາດເຂົ້າຮ່ວມ ໃນການພັດທະນາບັນດາກິດຈະກໍາຫຍ່ອຍ ເພື່ອຕອບສະໜອງຕໍ່ຄວາມຕ້ອງການ ແລະ ສະພາບຂອງທ້ອງຖິ່ນໄດ້.

ຢູ່ຂັ້ນການຈັດຕັ້ງປະຕິບັດທີ່ກ່ຽວກັບການພັດທະນາແຮງງານຝີມື, MoLSW ໄດ້ສ້າງຕັ້ງສູນຈັດຫາງານ 18 ແຫ່ງ ຢູ່ໃນທັງໝົດ 17 ແຂວງ ແລະ ໜຶ່ງນະຄອນຫຼວງ. ສູນຈັດຫາງານເຫຼົ່ານີ້ສະໜອງບໍລິການຊ່ວຍເຫຼືອດ້ານການຈ້າງງານ ໃຫ້ຜູ້ຊອກວຽກເຮັດ ແລະ ຜູ້ຈ້າງງານ. ນີ້ເປັນສ່ວນໜຶ່ງໃນຂະແໜງຂອງການຈ້າງງານ ແລະ ການພັດທະນາທັກສະ (SSDE) ຢູ່ກົມແຮງງານ ແລະ ສະຫວັດດີການສັງຄົມແຂວງ (PLSW). ພາລະໜ້າທີ່ຫຼັກຂອງເຂົາເຈົ້າແມ່ນດັ່ງຕໍ່ໄປນີ້: (i) ປະສານງານ ແລະ ຊຸກຍູ້ຜູ້ຈ້າງງານໃຫ້ຈັດຕັ້ງການຝຶກອົບຮົມ ແລະ ການພັດທະນາຝີມືແຮງງານໃຫ້ບັນດາຜູ້ໃຊ້ແຮງງານ; (ii) ເຮັດໜ້າທີ່ເປັນຈຸດບໍລິການຈ້າງງານ, ຄຸ້ມຄອງ ແລະ ເຜີຍແຜ່ຂໍ້ມູນຂ່າວສານດ້ານຕະຫຼາດແຮງງານ; (iii) ສະໜອງການບໍລິການຈ້າງງານ ແລະ ພັດທະນາຝີມືແຮງງານສ□າລັບ ແລະ ຢູ່ໃນແຂວງ; ແລະ (iv) ສະໜອງການບໍລິການໃຫ້ຄ□າປຶກສາດ້ານວຽກງານ ແລະ ອາຊີບ, ລວມທັງການເຮັດວຽກແບບເປັນນາຍຕົວເອງ. ພ້ອມກັນນັ້ນ MoLSW ໄດ້ສ້າງຕັ້ງການບໍລະການດ້ານແຮງງານ ແລະ ສະຫວັດດີການສັງຄົມ (LSW) ແລະ ໄດ້ຖືກສົ່ງຜ່ານເຄືອຄ່າຍຂອງຫ້ອງການ LSW ແລະ ສູນຈັດຫາງານທົ່ວປະເທດ. ມີຫ້ອງການ LSW 1 ບ່ອນຢູ່ໃນນະຄອນຫຼວງວຽງຈັນ, 17 ຫ້ອງການແຂວງ ແລະ 148 ຫ້ອງການເມືອງ ໃນທົ່ວປະເທດ ເພື່ອສົ່ງມອບແຮງງານ ແລະ ສະຫວັດດີການສັງຄົມ ແລະ ຫ້ອງການ LSW ເຫຼົ່ານີ້ຈະເປັນຈຸດເຜີຍແຜ່ທີ່ສ□າຄັນເຊັ່ນດຽວກັນ.

ການປຶກສາຫາລືກັບຜູ້ມີສ່ວນຮ່ວມ ແມ່ນສະໜອງຄໍາແນະນໍາກ່ຽວກັບວິທີດຶງດູດເອົາຜູ້ມີສ່ວນຮ່ວມໃຫ້ເຂົ້າຮ່ວມແບບຈິງຈັງ ແລະ ລວມເອົາທັງໝົດ. ຂະບວນການເຂົ້າຮ່ວມຈະພິຈາລະນາຊາວໜຸ່ມ, ຊຸມຊົນຊົນນະບົດ, ຊົນເຜົ່າ ແລະ ທີ່ລະອຽດອ່ອນ ແລະ ຕອບສະໜອງທາງດ້ານບົດບາດຍິງຊາຍ. ຈະດັດແປງໃຫ້ຖືກກັບຄວາມຕ້ອງການຂອງກຸ່ມທີ່ດ້ອຍໂອກາດ ແລະ ມີຄວາມສ່ຽງ, ເຊັ່ນດຽວກັນກັບລວມເອົາທັດສະນະທີ່ກ່ຽວຂ້ອງ ຂອງຜູ້ໄດ້ຮັບຜົນປະໂຫຍດ ແລະ ຜູ້ໄດ້ຮັບຜົນກະທົບຂອງໂຄງການ ແລະ ບັນດາຜູ້ມີສ່ວນຮ່ວມອື່ນໆ ເຂົ້າໃນການຕັດສິນບັນຫາໃນດ້ານຕ່າງໆ, ເຊັ່ນ ການອອກແບບໂຄງການ, ມາດຕະການຜ່ອນຜັນ, ການແບ່ງປັນຜົນປະໂຫຍດດ້ານການພັດທະນາ ແລະ ໂອກາດ ແລະ ບັນຫາໃນການຈັດຕັ້ງປະຕິບັດ.

ໂດຍປະຕິບັດຕາມຄໍາແນະນໍາຈາກການປະເມີນຜົນ, ນີ້ແມ່ນຍຸດທະຍາສາດຫຼັກຂອງການເຂົ້າຮ່ວມຂອງຜູ້ມີີສ່ວນຮ່ວມ.

## ການເຮັດວຽກຮ່ວມກັນໃນໄລຍະການລະບາດຂອງ COVID-19

ການລະບາດ ຂອງ COVID-19 ໄດ້ສົ່ງຜົນກະທົບຕໍ່ ຂະແໜງ ແຮງງານ/ການຈ້າງງານ, ບໍລິການ, ຕະຫຼາດ,ການສຶກສາ ແລະກິລາ ຂອງລາວ ຊຶ່ງມມີການເຜີຍແຜ່ຂໍ້ມູນຜູ້ຕິດເຊື້ອທົ່ວປະເທດ ທີ່ລວມມີ ໄວໜຸ່ມ, ແຮງງານເຄື່ອນຍ້າຍ ແລະນັກຮຽນນັກສຶກສາ. MoES ໄດ້ສ້າງແຜນການຕອບໂຕ້ດ້ານການສຶກສາກັບ COVID-19 ໂດຍການສະໜັບສະໜູນ ຂອງອົງການ UNICEF. ແຜນ

ດັ່ງກ່າວ ຈະຖືກຈັດຕັ້ງປະຕິບັດ ໂດຍຮ່ວມມືກັບສູນສຶກສາ, ເຄືອຍຄ່າຍ ຂອງຫອ້ງການ LSW ແລະສູນການຈ້າງງານ. ຈຸດປະສົງ ແມ່ນເພື່ອນໍາໃຊ້ແຜນດັ່ງກ່າວ ໃນຖານະເປັນພື້ນຖານແກ່ການເຄື່ອນໄຫວ ຂອງ MoES ແລະຄູ່ຮ່ວມພັດທະນາໃນການຫຼຸດຜ່ອນ ຜົນກະທົບ ຕໍ່ຂະແໜງສຶກສາ ແລະເພື່ອຮັບປະກັນສຸຂະພາບ ແລະສະຫວັດດີການ ຂອງຊາວໜຸ່ມ, ນັກຮຽນນັກສຶກສາ ແລະ ພະນັກງານຂະແໜງສຶກສາ, ພ້ອມທັງສະໜັບສະໜູນການສືບຕໍ່ການຮຽນການສອນ. ມາດຕະການ COVID-19 ທີ່ຖືກລວມເຂົ້າ ໃນ ESMF ແລະແຜນ SEP ສະບັບນີ້ ຈະມີການປະຕິບັດຕາມຢ່າງເຂັ້ມງວດ ບັນດາຄໍາແນະນໍາ ພາຍໃຕ້ແຜນການຕອບໂຕ້ດ້ານ ການສຶກສາກັບ COVID-19 ເພື່ອ:

- ສະໜັບສະໜູນນັກຮຽນນັກສຶກສາ, ຄູອາຈານ, ຜູ້ເບິ່ງແຍງ ແລະພໍ່ແມ່ ແລະຊຸມຊົນຂອງເຂົາເຈົ້າ ໃນການປ້ອງການຕິດ ແລະ ແຜ່ລະບາດ ຂອງ COVID-19 ໂດຍສອດຄອ່ງກັບບົດແນະນໍາແຫ່ງຊາດດ້ານສາທາ ແລະຮັບປະກັນສະຫວັດດີພາບ ຂອງ ນັກຮຽນນັກສຶກສາ ແລະພະນັກງານໃນຂະແໜງສຶກສາ
- ຮັບປະກັນຄວາມສືບເໜື່ອງ ຂອງການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ ທີ່ລວມເອົາທຸກພາກສ່ວນກ່ຽວຂ້ອງ
- ຮັບປະກັນສຸຂະພາບ ແລະຄວາມປອດໄພ ອຂງຜູ້ມີສ່ວນຮ່ວມໃນໂຄງການ ແລະສຸຂະພາບຂອງໄວໜຸ່ມ ແລະນັກຮຽນນັກສຶກ ສາ.

## ການເຂົ້າຮ່ວມ ຂອງຜູ້ມີສ່ວນຮ່ວມ ແບບຮອບດ້ານ ແລະແຕ່ໄລຍະເລີ່ມຕົ້ນ

ບົດປະເມີນສະບັບນີ້ ຍັງສະເໜີວ່າ ໂຄງການຄວນເຮັດວຽກກັບຜູ້ມີສ່ວນຮ່ວມແຕ່ໄລຍະຕົ້ນ ຂອງຂະບວນການວາງແຜນໂຄງການ ເພື່ອເກັບກໍາຫັດສະນະ ກ່ຽວກັບຂໍ້ສະເໜີໂຄງການຍ່ອຍ ແລະໃຫ້ຂໍ້ມູນແກ່ການອອກແບບໂຄງການ. ຕ້ອງມີການປຶກສາຫາລື ແບບ ຮອບດ້ານທີ່ຄໍານຶງເຖິງຄວາມສະເໜີພາບ, ໄວໜຸ່ມ, ບົດບາດຍິງຊາຍ, ຄົນພິການ ແລະຊົນເຜົ່າ.

## ການປຶກສາຫາລືແບບມີຄວາມໝາຍ

ໂຄງການນີ້ຈະຮັບປະກັນການປຶກສາຫາລື ທີ່ມີຄວາມໝາຍ ແລະຄວາມສະເໜີພາບ ຂອງການເຂົ້າຮ່ວມ ໃນທຸກຂັ້ນ ໃນໄລຍະ ກະກຽມໂຄງການ ແລະກິດຈະກໍາອື່ນຂອງໂຄງການ. ການປຶກສາຫາລື ທີ່ມີຄວາມໝາຍ ແມ່ນຂະບວນການແບບສອງສົ້ນ ທີ່:

- ເລີ່ມແຕ່ຫົວທີ ໃນຂະບວນການວາງແຜນໂຄງການ ເພື່ອຮັບເອົາຫັດສະນະ ກ່ຽວກັບຂໍ້ສະເໜີໂຄງການ ແລະໃຫ້ຂໍ້ມູນແກ່ການ ອອກແບບໂຄງການ
- ຊຸກຍູ້ໃຫ້ມີການໃຫ້ຄໍາຄິດຄໍາເຫັນຈາກຜູ້ມີສ່ວນຮ່ວມ, ໂດຍສະເພາະ ໃນຖານະເປັນວິທີໜຶ່ງ ໃນການໃຫ້ຂໍ້ມູນແກ່ການອອກ ແບບໂຄງການ ແລະການເຂົ້າຮ່ວມ ຂອງຜູ້ມີສ່ວນຮ່ວມໃນການກໍານົດ ແລະຫຼຸດຜ່ອນຄວາມສ່ຽງ ແລະຜົນກະທົບທາງ ສິ່ງແວດລ້ອມ ແລະສັງຄົມ
- ສືບຕໍ່ແບບຕໍ່ເໜື່ອງ ອີງຕາມຄວາມສ່ຽງ ແລະຜົນກະທົບ ທີ່ເກີດຂຶ້ນ
- ອີງໃສ່ ການເປີດເຜີຍ ແລະເຜີຍແຜ່ ຂໍ້ມູນຂ່າວສານ ທີ່ສອດຄອ່ງ, ໂປ່ງໃສ, ພາວະວິໃສ, ມີຄວາມໝາຍ ແລະເຂົ້າເຖິງໄດ້ງ່າຍ ໃນກໍານົດເວລາ ທີ່ສະໜອງໃຫ້ກ່ອນເພື່ອເຮັດໃຫ້ສາມາດປຶກສາຫາລື ຢ່າງມີຄວາມໝາຍກັບຜູ້ມີສ່ວນຮ່ວມ(ໃນຮູບແບບທີ່ ແທດເໝາະທາງວັດທະນະທໍາ ແລະໃນພາສາທ້ອງຖິ່ນ) ທີ່ສາມາດເຂົ້າໃຈໄດ້ ສໍາລັບຜູ້ມີສ່ວນຮ່ວມ.
- ພິຈາລະນາ ແລະຕອບຮັບກັບຄໍາຄິດຄໍາເຫັນ
- ສະໜັບສະໜູນການເຂົ້າຮ່ວມຢ່າງຫ້າວຫັນ ແລະຮອບດ້ານ ກັບຜູ້ທີ່ຖືກກະທົບໂດຍໂຄງການ
- ບໍ່ໃຫ້ມີອິດທິພົນ, ການແຊກແຊງ, ການຂົ່ມຂູ່, ການຈໍາແນກ ແລະນາບຄູ່ ຈາກພາຍນອກ
- ຖືກບັນທຶກເປັນເອກະສານ ແລະເປີດເຜີຍ ໂດຍໂຄງການ.

ໂຄງການຈະໃຫ້ຂໍ້ມູນຢ່າງພຽງພໍ ແລະເຮັດວຽກຮ່ວມກັບ ແລະຊອກຫາການສະໜັບສະໜູນ ຈາກຜູ້ທີ່ອາດຖືກກະທົບໂດຍກິດຈະ ກໍາໂຄງການ, ລວມທັງ ການປັບປຸງ TVET ແລະສິ່ງອໍານວຍຄວມສະດວກອື່ນ, ພ້ອມທັງ ການຄັດເລືອກຄູ ແລະຜູ້ເບິ່ງແຍງຈາກ ຊຸມຊົນ, ມີການປຶກສາຫາລືກ່ອນລວ່ງໜ້າ ແລະຕອບຮັບກັບປະກອບສ່ວນທີ່ໄດ້ຮັບ. ສິ່ງນີ້ຄວນເອົາ ຄວາມຮູ້ພື້ນເມືອງທີ່ມີ ທີ່ສະເ

ໜີໂດຍຊົນເຜົ່າຕ່າງໆ ແລະຊາວບ້ານ ເຂົ້າໃນການພິຈາລະນາ ເພື່ອຮັບປະກັນການເຂົ້າຮ່ວມຢ່າງຫ້າວຫັນ,ມີຄວາມໝາຍ ແລະໄດ້ຮັບຂໍ້ມູນ ຂອງບຸກຄົນ ແລະກຸ່ມຄົນ ໃນຂະບວນການປັບປຸງ TVET.

## ການເຂົ້າຮ່ວມທີ່ລວມເອົາແມ່ຍິງ ແລະປະຊາຊົນ

ມີການສະເໜີໃຫ້ໂຄງການນີ້ເປັນໂຄງການທີ່ເອົາໃຈໃສ່ບົດບາດຍິງຊາຍ ແລະແກ້ໄຂຊ່ອງວ່າງດ້ານບົດບາດຍິງຊາຍ ທີ່ຄວນປະກອບສ່ວນເຂົ້າໃນການປັບປຸງການພັດທະນາທັກສະ/ສີມືແຮງງານ ແລະການເຂົ້າຮ່ວມໃນກຳລັງແຮງງານ ຂອງແມ່ຍິງ. ມີຊ່ອງວ່າງດ້ານບົດບາດຍິງຊາຍທີ່ຊັດເຈນ, ເລີ່ມແຕ່ການເຂົ້າຮ່ວມທີ່ຕ່ຳ ໃນຕະຫຼາດແຮງງານ, ກຸ່ມແຮງງານທີ່ມີແມ່ຍິງເຂົ້າຮ່ວມ ສ່ວນໃຫ່ຍແມ່ນເຮັດວຽກໃນຂະແໜງກະສິກຳ ແລະຊອ່ງວ່າງດ້ານຄ່າຈ້າງ. ໂຄງການນີ້ຈະແກ້ໄຂຊອ່ງວ່າງເຫຼົ່ານີ້ ໂດຍການໃຫ້ການຝຶກອົບຮົມ, ເງິນອຸດໜູນ ແລະສົ່ງເສີມການເຮັດທຸລະກິດສ່ວນຕົວ ເພື່ອຊຸກຍູ້ການພັດທະນາທັກສະ/ສີມືແຮງງານ ຂອງແມ່ຍິງ ແລະການເຂົ້າຮ່ວມໃນຕະຫຼາດແຮງງານ. ຈະມີການລາຍງານໂຕຊີ້ວັດ ແບບແຍກເພດ. ໂຄງການນີ້ ຍັງຈະປະກອບສ່ວນເຂົ້າໃນການຍົກສູງສິດໃນການຕັດສິນບັນຫາ ຂອງແມ່ຍິງ.

ກິດຈະກຳການເຂົ້າຮ່ວມຂອງປະຊາຊົນ ຈະຖືກປະຕິບັດ ເພື່ອເຮັດວຽກຮ່ວມກັບຜູ້ທີ່ອາດເປັນຜູ້ໄດ້ຮັບຜົນປະໂຫຍດ ຈາກໂຄງການ ແລະຜູ້ມີສ່ວນຮ່ວມຕົ້ນຕໍ, ລວມທັງ ສະຫະພັນແມ່ຍິງສູນກາງ, ສູນກາງຊາວໜຸ່ມ, ສະຫະພັນກຳມະບານ, CSOs (NPAs ແລະ INGOs) ທີ່ເຮັດວຽກໃນຂະແໜງການຈ້າງງານໄວໜຸ່ມ, ແຮງງານເຄື່ອນຍ້າຍ ແລະກຸ່ມຄົນທີ່ດອ້ຍໂອກາດ. ຈະມີການອອກແບບການສຳຫຼວດການເຂົ້າຮ່ວມ ຂອງກຸ່ມຜູ້ໄດ້ຮັບຜົນປະໂຫຍດສະເພາະ ແລະສຳຫຼວດຜູ້ໄດ້ຮັບຜົນປະໂຫຍດຢາງເປັນປະຈຳເພື່ອຖອດຖອນບົດຮຽນ, ຮັບເອົາຄຳຄິດເຫັນ ກ່ຽວກັບຄວາມສ່ຽງ ແລະກາລະໂອກາດ ໃນການປັບປຸງການປະຕິບັດໂຄງການ. ໃນໄລຍະຕົ້ນ, ຖ້າຍັງມີການຈຳກັດການເດີນທາງ ຍ້ອນCOVID-19, ຈະມີການເຮັດວຽກຮ່ວມກັບປະຊາຊົນແບບອອນລາຍ. ການຝຶກອົບຮົມແບບອອນລາຍ ກັບນັກສຳມະນາກອນ, ຜູ້ຮັບບໍລິການດ້ານການຈ້າງງານ ແລະເຈົ້າຂອງທຸລະກິດຂະໜາດນ້ອຍທີ່ຕິດພັນກັບກະສິກຳ–ຕົວແທນ ຂອງຜູ້ໄດ້ຮັບຜົນປະໂຫຍດ ແລະ/ຫຼື ກຸ່ມດ້ອຍໂອກາດ(ແມ່ຍິງ, ໄວໜຸ່ມ)-ທີ່ເຮັດໃນໄລຍະການກະກຽມໂຄງການເພື່ອໃຫ້ການອອກແບບດີຂຶ້ນ.

## ການຂູດຮີດ ແລະການທາລຸນ ທາງເພດ

ໂຄງການນີ້ຈະໃຫ້ຂໍ້ມູນ ແກ່ຜູ້ມີສ່ວນຮ່ວມກ່ຽວກັບການຂູດຮີດ ແລະການທາລຸນທາງເພດ ແລະຄວາມສ່ຽງຕ່າງໆ ທີ່ເປັນອັນຕະລາຍທາງເພດ, ການທຸລຸນເດັກ ແລະການປົກປ້ອງເດັກ ແລະກົນໄກການລາຍງານ. ໂຄງການນີ້ ຍັງຈະຮັບປະກັນສິດສະເໝີພາບ ສຳລັບທຸກຊົນເຜົ່າ, ແມ່ຍິງ ແລະຜູ້ຊາຍ, ໄປຄຽງຄູ່ກັບການຮັບຮູ້ຄວາມແຕກຕ່າງ ລະຫວ່າງ ຊາຍ ແລະຍິງ ແລະປະຕິບັດມາດຕະການພິເສດສະເພາະ ທີ່ແນໃສ່ເລັ່ງໃຫ້ມີຄວາມສະເໝີພາບ ໃນເວລາທີ່ຈຳເປັນ.

### ສື່ສານໃນພາສາ ທີ່ເຂົ້າໃຈໄດ້ ໂດຍຜູ້ມີສ່ວນຮ່ວມຕົ້ນຕໍ

- ເຖິງວ່າ ພາສາລາວ ຈະເປັນພາສາທາງການ, ຖ້າຈຳເປັນ, ກິດຈະກຳໂຄງການຕອ້ງໃຫ້ມີຂໍ້ມູນເປັນພາສາຊົນເຜົ່າ ໂດຍການສະໜອງຜູ້ແປພາສາ ສຳລັບກອງປະຊຸມ, ໂດຍສະເພາະ ໃນສູນຈ້າງງານທ້ອງຖິ່ນ ແລະບໍລິຫານແຮງງານ ແລະສະຫວັດດີການສັງຄົມໃນທ້ອງຖິ່ນ(LSW).
- ທຸກການເຜີຍແຜ່ຂໍ້ມູນ ຕ້ອງຈະແຈ້ງ, ເປັນພາສາທີ່ງ່າຍດາຍຂອງທ້ອງຖິ່ນ ເພື່ອໃຫ້ເຂົ້າໃຈໄດ້ຄົບຖ້ວນ ສຳລັບຜູ້ທີ່ບໍ່ມີການສຶກສາດີປານໃດ.
- ຖ້າ ຈຳເປັນ, ຈະມີການນຳໃຊ້ນາຍພາສາຊົນເຜົ່າ ເພື່ອແກ້ໄຂບັນຫາອຸປະສັກດ້ານພາສາ ເພື່ອຫຼີກລ້ຽງຄວາມເຂົ້າໃຈຜິດ ແລະເພີ່ມການຮວມມື ແລະການມີສ່ວນຮ່ວມ ໃນກິດຈະກຳຕ່າງໆ.

## ການເຄົາລົບ ແລະຮັບຮູ້ສິດທິ ຂອງຄົນຊົນເຜົ່າ

- ຊ່ຽວຊານດ້ານສັງຄົມ ແລະຊົນເຜົ່າ ຈະປະຕິບັດຍຸດທະສາດສື່ສານ ທີ່ສໍາຄັນ ເພື່ອຮັບປະກັນການເຂົ້າຮ່ວມ ຂອງຊົນເຜົ່າ. ຍຸດທະສາດນີ້ ສາມາດເປັນຄູ່ມືໃນພາກສະໜາມ ທີ່ລວມເອົາແນວຄວາມຄິດດ້ານຄວາມອ່ອນໄຫວ ຕໍ່ຊົນເຜົ່າ (ມີທັດສະນະຊົນເຜົ່າ) ແລະການປຶກສາຫາລືທີ່ລວມເອົາທຸກພາກສ່ວນ ແລະການເຂົ້າຮ່ວມທາງສັງຄົມ.
- ຊ່ຽວຊານ ຈະໃຫ້ຄໍາປຶກສາ ເພື່ອປົກປ້ອງພະນັກງານ ກ່ຽວກັບຍຸດທະສາດການສື່ສານກັບຊົນເຜົ່າ ເພື່ອໃຫ້ເຂົາເຈົ້າຮູ້ ວ່າຈະເປັນຄົນທີ່ເອົາໃຈໃສ່ດ້ານຊົນເຜົ່າ ໃນໄລຍະການປະຕິບັດໂຄງການໄດ້ແນວໃດ ເຊັ່ນ ໃນລະຫຼາດນັດແຮງງານ ແລະການລົງໂຄສະນາອື່ນ.
- ເອົາໃຈໃສ່ດ້ານຈິດຕະວິທະຍາ ຕໍ່ຄວາມອ່ອນໄຫວດ້ານຊົນເຜົ່າ ແລະບົດບາດຍິງຊາຍ ໂດຍການຄໍານຶງເຖິງທັດສະນະຊົນເຜົ່າ ແລະບົດບາດຍິງຊາຍ ແລະເຂົ້າໃນຍຸດທະສາດການສື່ສານ. ທຸກຍຸດທະສາດການຄຸ້ມຄອງ, ລວມທັງ ກົດເກນການປະພຶດ ແລະການສ້າງເອກະສານຝຶກອົບຮົມ, ຕ້ອງລວມເອົາ ການປຶກສາຫາລື ແລະການເຮັດວຽກກັບຊົນເຜົ່າ, ພ້ອມດວ້ຍທັດສະນະ ຂອງຜູ້ຊາຍ ແລະແມ່ຍິງ.

## ຮັບປະກັນການແບ່ງປັນຄວາມຮູ້ ແລະຜົນປະໂຫຍດຈາກໂຄງການ ຢ່າງເປັນທໍາ

- ຮັບປະກັນວ່າທຸກໆຄົນ, ໂດຍສະເພາະແມ່ນຍິງ, ບັນດາຊົນເຜົ່າຢູ່ເຂດຊົນນະບົດ, ບຸກຄົນເຮັດທຸລະກິດຂະໜາດນ້ອຍ ແລະບັນດາທຸລະກິດຄອບຄົວ ເຂົ້າເຖິງ ແລະ ໄດ້ຮັບຜົນປະໂຫຍດຈາກໂອກາດ ແລະ ກິດຈະກໍາໃນການທົດລອງເຮັດທຸລະກິດສ່ວນຕົວ ໂດຍຜ່ານການພັດທະນາ ແລະ ຈັດຕັ້ງປະຕິບັດບົດແນະນໍາທາງດ້ານເຕັກນິກ.
- ບົດແນະນໍາທາງດ້ານເຕັກນິກຄວນຮັບປະການວ່າ ຜູ້ໄດ້ຮັບຜົນປະໂຫຍດທຸກຄົນເຂົ້າເຖິງຂໍ້ມູນໂຄງການ ແລະຜົນປະໂຫຍດຢ່າງເທົ່າທຽມ, ໂດຍສະເພາະ ຍິງໜຸ່ມ, ຊົນເຜົ່າ ແລະຜູ້ດ້ອຍໂອກາດຢູ່ເຂດຊົນນະບົດອື່ນໆ. ໃນບ່ອນທີ່ມີການກໍານົດວ່າມີຊ່ອງວ່າງດ້ານຊົນເຜົ່າ ແລະບົດບາດຍິງຊາຍ(ເຊັ່ນ: ພາສາ, ວັດທະນະທໍາ, ໂຄງສ້າງທາງສັງຄົມ, ຄວາມໂດດດ່ຽວທາງພູມສັນຖານ ແລະພື້ນຖານໂຄງລ່າງ), ສະໜອງມາດຕະການພິເສດ ເພື່ອຫຼຸດຜ່ອນຊອ່ງຫວ່າງເຫຼົ່ານີ້. ມາດຕະການພິເສດສະເພາະອາດລວມມີຄວາມພະຍາຍາມເພີ້ມເຕີມ ແລະງົບປະມານເພີ້ມເຕີມ ເພື່ອແກ້ໄຂ ແລະໃຫ້ແມ່ຍິງ ແລະຊົນເຜົ່າເຂົ້າຮ່ວມໃນກິດຈະກໍາ ທີ່ພົວພັນກັບສູນການຈ້າງງານ ແລະບໍລິການແຮງງານ ແລະສະຫວັດດີການສັງຄົມ. ສາມາດບັນເທົາຄວາມສ່ຽງ ກ່ຽວກັບການເຂົ້າຮ່ວມ ແລະຜົນປະໂຫຍດ ທີ່ບໍ່ສະເໝີພາບ ລົງໄດ້ ໃນເວລາທີ່ນັກຮຽນຊົນເຜົ່າທຸກຄົນ ສາມາດມີການເຂົ້າເຖິງຢ່າງສະເໝີພາບ ຜົນປະໂຫຍດຈາກແຜນງານຝຶກອົບຮົມວິຊາຊີບ ແລະພັດທະນາທັກສະ/ສີມືແຮງງານ ແລະໂອກາດໃນການເຮັດວຽກ ຂອງໂຄງການ. ຄອບຄົວທຸກຍາກ ຫຼື ນັກຮຽນທີ່ເປັນຊາວໜຸ່ມ ແມ່ນຜູ້ທີ່ສ່ຽງທີ່ສຸດກຸ່ມໜຶ່ງ, ມີການເຂົ້າເຖິງທີ່ນ້ອຍກວ່າ ສໍາລັບກິດຈະກໍາຝຶກອົບຮົມໃໝ່ໆ ແລະມັກຈະເປັນຄົນດ້ອຍໂອກາດ ໃນດ້ານການເຂົ້າເຖິງບໍລິການ ຂອງລັດຖະບານ ຫຼື ຂອງໂຄງການ ຍ້ອນ ບັນຫາການເຂົ້າເຖິງ(ເຊັ່ນ: ຄວາມຫ່າງໄກ, ຄວາມທຸກຍາກ, ພາສາ ແລະລະດັບການສຶກສາ).
- ຮັບປະກັນການແຈກຢາຍຄວາມຮູ້ຢ່າງເປັນທໍາ ແລະປັບປຸງການມີສ່ວນຮ່ວມ ຜ່ານຍຸທດສະສາດການເຂົ້າຮ່ວມ ທີ່ລວມເອົາມາດຕະການພິເສດສະເພາະຕ່າງໆ ສໍາລັບໄວໜຸ່ມທີ່ທຸກຍາກ ແລະດອ້ຍໂອກາດກວ່າ ໃນແຜນຈັດຕັ້ງປະຕິບັດ ເພື່ອສົ່ງເສີມການເຂົ້າເຖິງຜົນປະໂຫຍດໂຄງການຢ່າງສະເໝີພາບ.
- ຮັບປະກັນການເປັນຕົວແທນທີ່ເປັນທໍາ ຂອງຊົນເຜົ່າ, ແມ່ຍິງ ແລະຜູ້ຊາຍ ໃນຂະບວນການສົ່ງເສີມຄວາມຮູ້ ແລະພັດທະນາທັກສະທີ່ດີຂຶ້ນ ແລະການຄຸ້ມຄອງແຮງງານ.
- ຮັບປະກັນການເຂົ້າຮອດເຂົ້າເຖິງ ນັກສຶກສາດອ້ຍໂອກາດ, ໂດຍສະເພາະ ຜ່ານທຶນການສຶກສາ (ມີເຖິງ 500 ຄົນຕໍ່ປີ), ແລະຮັບປະກັນວ່າ ບໍ່ມີນັກຮຽນຄົນໃດ ທີ່ສູນເສຍໂອກາດ ໃນການເຂົ້າເຖິງໂຮງຮຽນ ແລະສູນຝຶກອົບຮົມTVET ຍ້ອນບໍ່ທຶນພຽງພໍສໍາລັບຄ່າຮຽນ ແລະທີ່ພັກເຊົາ, ໂດຍໃຫ້ບູລິມະສິດ ແກ່ນັກຮຽນເພດຍິງ ສໍາລັບຄ່າຮຽນ.
- ໃນບ່ອນທີ່ເປັນໄປໄດ້ ແລະຈໍາເປັນ, ບັນຈຸ ແລະໃຫ້ການຝຶກອົບຮົມ ແກ່ຢ່າງໜ້ອຍ ຄູຝຶກຄົນໜຶ່ງ ແລະທີ່ປຶກສາຄົນໜຶ່ງ ທີ່ເປັນຊົນເຜົ່າ ຊຶ່ງສາມາດເວົ້າໄດ້ອີກພາສາໜຶ່ງ ທີ່ບໍ່ແມ່ນພາສາລາວໄຕ (ມົງຂະເມ, ມົງລົວມຽນ ແລະຊີໂນຕິເບັດ) ໃນແຕ່ລະໂຮງຮຽນ ຫຼື ສູນຝຶກອົບຮົມ TVET ທີ່ເຂົ້າຮ່ວມໂຄງການ ແລະສູນໃຫ້ຄໍາປຶກສາ ເພື່ອອໍານວຍຄວາມສະດວກ ແລະຕາງໜ້ານັກສໍາມະນາກອນ ແລະຜູ້ຊອກວຽກເຮັດ ທີ່ເປັນຊົນເຜົ່າ.

- ສາມາດສະໜອງມາດຕະການຕ່າງໆ ໃນລະບຽບການຄຸ້ມຄອງແຮງງານ (LMP) ທີ່ກະກຽມໃນຖານະເປັນສ່ວນໜຶ່ງ ຂອງ ESMF ແລະນຳໃຊ້ ເພື່ອແກ້ໄຂ ແລະຄຸ້ມຄອງຄວາມສ່ຽງ ແລະບັນຫາຕ່າງໆ ທີ່ພົວພັນກັບການຈຳແນກໃນບ່ອນເຮັດວຽກ ທີ່ໄດ້ຮັບປະໂຫຍດຈາກໂຄງການທົດລອງກິດຈະກຳການເຮັດທຸລະກິດສ່ວນຕົວ.

### ການເປີດເຜີຍຂໍ້ມູນໂຄງການ ແລະການເກັບກຳການບັນທຶກຕ່າງໆ

ຈະມີການເກັບກຳບັນທຶກເປັນເອກະສານ, ເກັບຮັກສາ ແລະເປີດເຜີຍທຸກຂໍ້ມູນ ໂດຍໂຄງການ. ເປີດເຜີຍ ແລະເຜີຍແຜ່ ຂໍ້ມູນຂ່າວສານ ທີ່ສອດຄອ່ງ, ໂປ່ງໃສ, ພາວະວິໃສ, ມີຄວາມໝາຍ ແລະເຂົ້າເຖິງໄດ້ງ່າຍໃນກຳນົດເວລາ ແມ່ນເຮັດກ່ອນເພື່ອເຮັດໃຫ້ສາມາດປຶກສາຫາລື ຢ່າງມີຄວາມໝາຍກັບຜູ້ມີສ່ວນຮ່ວມ(ໃນຮູບແບບທີ່ແທດເໝາະທາງວັດທະນະທຳ ແລະໃນພາສາທ້ອງຖິ່ນ) ທີ່ສາມາດເຂົ້າໃຈໄດ້ ສຳລັບຜູ້ມີສ່ວນຮ່ວມ.

## 7. ວິທີການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ

ໂຄງການຈະມີການນຳໃຊ້ຫຼາກຫຼາຍເຕັກນິກ ການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ. ອີງຕາມການນຳນົດໂຕ ແລະວິເຄາະຜູ້ມີສ່ວນຮ່ວມ , ຂະແໜງແຮງງານ, ສະຫວັດດີການສັງຄົມ ແລະສຶກສາ ແມ່ນປະກອບດ້ວຍ ຜູ້ມີສ່ວນຮ່ວມ ທີ່ແຕກຕ່າງກັນໄປ ແລະຈຸດປະສົງການພັດທະນາ (ຍ້ອນ ສປປ ລາວ ປະກອບດ້ວຍ ຫຼາຍຊົນເຜົ່າ), ສະນັ້ນ, ຈຶ່ງບໍ່ມີວິທີການອັນດຽວ ທີ່ແທດເໝາະກັບໂຄງການນີ້. ສະນັ້ນ, ວິທີທີ່ດີສຸດ ແມ່ນໃຊ້ ຂະບວນການສື່ສານ ແລະເຂົ້າຮ່ວມທີ່ງ່າຍດາຍ ເຊັ່ນ: ການເຂົ້າເຖິງຂໍ້ມູນຂ່າວສານແບບງ່າຍ ແລະສະໜອງຄຳເຫັນ ແລະຄຳແນະນຳ ໃນລະດັບກິດຈະກຳໂຄງການ.

ບາງເຕັກນິກແບບງ່າຍທີ່ສະໜັບສະໜູນຄວາມສືບເໜື່ອງ ຂອງການສື່ສານ ແລະການເຂົ້າຮ່ວມ ລວມມີ:

- ການຕິດຕໍ່ພົວພັນໂດຍກົງ: ໃນບ່ອນທີ່ເປັນໄປໄດ້, ເຂົ້າຮ່ວມກອງປະຊຸມ ແລະການສຳພາດ ແລະປຶກສາຫາລືເປັນກຸ່ມ ໂດຍນຳໃຊ້ມາດຕະການໄລຍະຫ່າງທາງສັງຄົມ ແລະເຄື່ອງມືປົກປ້ອງຕົນເອງ.
- ການສື່ສານແບບອອນລາຍ ແລະຂໍ້ຄວາມ: ນຳໃຊ້ເຄື່ອງມືເຊັ່ນ: ວອບແອບ,  Team, Telegram, ແຟສບຸກ, SMS, ໂທລະສັບ , Webex, Zoom ແລະເຄືອງມືອອນລາຍອື່ນ
- ການສື່ສານໂດຍກົງ.
- ການສື່ສານທາງອີເມລ.
- ເຄື່ອງມືແບ່ງປັນຂໍ້ມູນ, drive: Google, Office/Team, Dropbox,
- ສື່ມວນຊົນ: ໂທລະພາບ, ຢູທູບ, ວິດທະຍຸ, ໜັງສືພິມທ້ອງຖິ່ນ, ແຜ່ນພັບ ແລະຊ່ອງທາງສື່ອອນລາຍ.
- ຮັບປະກັນການເຂົ້າຮ່ວມຢ່າງທົ່ວເຖິງ ຂອງຜູ້ດ້ອຍໂອກາດ, ຄົນພິການ ແລະຄົນທຸກຍາກ ໃນພື້ນທີ່ໂຄງການ. ບຸກຄົນເຫຼົ່ານີ້ຕ້ອງໄດ້ຮັບຂໍ້ມູນ, ປຶກສາຫາລື ແລະເຂົ້າຮ່ວມໂດຍຜ່ານຊອ່ງທາງທີ່ກຳນົດ.
- ນາຍພາສາຊົນເຜົ່າ.
- ກອງປະຊຸມກັບຊຸມຊົນທ້ອງຖິ່ນ ສຳລັບການປຶກສາຫາລືແບບລົງເລິກ.
- ຖ້າເປັນໄປໄດ້ ແລະເໝາະສົມ, ນຳໃຊ້ບົດຖະແຫຼງຂ່າວ ແລະກອງປະຊຸມຖະແຫຼງຂ່າວ.

SEP ເປັນເອກະສານທີ່ສາມາດປ່ຽນແປງໄດ້ຕະຫຼອດໄລຍະໂຄງການ ແລະຈະຖືກປັບປຸງ ເປັນປົກກະຕິ ອີງຕາມຄວາມຄືບໜ້າຂອງໂຄງການ ຕະຫຼອດໄລຍະຕ່າງໆ ຂອງໂຄງການ, ເພື່ອຮັບປະກັນການກຳນົດໂຕຢ່າງທັນເວລາຜູ້ມີສ່ວນຮ່ວມໃໝ່ ແລະພາກສ່ວນທີ່ສົນໃຈ ແລະການມີສ່ວນຮ່ວມຂອງເຂົາເຈົ້າໃນຂະບວນການຮ່ວມມື ຂອງໂຄງການ. ວິທີການເຂົ້າຮ່ວມ ຈະຖືກທົບທວນເປັນໄລຍະ ເພື່ອຮັກສາປະສິດທິຜົນ ແລະຄວາມສອດຄ່ອງ ກັບສະພາບແວດລ້ອມຂອງໂຄງການທີ່ມີການປ່ຽນແປງ.

## 7.1. ແຜນການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມ

ປະຕິບັດແຜນການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມທີ່ມີປະສິດທິຜົນຍິ່ງຂຶ້ນ, ໂຄງການຈະເຮັດວຽກກັບເຄືອຄ່າຍທີ່ມີໃນປັດຈຸບັນ ເຊັ່ນ: ສູນການສຶກສາ, ສູນຈັດຫາງານ ແລະບໍລິການແຮງງານ ແລະສະຫວັດດີການສັງຄົມ ແລະຫ້ອງການສະພາຝຶກອົບຮົມແຫ່ງຊາດ (NTC–PO) ແລະ TWGs ຍ້ອນເຂົາເຈົ້າເປັນອົງການຈັດຕັ້ງ ທີ່ຮັບຜິດຊອບການສົ່ງເສີມການຮ່ວມງານຂອງພາກລັດ ແລະເອກະຊົນ ໃນການພັດທະນາທັກສະ/ສີມືແຮງງານ.

ເຊັ່ນດຽວກັນກັບໂຄງການອື່ນທີ່ໃຫ້ທຶນໂດຍທະນາຄານໂລກໃນປັດຈຸບັນ ພາຍໃຕ້ MoES, ແຜນການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມສະບັບນີ້ ແບ່ງອອກເປັນສອງອົງປະກອບ:

1. ກິດກະຈຳການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມສ່ວນໃຫ່ຍແມ່ນແນໃສ່ການປະກອບສ່ວນຢ່າງຫ້າວຫັນ ຂອງຜູ້ມີສ່ວນຮ່ວມໃນບັນຫາຕ່າງໆ ທີ່ອາດກະທົບເຂົາເຈົ້າ ຫຼື ບັນຫາທີ່ເຂົາເຈົ້າອາດສົ່ງຜົນຕໍ່
2. ກິດຈະກຳການສື່ສານ ສ່ວນໃຫ່ຍແມ່ນແນໃສ່ການສະໜອງຂໍ້ມູນຂ່າວສານ ແລະຂ່າວ ໃຫ້ແກ່ຜູ້ມີສ່ວນຮ່ວມກ່ຽວຂ້ອງຂອງໂຄງການ

ເຖິງແນວໃດກໍ່ຕາມ, ຖ້າມີໂອກາດ, ກິດຈະກຳການສື່ສານ ອາດລວມເອົາການເຂົ້າຮ່ວມຢ່າງຫ້າວຫັນ ຂອງປະຊາຊົນ ທີ່ກ່ຽວຂ້ອງ ແລະສ່ວນໃຫ່ຍກິດຈະກຳການເຂົ້າຮ່ວມ ລວມມີການເຜີຍແຜ່ຂໍ້ມູນຂ່າວສານ.

ແຜນການເຂົ້າຮວ່ມຂອງຜູ້ມີສ່ວນຮ່ວມ ແມ່ນຖືກສະຫຼຸບໃນ***ຕາຕະລາງ ທີ* 7**. ວິທີການເຂົ້າຮ່ວມ ແມ່ນອາດຈະມີການປ່ຽນແປງໃນບາງຄັ້ງ, ຕາມຄວາມຈຳເປັນ, ຜູ້ມີສ່ວນຮ່ວມເອງ ອາດສະເໜີວິທີການອື່ນ ແລະອາດນຳພາບາງວຽກງານ.

ອົງປະກອບການສື່ສານ ຖືກສະຫຼຸບໃນ ***ຕາຕະລາງ 4***. ແຜນການສື່ສານ ຈະນຳໃຊ້ຫຼາກຫຼາຍຊອ່ງທາງ ທີ່ເຊື່ອມກັບກິດຈະກຳຕ່າງໆ ຂອງໂຄງການ, ຊຶ່ງລວມມີ:

- ເຜີຍແຜ່ທຸກບົດສຶກສາ, ການປະເມີນຜົນ ແລະແຜນການປະຕິບັດ ທີ່ກ່ຽວຂ້ອງ ໃນເວັບໄຊ ຂອງMoES ແລະ MoLSW, ເວັບໄຊໂຄງການ ແລະເວັບໄຊ ຂອງທະນາຄານໂລກ, ເຊັ່ນດຽວກັບກະດານຂ່າວ ຂອງອຳນາດການປົກຄອງບ້ານ.
- ແຜນຈັດຕັ້ງປະຕັ້ງປະຕິບັດ ແລະການສື່ສານໃນລະດັບໂຄງການ ຈະຖືກສົ່ງໃຫ້ອຳນາດການປົກຄອງທ້ອງຖິ່ນ, ບ້ານ ແລະຊຸມຊົນ ເປັນພາສາລາວ.
- ຜະລິດປົດສະເຕີ ແລະແຈ້ງການ ໃນເຂດເປົ້າໝາຍ ທີ່ສາມາດເຂົ້າເຖິງໄດ້ ໂດຍຊຸມຊົນທ້ອງຖິ່ນ ແລະຜູ້ມີສ່ວນຮ່ວມກ່ຽວຂ້ອງ.
- ຖ່າຍທອດແຈ້ງການຜ່ານສື່ມວນຊົນທ້ອງຖິ່ນ ແລະແຫ່ງຊາດ.
- ກອງປະຊຸມຜູ້ມີສ່ວນຮ່ວມ ແລະບົດຖະແຫຼງຂ່າວ.
- ເອກະສານສະບັບເອເລັກໂຕຼນິກ ແລະພິມ ແບບບໍ່ເສຍຄ່າ ກ່ຽວກັບຂອບຄຸ້ມຄອງສິ່ງແວດລ້ອມ ແລະສັງຄົມ, SEP ແລະ GRM ເປັນພາສາລາວ ແລະເຮັດໃຫ້ເຂົ້າເຖິງໄດ້ ໂດຍຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ ແລະມວນຊົນທົ່ວໄປ.

ຕາຕະລາງ 3: ແຜນການເຂົ້າຮ່ວມ ຂອງຜູ້ມີສ່ວນຮ່ວມ

| ເຮັດວຽກດ້ານໃດ | ເຮັດກັບໃຜ | ເຮັດຍາມໃດ | ເຮັດກັບໃຜ | ເຮັດແນວໃດ |
|---|---|---|---|---|
| ການເຜີຍແຜ່ ແລະປຶກສາຫາລືຮ່າງມາດຕະການຄຸ້ມຄອງສິ່ງແວດລ້ອມ ແລະສັງຄົມ (ESCP, SEP, ESMF) | MoES' s<br>ແລະ MoLSW<br>ເຊັ່ນກົມຝຶກອົບຮົມວິຊາຊີບ(TVED) ພາຍໃນ MoES,<br>PCU | - ກ່ອນການປະເມີນໂຄງການ | ຕົວແທນຈາກຜູ້ມີສ່ວນຮ່ວມທີ່ມີຄວາມສົນໃຈ ແລະທີ່ໄດ້ຮັບຜົນກະທົບ | - ກອງປະຊຸມໂຕະມົນ<br>- ກອງປະຊຸມອອນລາຍ<br>- ສົ່ງອີເມລເຂົ້າກຸ່ມ ແລະສະເໜີຂໍ້ຄໍາຄິດເຫັນກ່ຽວກັບການແກ້ໄຂ |
| ການປະສານງານລະດັບນະໂຍບາຍ ຂອງການໃຫ້ທຶນ ແລະກິດຈະກໍາ ໃນຂະ ແໜງແຮງງານ, ທັກສະ ແລະສຶກສາ. | ທັງສອງກະຊວງ MoES, ແລະ MoLSW ແລະຕົວແທນຂອງກະຊວງ ໃນກອງປະຊຸມໂຕະມົນ | - ກ່ອນມື້ມີຜົນສັກສິດ ຂອງໂຄງການ<br>- ປີລະຄັ້ງ ກ່ອນການກະກຽມແຜນວຽກ ແລະແຜນງົບປະມານ ປະຈໍາປີ | ຕົວແທນໃນລະດັບນະໂຍບາຍ ຈາກ ADB, EU, JICA, GIZ, DEFAT, UNICEF, WFP, ພາກເອກະຊົນ –LNCCI, ສູນຝຶກອົບຮົມ | - ກອງປະຊຸມໂຕະມົນ<br>- ກອງປະຊຸມອອນລາຍ |
| ການປະສານງານກິດຈະກໍາໂຄງການໃນລະດັບການຈັດຕັ້ງປະຕິບັດ ໃນທົ່ວປະເທດ ທີ່ພົວພັນກັບບັນຫາສິ່ງແວດ ລ້ອມ ແລະສັງຄົມ<br>ການຄຸ້ມຄອງແຮງງານ<br>GRM | MoES<br>MoLSW | - ກ່ອນມື້ມີຜົນສັກສິດ ຂອງໂຄງການ<br>- ປີລະຄັ້ງ ກ່ອນການກະກຽມແຜນວຽກ ແລະແຜນງົບປະມານ ປະຈໍາປີ<br>- ຕາມຄວາມຈໍາເປັນໂຕຈິງ | ຜູ້ຈັດການໂຄງການ/ຫົວໜ້າທີມ, ຫົວໜ້າທີ່ປຶກສາ ຈາກ WB, ADB, EU, JICA, DEFAT, UNICEF, WFP, ອົງການ Plan ສາກົນ, ອົງການຊ່ວຍເຫຼືອເດັກ, ສະຫະພັນແມ່ຍິງສູນກາງ, ແນວລາວສ້າງຊາດ, ຕົວແທນຊົນເຜົ່າ | - ປະຊຸມອອນລາຍ<br>- ປະຊຸມຊ້ອງໜ້າກັນສອງຝ່າຍ<br>- ສົ່ງອີເມລເຂົ້າກຸ່ມ |

| ເຮັດວຽກດ້ານໃດ | ເຮັດກັບໃຜ | ເຮັດຍາມໃດ | ເຮັດກັບໃຜ | ເຮັດແນວໃດ |
|---|---|---|---|---|
| | | | | |
| ພັນທະ, ການແບ່ງຄວາມຮັບຜິດຊອບ ໃນ ESCP. ການປະເມີນການປະຕິບັດໂດຍສອດຄ່ອງ | MoES, MoLSW | - ກ່ອນສຳເລັດຂັ້ນສຸດທ້າຍ<br>- ປີລະຄັ້ງໃນໄລຍະປະຕິບັດໂຄງການ | ທະນາຄານໂລກ, ຜູ້ຈັດການໂຄງການ, ຜູ້ປະສານງານ, ຜູ້ຊ່ວຍວຽກ ແລະທີ່ປຶກສາໃນຂັ້ນສູນກາງ ແລະແຂວງ | - ແຈກຢາຍຜ່ານອີເມລ<br>- ສະເໜີຂໍຄຳເຫັນ<br>- ກອງປະຊຸມອອນລາຍ<br>- ຕອບຄຳເຫັນ |
| ຄູ່ມື, ລະບຽບການ ແລະມາດຕະຖານການປະພຶດ ໃນ ESMF. ປະເມີນວ່າສິ່ງໄດ້ທີ່ໄດ້ຜົນ ແລະສິ່ງໃດບໍ່ໄດ້ຜົນ | MoES, MoLSW | - ກ່ອນສຳເລັດຂັ້ນສຸດທ້າຍ<br>- ປີລະຄັ້ງໃນໄລຍະປະຕິບັດໂຄງການ | ທະນາຄານໂລກ, ຜູ້ຈັດການໂຄງການ, ຜູ້ປະສານງານ, ຜູ້ຊ່ວຍວຽກ ແລະທີ່ປຶກສາໃນຂັ້ນສູນກາງ ແລະແຂວງ | - ແຈກຢາຍຜ່ານອີເມລ<br>- ສະເໜີຂໍຄຳເຫັນ<br>- ກອງປະຊຸມອອນລາຍ<br>- ຕອບຄຳເຫັນ<br>- ຄຳຄິດເຫັນຕໍ່ການວາງແຜນໂຄງການ |
| GRM: ສິ່ງທີ່ເກີດຂຶ້ນ, ປະເມີນຜົນ, ຈຳເປັນຕອ້ງປ່ຽນແປງ, ຄຳເຫັນກ່ຽວກັບການປະຕິບັດໂຄງການ | MoES, MoLSW | - ກ່ອນສຳເລັດຂັ້ນສຸດທ້າຍ<br>- ປີລະຄັ້ງໃນໄລຍະປະຕິບັດໂຄງການ | ທະນາຄານໂລກ, ຜູ້ຈັດການໂຄງການ, ຜູ້ປະສານງານ, ຜູ້ຊ່ວຍວຽກ ແລະທີ່ປຶກສາ, ສູນຝຶກອົບຮົມ ໃນຂັ້ນສູນກາງ ແລະແຂວງ | - ແບບສອບຖາມ<br>- ກອງປະຊຸມອອນລາຍ<br>- ລົງຢ້ຽມຢາມພາກສະໜາມ<br>- ແຈກຢາຍບົດສະຫຼຸບ, ຄຳເຫັນ ແລະອື່ນໆ |
| ການວາງແຜນໂຄງການລະດັບຊາດ<br><br>ປະເມີນຜົນການປະຕິບັດ ESMF | MoES, MoLSW | - ປີລະຄັ້ງ ໃນຖານະເປັນສ່ວນໜຶ່ງ ຂອງແຜນວຽກ ແລະແຜນງົບປະມານປະຈຳປີ | ທະນາຄານໂລກ, ຜູ້ຈັດການໂຄງການ, ຜູ້ປະສານງານ, ຜູ້ຊ່ວຍວຽກ ແລະທີ່ປຶກສາ, ສູນຝຶກອົບຮົມ ໃນຂັ້ນສູນກາງ ແລະແຂວງ | - ກອງປະຊຸມອອນລາຍ<br>- ແລກປ່ຽນອີເມລ ໃນກຸ່ມ |

| ເຮັດວຽກດ້ານໃດ | ເຮັດກັບໃຜ | ເຮັດຍາມໃດ | ເຮັດກັບໃຜ | ເຮັດແນວໃດ |
|---|---|---|---|---|
| ວາງແຜນໂຄງການຍ່ອຍຂັ້ນແຂວງ<br>ປະເມີນຜົນການປະຕິບັດ ESMF | ກົມຝຶກອົບຮົມວິຊາຊີບ (TVED) ພາຍໃນກະຊວງ MoES, ທີ່ປຶກສາຢູ່ຂັ້ນສູນກາງ | - ປີລະຄັ້ງ ໃນຖານະເປັນສ່ວນໜຶ່ງ ຂອງແຜນວຽກ ແລະ ແຜນງົບປະມານປະຈຳປີ | ສູນຝຶກອົບຮົມ | - ສະເໜີຂໍ້ສະເໜີໂຄງການ<br>- ກອງປະຊຸມ ກັບສູນຝຶກອົບຮົມ/ ໂຮງຮຽນ |

ຕາຕະລາງ **4:** ແຜນການສື່ສານ

| ສື່ສານຫຍັງ | ພາກສ່ວນທີ່ສື່ສານ | ສື່ສານຕອນໃດ | ສື່ສານກັບພາກສ່ວນໃດ | ຊ່ອງທາງການສື່ສານ |
|---|---|---|---|---|
| ແຜນ, ກິດຈະກຳ ແລະຜົນໄດ້ຮັບ ຂອງໂຄງການ | MoS, MoLSW | - ປະລະຄັ້ງ<br>- ໃນເວລາ ທີ່ມີຜົນໄດ້ຮັບ ທີ່ສຳຄັນ | ມວນຊົນທົ່ວໄປ<br>ສູນໃຫ້ຄຳປຶກສາການຈ້າງງານ (ສູນການຈ້າງງານ) ແລະການບໍລິການແຮງງານ ແລະ ສະຫວັດດີການສັງຄົມ | - ສຳພາດທາງໂທລະພາບ ແລະ ວິດທະຍຸ<br>- ລົງໃນແຟສບຸກ<br>- ເວັບໄຊ<br>- ບົດຄວາມໃນໜັງສືພິມ |
| ຄວາມຄືບໜ້າ ຂອງໂຄງການ | ກົມຝຶກອົບຮົມວິຊາຊີບ (TVED) ພາຍໃນກະຊວງ MoES | - ທຸກ 6 ເດືອນ | ທະນາຄານໂລກ<br>ຄະນະນຳ ຂອງ MOES | - ບົດລາຍງານ |
| ຄວາມຄືບໜ້າ ຂອງໂຄງການຍ່ອຍ | ກົມຝຶກອົບຮົມວິຊາຊີບ (TVED) ພາຍໃນກະຊວງ MoES | - ທຸກ 6 ເດືອນ | ສູນການຈ້າງງານ ແລະການບໍລິການແຮງງານ ແລະ ສະຫວັດດີການສັງຄົມ | - ບົດລາຍງານ |
| GRM | MoES, MoLS ທີ່ປຶກສາໂຄງການ | - ຜົນສັກສິດຂອງໂຄງການ<br>- ປີລະຄັ້ງ | ສູນການຈ້າງງານ ແລະການບໍລິການແຮງງານ ແລະ ສະຫວັດດີການສັງຄົມ, ອຳ | - ສູນຝຶກອົບຮົມ<br>- ວິທະຍາໄລ |

| ສື່ສານຫຍັງ | ພາກສ່ວນທີ່ສື່ສານ | ສື່ສານຕອນໃດ | ສື່ສານກັບພາກສ່ວນໃດ | ຊ່ອງທາງການສື່ສານ |
|---|---|---|---|---|
| ເຄື່ອນໄຫວແນວໃດ ແລະນຳໃຊ້ແນວໃດ | | | ນວຍການTVET, ຄູອາຈານ, ສະຫະພັນແມ່ຍິງ, ແນວລາວສ້າງຊາດ, ຕົວແທນຊົນເຜົ່າ | - ກອງປະຊຸມບ້ານ ພ້ອມແປເປັນພາສາຊົນເຜົ່າ<br>- ກອງປະຊຸມກັບແຕ່ລະກຸ່ມ<br>- ແຜ່ນພັບ |
| ESMF<br>ຈັດຕັ້ງປະຕິບັດ ESMF ໃນໂຕຈິງແນວໃດ<br>ການແບ່ງຄວາມຮັບຜິດຊອບ | PCU | - ຜົນສັກສິດຂອງໂຄງການ<br>- ປີລະຄັ້ງ ຫຼື ຖ້າມີການປ່ຽນແປງໃດໜຶ່ງ | ສູນການຈ້າງງານ ແລະການບໍລິການແຮງງານ ແລະ ສະຫວັດດີການສັງຄົມ, ອຳນວຍການTVET, ຄູອາຈານ, ສະຫະພັນແມ່ຍິງ, ແນວລາວສ້າງຊາດ, ຕົວແທນຊົນເຜົ່າ, ພໍ່ແມ່ | - ອະທິບາຍ ESMF ພ້ອມແປເປັນພາສາຊົນເຜົ່າ<br>- ແຈກຢາຍຜ່ານອີເມລ<br>- ແຜ່ນປິດສະເຕີ (ພາສາຊົນເຜົ່າ)<br>- ລົງຢ້ຽມຢາມພາກສະໜາມ ແລະອະທິບາຍ |

## 7.2. ບົດລາຍງານ ແລະການບັນທຶກ ການປຶກສາຫາລື ກ່ຽວກັບມາດ ຕະການຄຸ້ມຄອງສິ່ງແວດລ້ອມ ແລະສັງຄົມ

ພາກນີ້ ຈະໃຫ້ຂໍ້ມູນ ກ່ຽວກັບການປຶກສາຫາລືກັບຜູ້ມີສ່ວນຮ່ວມ ໃນລະຫວ່າງການກະກຽມ ແລະປະເມີນຜົນໂຄງການ ເພື່ອຮັບປະກັນ ວ່າມີການເປີດເຜີຍຢ່າງແທດເໝາະ ຂໍ້ມູນທີ່ຊັດແຈນຂອງໂຄງການ ກ່ຽວກັບຄວາມສ່ຽງ ແລະຜົນກະທົບດ້ານສິ່ງ ແວດລ້ອມ ແລະສັງຄົມ ແລະມາດຕະການຫຼຸດຜ່ອນ, ລວມທັງ ມີການແກ້ໄຂ ແລະເປີດເຜີຍ ຕໍ່ຜູ້ມີສ່ວນຮ່ວມ ຕາມເວລາອັນຄວນ, ເຂົ້າໃຈງ່າຍ, ເຂົ້າເຖິງງ່າຍ ແລະແທດເໝາະ ດ້ານລັກສະນະ ແລະຮູບແບບ. ນອກນັ້ນ, ການປຶກສາຫາລື ແມ່ນເພື່ອໄດ້ຮັບຄໍາເຫັນ ແລະຂໍ້ສະເໜີ ກ່ຽວກັບການສ້າງຄວາມເຂັ້ມແຂງ ແກ່ການອອກແບບໂຄງການ ແລະເອກະສານຄຸ້ມຄອງຄວາມສ່ຽງ. ໂຄງການີ້ ສິ່ງເສີມ ແລະຕາມທີ່ໄດ້ຖືກນໍາສະເໜີໃນ ***ພາກທີ*** *Error! Reference source not found.,* ໂຄງການນີ້ ຈະສືບຕໍ່ສິ່ງເສີມ ແລະ ສະໜອງເຄື່ອງມື ສໍາລັບການເຮັດວຽກ ທີ່ມີປະສິດທິຜົນ ແລະຮ່ວມກັບທຸກພາກສ່ວນ ກັບຜູ້ມີສ່ວນຮ່ວມຫຼາກຫຼາຍ, ລວມທັງ ຜູ້ທີ່ອາດໄດ້ຮັບຜົນກະທົບຈາກໂຄງການ/ຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ ຕະຫຼອດໄລຍະຮອບວຽນໂຄງການ ກ່ຽວກັບບັນຫາຕ່າງໆ ທີ່ອາດກະທົບເຂົາເຈົ້າໄດ້.

ການປຶກສາຫາລື ກັບຜູ້ມີສ່ວນຮ່ວມ ແລະການວາງແຜນ ແລະສ້າງ ESF ໄດ້ມີຂຶ້ນ ແຕ່ທ້າຍເດືອນ ກັນຍາ ຫາ ຕົ້ນເດືອນ ພະຈິກ 2021 (ເບິ່ງຕາຕະລາງ 9 ດ້ານລຸ່ມ ສໍາລັບຂໍ້ມູນຂ່າວສານເພີ່ມ). ການປຶກສາຫາລື ກັບຊົນເຜົ່າ, ນັກທຸລະກິດໜຸ່ມ (ບາງຄົນ ແມ່ນໄດ້ຮັບການສະໜັບສະໜູນຊ່ວຍເຫຼືອ ຈາກແຜນງານພັດທະນາການດໍາລົງຊີວິດໃນເຂດພູດອຍແລະຊົນນະບົດ ພາຍໄຕ້ SDC/FAO ທີ່ໄດ້ໃຫ້ທຶນແກ່ກິດຈະກໍາ ແຕ່ຕົ້ນປີ 2020 ໃນຖານະເປັນສ່ວນໜຶ່ງຂອງແຜນຕອບໂຕ້ກັບພະຍາດລະບາດ Covid-19) ແລະຊາວໜຸ່ມວ່າງງານ, ຊຶ່ງໄດ້ສະແດງໃຫ້ເຫັນວ່າທຸລະກິດກະສິກໍາຂະໜາດນ້ອຍ ທີ່ແນໃສ່ຕະຫຼາດໃນທ້ອງຖິ່ນ, ໂດຍສະເພາະ ຜະລິດຕະພັນອາຫານ ແມ່ນດໍາເນີນໄປໄດ້ດີຫຼາຍ. ນັກທຸລະກິດໜຸ່ມທຸກຄົນ ໄດ້ກ່າວວ່າ ມີຄວາມຕ້ອງການຜະລິດຕະພັນອາຫານສູງ ເຊັ່ນ ເປັດໄກ່, ປາ/ກົບ, ໝູ, ງົວ, ຜັກ ແລະອື່ນໆ ໃນຕະຫຼາດທ້ອງຖິ່ນ ທັງ ຢູ່ນະຄອນຫຼວງວຽງຈັນ ແລະຢູ່ແຂວງຕ່າງໆ. ໃນສອງປີຜ່ານມາ, ການລະບາດຂອງພະຍາດ COVID-19 ໄດ້ເຮັດໃຫ້ຄົນບໍ່ສາມາດເດີນທາງລະຫວ່າງແຂວງ, ປັດໃຈນີ້ໄດ້ນໍາໄປສູ່ ການຂາດເຂີນອາຫານ, ການສະໜອງອາຫານແມ່ນຈໍາກັດ ແລະສ້າງຄວາມກົດດັນດ້ານຄວາມຕ້ອງການສູງ ແກ່ຜູ້ຜະລິດໃນທ້ອງຖິ່ນ. ນອກກນັ້ນ, ຍັງໄດ້ຮັບຊາບວ່າ ທຸລະກິດກະສິກໍາ ຊຶ່ງແນໃສ່ຕະຫຼາດຕ່າງປະເທດ ແລະ/ຫຼື ເອື່ອຍອີງນັກທ່ອງທ່ຽວ ແມ່ນພວມປະເຊີນສິ່ງທ້າທາຍໃຫ່ຍ ແລະບາງທຸລະກິດກໍ່ໄດ້ປິດໂຕລົງ. ຍົກຕົວຢ່າງ: ມີໜຶ່ງຄົນ ທີ່ເຮັດທຸລະກິດໝາກໄມ້ກວນໃນທ້ອງຖິ່ນ ແມ່ນພວມປິດກິດຈະການ ຍ້ອນບໍ່ສາມາດຫາລູກຄ້າໃນທ້ອງຖິ່ນໄດ້.

ການສົນທະນາກັບໄວໜຸ່ມທີ່ວ່າງງານ ໃຫ້ຮູ້ວ່າ ເຂົາເຈົ້າຈໍານວນຫຼາຍ ແມ່ນສົນໃຈ ຮຽນວິຊາການເງິນ ແລະບໍລິຫານທຸລະກິດ, IT ແລະພາສາອັງກິດ ຍ້ອນຕ້ອງການເຮັດວຽກໃນຂະແໜງບໍລິການ. ມີຈໍານວນບໍ່ຫຼາຍ ທີ່ບອກວ່າ ຢາກຮຽນກະສິກໍາ ແລະບໍ່ມີໃຜເວົ້າເຖິງວິຊາທີ່ພົວພັນກັບໂລຈິສຕິກ. ມີຈໍານວນຫຼາຍ ທີ່ເວົ້າກ່ຽວກັບຄວາມຕ້ອງການຢາກຮຽນ ກ່ຽວກັບ IT ເຊັ່ນ ຄວາມຮູ້ພື້ນຖານດ້ານຄອມພິວເຕີ, ການອອກແບບກຼາຟິກ, ຄຼິບໂຄສະນາສັ້ນ (ເຊັ່ນ: ໂຄສະນາໃນແຟສບຸກ ຫຼື ຢູທູບ). ຜູ້ເຂົ້າຮ່ວມໃນການປຶກສາຫາລືທຸກຄົນ ບອກວ່າເຂົາເຈົ້າຮູ້ຈັກເຄື່ອງມືສື່ສານພື້ນຖານ ເຊັ່ນ: ແຟສບຸກ ແລະວອດແອບ, ແຕ່ ສ່ວນໃຫ່ຍບໍ່ຄຸ້ນເຄີຍກັບ ລະບົບ Zoom, MS Team, Google Meet.

ໃນເວລາທີ່ໄດ້ຮັບການແຈ້ງກ່ຽວກັບໂອກາດ ທີ່ເປັນໄປໄດ້ ພາຍໄຕ້ໂຄງການນີ້, ແລະມີການສອບຖາມກ່ຽວກັບຄວາມກັງວົນ ທີ່ເປັນໄປໄດ້, ຜູ້ໃຫ້ສໍາພາດ ມີຄໍາເຫັນດັ່ງຕໍ່ໄປນີ້:

- ບໍ່ຮູ້ ກ່ຽວກັບໂອກາດ ຍ້ອນບໍ່ຮູ້ ວ່າ ແມ່ນໃຜ ແລະ/ຫຼື ຈະໄດ້ຮັບຂໍ້ມູນຈາກໃຜ.
- ເຂົາເຈົ້າຈະບໍ່ຖືກຄັດເລືອກ ຖ້າບໍ່ຈ້າງເງິນ ໃນຂັ້ນຕອນການຄັດເລືອກ.
- TVET ຈະຄັດເລືອກເອົາແຕ່ຄົນທີ່ເຂົາເຈົ້າຮູ້ຈັກເທົ່ານັ້ນ.
- ສູນຝຶກອົບຮົມ ໄກຈາກບ້ານເກີນໄປ

- ບໍ່ມີເງິນຄ່າກິນ ແລະທີ່ພັກ ໃນໄລຍະຝຶກອົບຮົມ
- ບໍ່ມີພີ່ນ້ອງ ຢູ່ໃນເມືອງ ທີ່ມີການຝຶກອົບຮົມແບບບໍ່ເສຍຄ່າ (ຄົນຊົນນະບົດ ສ່ວນໃຫ່ຍ ຈະພັກເຊົາກັບພີ່ນ້ອງ ໃນເວລາເຂົ້າມາໃນໂຕເມືອງ ເພື່ອມາຫຼິ້ນ ຫຼື ມາເພື່ອຈຸດປະສົງອື່ນ ເຊັ່ນ: ມາຮຽນ)

ຂໍ້ສະເໜີ ຂອງເຂົາເຈົ້າ ໃນການສະໜອງ ແລະເຮັດໃຫ້ຂໍ້ມູນເຂົ້າເຖິງໄດ້ ລວມມີ:

- ແຈ້ງອຳນາດການປົກຄອງບ້ານ ເພື່ອໃຫ້ປະກາດຢູ່ບ້ານ
- ສື່ສານຜ່ານໂຮງຮຽນ ແລະວິທະຍາໄລໃນທ້ອງຖິ່ນ
- ຕິດປະກາດໃນກະດານຂ່າວ
- ສື່ສານກັບບຸກຄົນ (ປາກຕໍ່ປາກ ເຊັ່ນ: ທາງແຟສບຸກລິງ, ການສົ່ງຂ່າວ ແລະອື່ນໆ)
- ປະກາດໃນແຟສບຸກຂອງວິທະຍຸຊາວໜຸ່ມລາວ ແລະວິດທະຍຸຊາວໜຸ່ມ FM 90.0 Mhz ແລະສື່ມວນຊົນທ້ອງຖິ່ນອື່ນໆ
- ເວັບໄຊ ແລະແຟສບຸກ ຂອງTVET ແລະ MoES ແລະ MoLSE

ເພື່ອແກ້ໄຂບັນຫາເຫຼົ່ານີ້, MoES, MoLSW ແລະ TVET ໄດ້ແຈ້ງ ວ່າ TVET ພວມມີການດຳເນີນງານພາຍໃຕ້ການຊີ້ນຳ ຂອງ MoES, ເຂົາຕ້ອງປະຕິບັດຕາມຂໍ້ກຳນົດພື້ນຖານ ທີ່ກຳນົດ ໂດຍລັດຖະບານ ໃນດ້ານ (i) ໂຄງຮ່າງການຈັດຕັ້ງ, (ii) ສິ່ງອຳນວຍຄວາມສະດວກການຮຽນການສອນ, (iii) ຫຼັກສູດການຮຽນການສອນ, (iv) ຫໍພັກນັກຮຽນ, ຊຶ່ງທຸກແຫ່ງລາຍງານວ່າ ມີອາຫານ ແລະມີຫໍພັກສຳລັບນັກຮຽນຍິງ ແລະມີສິ່ງອຳນວຍຄວາມສະດວກ ແລະເຄື່ອງຮັບໃຊ້ພື້ນຖານ, ພ້ອມທັງ ມີລະບຽບການກ່ຽວກັບສຸຂະພາບ ແລະຄວາມປອດໄພ/ສຸກເສີນ. TVET ທຸກແຫ່ງທີ່ໄດ້ປຶກສາຫາລືນຳ ບອກວ່າ ເຂົາເຈົ້າມີປຶດແນະນຳ/ຄູ່ມື ກ່ຽວກັບຂະບວນການຄັດເລືອກນັກຮຽນທີ່ເປັນທຳ. ສູນຝຶກອົບຮົມບາງແຫ່ງ ບອກວ່າ ເຂົາເຈົ້າຍັງມີນະໂຍບາຍ ທີ່ເຮັດໃຫ້ແມ່ຍິງ ແລະນັກຮຽນ ທີ່ມາຈາກຊົນນະບົດ ແລະເປັນຊົນເຜົ່າ ແລະນັກຮຽນດ້ອຍໂອກາດອື່ນ ສາມາດເຂົ້າເຖິງຂໍ້ມູນຂ່າວສານ ແລະສິ່ງອຳນວຍຄວາມສະດວກຕ່າງໆ ຕາມຄວາມຕ້ອງການ. TVET ບາງແຫ່ງທີ່ໄດ້ປຶກສາຫາລືນຳ ເຊັ່ນ ໂຮງຮຽນປາກປາສັກ, ໂຮງຮຽນເຕັກນິກລາວເຍຍລະມັນ, ໂຮງຮຽນເຕັກນິກວຽງຈັນ ຢູ່ແຂວງວຽງຈັນ ບອກວ່າ ໄດ້ແຈ້ງກ່ຽວກັບຄູ່ມືຄວາມປອດໄພ/ສຸກເສີນ ທີ່ສ້າງໂດຍການສະໜອງທຶນ ຂອງ ADB. ຂໍ້ມູນຈາກການປຶກສາຫາລື ໄດ້ຖືກລວມເຂົ້າໃນ ESMF ແລະການອອກແບບວິທີການເຂົ້າຮ່ວມໃນພາກ 6 ແລະ 7 ຂ້າງເທິງ.

*Error! Reference source not found.* ລຸ່ມນີ້ ສະແດງໃຫ້ເຫັນ ຂະບວນການປຶກສາຫາລື ແລະເປີດເຜີຍຂໍ້ມູນ ສຳລັບເອກະສານດ້ານສິ່ງແວດລ້ອມ ແລະສັງຄົມ (E&S) ຈົນເຖິງມື້ນີ້ມີຜົນສັກສິດຂອງໂຄງການ.

ຈະມີໜ່ວຍງານປະສານງານໂຄງການ(PCU) ພາຍໃຕ້TVED/MoES, ຊຶ່ງມີບົດບາດໃນການປະສານງານ ສຳລັບໂຄງການ ແລະປະສານ ກັບທະນາຄານໂລກ ແລະອົງການກ່ຽວຂ້ອງອື່ນ ພ້ອມທັງ ຮັບຜິດຊອບການປຶກສາຫາລື ແລະສ້າງການຄຸ້ມຄອງ ແລະຕິດຕາມກວດກາຄວາມສ່ຽງດ້ານສິ່ງແວດລ້ອມ ຂອງໂຄງການ. ໜ້າທີ່ຕົ້ນຕໍ ຂອງ PCU ມີ:

- ປະສານການກະກຽມ ແລະປັບປຸງ PIM ແລະຂໍອະນຸມັດ ຈາກທະນາຄານໂລກ;
- ຮັບປະກັນວ່າມີການປະຕິບັດຕາມ ນະໂຍບາຍ ແລະຍຸດທະສາດຕ່າງໆ ດັ່ງທີ່ລະບຸໄວ້ ໃນ PIM ໃນໄລຍະການປະຕິບັດໂຄງການ ແລະຂໍທິດຊີ້ນຳ ຈາກ PSC ກ່ຽວກັບບັນຫາການຈັດຕັ້ງປະຕິບັດ ທີ່ຊັບຊ້ອນ ອີງຕາມຄວາມຈຳເປັນ;
- ຮັບປະກັນວ່າ ທັງສອງກະຊວງທີ່ເປັນຜູ້ປະຕິບັດໂຄງການ ມີການເຮັດວຽກຕາມກຳນົດເວລາ ແລະອີງຕາມແຜນການດຳເນີນງານ ທີ່ຕົກລົງເຫັນດີນຳກັນ;
- ປະສານລະຫວ່າງກະຊວງຜູ້ປະຕິບັດໂຄງການ, PSC ແລະທະນາຄານໂລກ, ແລະແຈ້ງໃຫ້ຊາບກ່ຽວກັບທຸກບັນຫາສຳຄັນ ຂອງໂຄງການ;

- ສັງລວມ ແຜນວຽກ ແລະແຜນງົບປະມານປະຈໍາປີ ໂດຍແຕ່ລະກະຊວງຜູ້ປະຕິບັດໂຄງການ, ສັງລວມແຜນ ແລະ ງົບປະມານ ເຂົ້າໃນແຜນວຽກ ແລະງົບປະມານ ປະຈໍາປີ ຂອງໂຄງການ, ແລະຂໍການອະນຸມັດ ຈາກ PSC ແລະ ທະນາຄານໂລກ;
- ຕິດຕາມການປະຕິບັດໂຄງການ, ພັນທະ ແລະການເບີກຈ່າຍເງິນ ທີ່ໄດ້ຮັບການທຶນ ໂດຍແຕ່ລະກະຊວງທີ່ເປັນຜູ້ປະຕິບັດ ໂຄງການ;
- ຊີ້ນໍາການປະຕິບັດຕາມສັນຍາທາງກົດໝາຍ ແລະປະຕິບັດຕາມຈຸດປະສົງ ແລະໂຕຊີ້ວັດການປະຕິບັດງານ;
- ປະສານການກະກຽມບົດລາຍງານຄວາມຄືບໜ້າທຸກ 6 ເດືອນ ກັບກະຊວງທີ່ເປັນຜູ້ປະຕິບັດໂຄງການ ແລະສົ່ງໃຫ້ຜູ້ ຕັດສິນບັນຫາ ແລະທະນາຄານໂລກ ຕາມກໍານົດເວລາ;
- ປະສານການກະກຽມການກວດສອບປະຈໍາປີ ແລະການປະຕິບັດໂຄງການກັບ ກະຊວງທີ່ເປັນຜູ້ປະຕິບັດໂຄງການ;
- ປະສານການຝຶກອົບຮົມ ກ່ຽວກັບທຸກຫົວຂໍ້ກ່ຽວກັບການຄຸ້ມຄອງໂຄງການ ໃຫ້ແກ່ກະຊວງທີ່ເປັນຜູ້ປະຕິບັດໂຄງການ; ແລະ
- ຊ່ວຍເຫຼືອ ແລະປະສານ ທຸກອົງປະກອບຂອງໂຄງການ ເພື່ອຮັບປະກັນ ວ່າໂຄງການຈະບັນລຸ PDO ຂອງຕົນ ແລະ ເຮັດສໍາເລັດຕາມກໍານົດເວລາ ແລະໃຊ້ຈ່າຍໃນຂອບງົບປະມານ.

ຕາຕະລາງ **5**: ການປຶກສາຫາລື ແລະການເຜີຍແຜ່ເອກະການດ້ານສິ່ງແວດລ້ອມ ແລະສັງຄົມ ຈົນກວ່າຈະເຖິງມື້ມີຜົນສັກສິດ ຂອງໂຄງການ

| ປຶກສາກ່ຽວກັບບັນຫາໃດ | ປຶກສາຫາກັບໃຜ | ເຮັດຕອນໃດ | ເຮັດກັບພາກສ່ວນໃດ | ເຮັດວິທີໃດ |
|---|---|---|---|---|
| ປຶກສາຫາລື ກັບສູນໂຮງຮຽນ ຫຼື ສູນຝຶກອົບຮົມວິຊາຊີບ:<br>- ໂຄງຮ່າງການຈັດຕັ້ງ ແລະການຄຸ້ມຄອງ ໂຮງຮຽນຫຼື<br>- ສູນຝຶກອົບຮົມ<br>- ການຄຸ້ມຄອງສິ່ງເສດເຫຼືອ, ສຸຂາອະນາໄມ ແລະນໍ້າ ແລະສູຂາພິບານ ຢູ່ໂຮງຮຽນຫຼືສູນ<br>- ວິທີການເຂົ້າຫາ (ນັກຮຽນ, ພາກເອກະຊົນ)<br>- ຫຼັກສູດຝຶກອົບຮົມ ທັກສະ ແລະແນວຄວາມຄິດຂອງການຝຶກອົບຮົມ | TVED/MOES<br>SDED/MOLSW<br>ທີ່ປຶກສາດ້ານE&S | 4-12 ຕຸລາ 2021<br><br>ສໍເລັດແລ້ວ | TVETs (ນະຄອນຫຼວງວຽງຈັນ, ຊຽງຂວາງ, ຫຼວງພະບາງ, ຄໍາມ່ວນ, ປາກເຊ...) | ກອງປະຊຸມກຸ່ມ ທາງອອນລາຍ ກັບຜູ້ເຂົ້າຮ່ວມທຸກຄົນ<br>ຕອບແບບສອບຖາມເປັນລາຍລັກອັກສອນ |

| ປຶກສາກ່ຽວກັບບັນຫາໃດ | ປຶກສາຫາກັບໃຜ | ເຮັດຕອນໃດ | ເຮັດກັບພາກສ່ວນໃດ | ເຮັດວິທີໃດ |
|---|---|---|---|---|
| - ບາງວຽກກໍ່ສ້າງຂະໜາດນ້ອຍ ທີ່ຄາດວ່າຈະມີ ຊຶ່ງໄດ້ຮັບທຶນພາຍໃຕ້ໂຄງການ<br>- ລະບຽບການ ແລະຄູ່ມືທີ່ມີກ່ຽວກັບການຈັດຊື້ຈັດຈ້າງ, ສຸຂະພາບ ແລະ ຄວາມປອດໄພ<br>- ມາດຕະການສຸກເສີນ<br>- ມາດຕະການດ້ານ COVID-19 | | | | |
| ປຶກສາຫາລືກັບຜູ້ມີສ່ວນຮ່ວມອື່ນ ກ່ຽວກັບການພັດທະນາທັກສະ, ໄວໜຸ່ມ ແລະໂອກາດໃນການເຮັດວຽກ:<br>- ຈຸດປະສົງໂຄງການ, ໂຄງຮ່າງການຈັດຕັ້ງ, ອົງປະກອບ, ລະບົບການວາງແຜນ,<br>- ການປະເມີນຜົນທາງສິ່ງແວດລ້ອມ ແລະ ສັງຄົມ<br>- ບົດຮຽນທີ່ຖອດຖອນໄດ້ ຈາກໂຄງການທີ່ຄ້າຍຄືກັນ (ການສົ່ງເສີມ/ການມີສ່ວນຮ່ວມ ຂອງໄວໜຸ່ມໃນຄວາມຮູ້ດ້ານວິຊາການ ແລະການພັດທະນາທັກສະ)<br>- ການຫຼຸດຜ່ອນຄວາມສ່ຽງ ແລະຜົນກະທົບ, ຊຶ່ງເໜັ້ນບັນຫາຕ່າງໆ ທີ່ອາດກະທົບກຸ່ມຄົນດ້ອຍໂອກາດ ແລະ ທຸກຍາກ | ທີ່ປຶກສາ E&S | 25 ກັນຍາ ຫາ 18 ຕຸລາ 2021<br><br>ສໍາເລັດແລ້ວ | ອົງການຈັດຕັ້ງປະຕິບັດ<br><br>ອົງການຈັດຕັ້ງຂອງລັດ<br><br>ຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ<br><br>TVET (8 ແຫ່ງ)<br><br>ທຸລະກິດຂະໜາດນ້ອຍ ແລະ ນັກທຸລະກິດໜຸ່ມ<br><br>ນັກຮຽນຢູ່ວຽງຈັນ ແລະບາງແຂວງ<br><br>ຄົນໜຸ່ມທີ່ບໍ່ມີວຽກເຮັດຢູ່ວຽງຈັນ ແລະບາງແຂວງ<br><br>SCOs/ບຸກຄົນ ແລະສື່ມວນຊົນ ທີ່ເຮັດວຽກໂດຍກົງກັບໄວໜຸ່ມ ແລະການພັດທະນາທັກສະ | ສໍາພາດທາງໂທລະສັບ.<br><br>ສົ່ງຂໍ້ຄວາມທາງວອດແອບ<br><br>ປຶກສາຫາລືກັນແບບສອງຝ່າຍທາງໂທລະສັບ<br><br>ຕິດຕໍ່ພົວພັນທາງອີເມລ |

| ປຶກສາກ່ຽວກັບບັນຫາໃດ | ປຶກສາຫາລືກັບໃຜ | ເຮັດຕອນໃດ | ເຮັດກັບພາກສ່ວນໃດ | ເຮັດວິທີໃດ |
|---|---|---|---|---|
| - ມາດຕະການຕ່າງໆ ທີ່ປະຕິບັດເພື່ອຫຼີກລ້ຽງ ແລະຫຼຸດຜ່ອນຄວາມສ່ຽງ | | | | |
| ກອງປະຊຸມປຶກສາພາຍໃນກັບບັນດາກົມຂອງ MOES ກ່ຽວກັບຜົນໄດ້ຮັບໃນເບື້ອງຕົ້ນ ແລະ ແຜນການຫຼຸດຜ່ອນ<br>ປຶກສາຮ່າງສະບັບທໍາອິດ ແລະ ຮັບຄໍາຄິດຄໍາເຫັນ | TVED/MOES<br>SDED/MOLSW<br>ທີ່ປຶກສາ E&S | 1 ພະຈິກ 2021<br>ສໍາເລັດແລ້ວ | ອົງການຈັດຕັ້ງປະຕິບັດ-TVED<br>ອົງການຈັດຕັ້ງຂອງລັດ<br>ຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ<br>TVET (8 ແຫ່ງ) | ກອງປະຊຸມກຸ່ມທາງອອນລາຍ |
| ແຈກຢາຍຮ່າງສະບັບເຄິ່ງສົມບູນ ແລະສົ່ງໃຫ້ຫົວໜ້າກົມ ຂອງ MOES ແລະຮັບເອົາຄໍາຄິດຄໍາເຫັນ<br>ແຈກຢາຍສະຫຼຸບ E&S ທີ່ເປັນພາສາລາວໃຫ້ຜູ້ມີສ່ວນຮ່ວມ ແລະຮັບເອົາຄໍາຄິດຄໍາເຫັນ | PCU/TVED/MOES<br>ທີ່ປຶກສາ E&S | 1-5 ພະຈິກ 2021<br>ສໍາເລັດແລ້ວ | TVED/MOES<br>SDED/MOLSW | Zoom<br>ອີເມລ<br>ອອດແອບ<br>ໂທລະສັບມືຖື |
| ESCP, ESMF ແລະ SEP ສະບັບສຸດທ້າຍ | PCU/TVED/MOES<br>ທີ່ປຶກສາ E&S | 8 ພະຈິກ 2021<br>ສໍາເລັດແລ້ວ | TVED/MOES<br>SDED/MOLSW<br>TVETs<br>ສູນຈັດຫາເງິນ | ກອງປະຊຸມເຜີຍແຜ່ກ່ຽວກັບ E&S ທາງອອນລາຍ |
| ESCP, ESMF ແລະ SEP ສະບັບສຸດທ້າຍ | PCU/TVED/MOES | | ຜູ້ມີສ່ວນຮ່ວມທຸກຄົນ ແລະ ມວນຊົນທົ່ວໄປ | ລົງໃນເວັບໄຊ ໂຄງການ ຂອງ MoES |
| ESCP, ESMF ແລະ SEP ສະບັບສຸດທ້າຍ | PCU/TVED/MOES | ພາຍຫຼັງມື້ມີຜົນສັກສິດຂອງໂຄງການ | ອົງການຈັດຕັ້ງປະຕິບັດ | ເອກະສານ/ສໍາເນົາສົ່ງໃຫ້ທີ່ຕັ້ງໂຄງການຍ່ອຍ |

# 10. ກົນໄກແກ້ໄຂການຮ້ອງທຸກ

ກົນໄກການແກ້ໄຂການຮ້ອງທຸກຂອງໂຄງການ (GRM) ແມ່ນຂະບວນການທີ່ມີໂຄງສ້າງ, ເຊິ່ງມີຈຸດປະສົງເພື່ອແກ້ໄຂຄໍາຮ້ອງທຸກທີ່ເກີດຂຶ້ນໃນລະຫວ່າງການຈັດຕັ້ງປະຕິບັດໂຄງການ, ແລະ ດໍາເນີນການໄດ້ທັນທີ, ຍຸດຕິທໍາ ແລະ ບໍ່ເສຍຄ່າ. ບົດຮຽນທີ່ຖອດຖອນໄດ້ຈະຖືກນໍາໃຊ້ເພື່ອປັບປຸງຂັ້ນຕອນການດໍາເນີນງານ ແລະ ການປະຕິບັດເພື່ອຫຼີກເວັ້ນບັນຫາທີ່ຄ້າຍຄືກັນທີ່ເກີດຂຶ້ນ.

**ເມື່ອຮັບ ແລະ ຕອບຄໍາຮ້ອງທຸກ, ຫຼັກການທົ່ວໄປຕໍ່ໄປນີ້ຖືກຈະນໍາມາໃຊ້:**

- ການຮ້ອງທຸກສາມາດສົ່ງເປັນລາຍລັກອັກສອນ ຫຼື ດ້ວຍວາຈາ, ແຕ່ການຕື່ມຂໍ້ມູນລົງໃນແບບຟອມການລົງທະບຽນຈະຕ້ອງສໍາເລັດ. ຖ້າຜູ້ຮ້ອງຮຽນບໍ່ສາມາດອ່ານ ຫຼື ຂຽນໄດ້, ຕົວແທນໂຄງການຜູ້ຮັບຄໍາຮ້ອງທຸກຈະຊ່ວຍຕື່ມແບບຟອມຄໍາຮ້ອງທຸກ. ຜູ້ຮ້ອງຮຽນຈະໄດ້ຮັບ 'ໃບເຊັດການຮັບ' ຢືນຢັນວ່າການຮ້ອງທຸກຂອງເຂົາເຈົ້າແມ່ນໄດ້ຖືກຮັບແລ້ວ.
- ໃນທຸກຂັ້ນຕອນ, ຜູ້ຮ້ອງຮຽນສາມາດມອບໝາຍໃຫ້ສະມາຊິກຄອບຄົວ ຫຼື ຜູ້ຕາງໜ້າຄົນອື່ນໆເຮັດໜ້າທີ່ແທນເຂົາເຈົ້າ
- ທຸກການຮ້ອງທຸກ - ໄດ້ຮັບໂດຍທຸກຊ່ອງທາງການລາຍງານ - ຈະຖືກລາຍງານໃຫ້ຜູ້ປະສານງານ GRM ທີ່ MOES/MoLSW, ເຊິ່ງເປັນຜູ້ທີ່ຈະເກັບຮັກສາປຶ້ມບັນທຶກການຮ້ອງທຸກ.
- ແຕ່ລະຄໍາຮ້ອງທຸກຈະຖືກບັນທຶກໄວ້ຢ່າງຄົບຖ້ວນພ້ອມດ້ວຍລາຍງານຂອງການປຶກສາຫາລື ແລະ ຜົນສຸດທ້າຍ. ຢ່າງໃດກໍ່ຕາມ, ຂໍ້ມູນກ່ຽວກັບການຮ້ອງທຸກ ແລະ ບຸກຄົນທີ່ຍື່ນຄໍາຮ້ອງທຸກແມ່ນຈະເປັນຄວາມລັບ.
- ແຕ່ລະຂັ້ນຕອນໃນຂະບວນການຮ້ອງທຸກແມ່ນມີເວລາຈໍາກັດ, ເພື່ອຈັດລໍາດັບຄວາມສໍາຄັນໃນການແກ້ໄຂບັນຫາຢ່າງທັນການ.
- ຂໍ້ມູນກ່ຽວກັບ GRM ໄດ້ຖືກເຜີຍແຜ່ຢ່າງເປີດເຜີຍໃນລະຫວ່າງກອງປະຊຸມປຶກສາຫາລືໂຄງການ ແລະ ຜ່ານປ້າຍໂຄສະນາຢູ່ສູນຝຶກອົບຮົມ, ສູນວຽກ, ຫ້ອງການເມືອງ ແລະ ແຂວງ.
- ການຮ້ອງທຸກຈະຖືກແກ້ໄຂໂດຍການປະເມີນຄວາມຖືກຕ້ອງຂອງຄໍາຮ້ອງທຸກ, ກໍານົດມາດຕະການແກ້ໄຂທີ່ເໝາະສົມ, ປຶກສາຫາລືກັບຜູ້ຮ້ອງທຸກ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ.
- ຂໍ້ມູນກ່ຽວກັບ GRM ໄດ້ຖືກເຜີຍແຜ່ຢ່າງເປີດເຜີຍໃນລະຫວ່າງກອງປະຊຸມປຶກສາຫາລືໂຄງການ ແລະ ຜ່ານປ້າຍໂຄສະນາຢູ່ສູນຝຶກອົບຮົມ, ສູນວຽກ, ຫ້ອງການເມືອງ ແລະ ແຂວງ.
- GRM ມີຫຼາຍລະດັບຂອງການຍົກຂຶ້ນ. ຄໍາຮ້ອງທຸກຈະຖືກສົ່ງໄປຫາລະດັບຕໍ່ໄປຖ້າກໍລະນີບໍ່ສາມາດແກ້ໄຂໄດ້ໃນລະດັບໜຶ່ງພາຍໃນໄລຍະເວລາທີ່ກໍານົດ, ຫຼື ຖ້າການແກ້ໄຂທີ່ສະເໜີບໍ່ໄດ້ຮັບການຍອມຮັບຈາກຜູ້ຮ້ອງທຸກ.
- ກໍລະນີທີ່ກ່ຽວຂ້ອງກັບ GBV/SEA ຈະຖືກສົ່ງໄປຫາສະຫະພັນແມ່ຍິງລາວ (LWU) ໃນຖານະຜູ້ໃຫ້ບໍລິການບຸກຄົນທີ່ສາມທີ່ເປັນຜູ້ຊ່ຽວຊານສະເພາະດ້ານ.
- ຖ້າຄໍາຮ້ອງທຸກກ່ຽວຂ້ອງກັບການຈໍາແນກຊົນເຜົ່າ, ຕົວແທນຂອງສູນກາງແນວລາວສ້າງຊາດ (LFNC) ຈະຖືກຮ້ອງຂໍໃຫ້ມີສ່ວນຮ່ວມໃນການແກ້ໄຂກໍລະນີ. (LFNC ມີອໍານາດໃນການເປັນຕົວແທນໃຫ້ແກ່ກຸ່ມຊົນເຜົ່າກຸ່ມໜ້ອຍ).
- ຄະດີອາຍາຈະຖືກສົ່ງໃຫ້ໄອຍະການປະຊາຊົນ.
- GRM ແມ່ນບໍ່ເສຍຄ່າໃຊ້ຈ່າຍສໍາລັບຜູ້ໃຊ້; ໂຄງການຈະເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ ແລະ ຄ່າໃຊ້ຈ່າຍທັງໝົດ.
- ເມື່ອຄໍາຮ້ອງທຸກໄດ້ຮັບການແກ້ໄຂ, ຜູ້ທີ່ໄດ້ຮັບຄວາມເດືອດຮ້ອນຈະໄດ້ຮັບການແຈ້ງກ່ຽວກັບຜົນການແກ້ໄຂ.
- GRM ຂອງໂຄງການມີຈຸດປະສົງເພື່ອສະໜອງວິທີການທີ່ຍຸດຕິທໍາ, ໂປ່ງໃສ ແລະ ເຂົ້າເຖິງເພື່ອແກ້ໄຂຄໍາຮ້ອງທຸກ. ຢ່າງໃດກໍ່ຕາມ, ມັນບໍ່ໄດ້ປ້ອງກັນບໍ່ໃຫ້ຜູ້ຮ້ອງຮຽນຊອກຫາການແກ້ໄຂໂດຍຜ່ານຂະບວນການບໍລິຫານ ຫຼື ສານຕັດສິນອື່ນໆ, ລວມທັງການຮ້ອງຟ້ອງຕໍ່ສານ.
- ການຝຶກອົບຮົມກ່ຽວກັບ GRM ຈະຖືກສະໜອງໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງໃນລະຫວ່າງການຈັດຕັ້ງປະຕິບັດໂຄງການ.

GRM ໄດ້ຖືກອອກແບບມາເພື່ອຕອບສະໜອງຄໍາຮ້ອງທຸກທີ່ມີທ່າແຮງໃນຫຼາຍໆຫົວຂໍ້ທີ່ກ່ຽວກັບອົງປະກອບຂອງໂຄງການທີ່ແຕກຕ່າງກັນ. ບາງບັນຫາທີ່ອາດຈະເຮັດໃຫ້ເກີດການຮ້ອງທຸກແມ່ນໄດ້ອະທິບາຍໄວ້ໃນຕາຕະລາງ 10.

ຕາຕະລາງທີ່ **6**: ການຮ້ອງທຸກທີ່ເປັນໄປໄດ້ **(Potential Grievances)**

| **ອົງປະກອບໂຄງການ**<br>**Project component** | **ປະເພດການຮ້ອງທຸກທີ່ອາດຈະເກີດຂຶ້ນ**<br>**Potential Types of Grievance** | **ບຸກຄົນທີ່ອາດໄດ້ຮັບຜົນກະທົບ**<br>**Potential affected persons** |
|---|---|---|
| ອົງປະກອບທີ 1: ປັບປຸງຄຸນນະພາບ ແລະ ຄວາມ | • ການເລືອກປະຕິບັດ/ການຍົກເວັ້ນ ຫຼື ອຸປະສັກອື່ນໆທີ່ນັກຮຽນປະເຊີນກັບການລົງທະບຽນ, ການເຂົ້າເຖິງທຶນ | • ນັກສຶກສາ, ຜູ້ສະໝັກ ແລະ ພໍ່ແມ່ຂອງເຂົາເຈົ້າ. |

| ອົງປະກອບໂຄງການ<br>Project component | ປະເພດການຮ້ອງທຸກທີ່ອາດຈະເກີດຂຶ້ນ<br>Potential Types of Grievance | ບຸກຄົນທີ່ອາດໄດ້ຮັບຜົນກະທົບ<br>Potential affected persons |
|---|---|---|
| ກ່ຽວຂ້ອງຂອງແຜນງານຝຶກອົບຮົມທັກສະ | ການສຶກສາ, ການເສັງເຂົ້າສອບເສັງ, ການໃຫ້ລາງວັນ/ໃບປະກາດສະນີຍະບັດ, ແລະ ການແນະນຳອາຊີບ.<br>• ການຮ້ອງຮຽນກ່ຽວກັບເງື່ອນໄຂການເຮັດວຽກ, ເງິນເດືອນ ຫຼື ຜົນປະໂຫຍດຂອງຄູ, ພະນັກງານລັດຖະກອນ ແລະ ພະນັກງານໂຄງການອື່ນໆ.<br>• ຄວາມຮຸນແຮງຕາມເພດ (GBV), ການຂູດຮີດທາງເພດ ແລະ ການລ່ວງລະເມີດທາງເພດ (SEA) ທີ່ສົ່ງຜົນກະທົບຕໍ່ນັກຮຽນ ຫຼື ຄູສອນ.<br>• ຜົນກະທົບ ຫຼື ການລົບກວນຈາກການປັບປຸງໂຄງສ້າງພື້ນຖານທີ່ສົ່ງຜົນກະທົບຕໍ່ນັກຮຽນ, ຄູສອນ ຫຼື ຊຸມຊົນທ້ອງຖິ່ນ. | • ຄູ ແລະ ພະນັກງານຂອງ MoES, PESS, DESB, TVET.<br>• ພະນັກງານຮັບເໝົາວຽກໂຍທາ/ແຮງງານ.<br>• ຊຸມຊົນທ້ອງຖິ່ນ |
| ອົງປະກອບທີ 2: ເພີ່ມທະວີການຈັບຄູ່ວຽກ ແລະ ຄວາມສາມາດໃນການຈ້າງງານຂອງໄວໜຸ່ມ | • ການເລືອກປະຕິບັດ / ການກີດກັນ ຫຼື ອຸປະສັກອື່ນໆທີ່ຜູ້ຊອກຫາວຽກປະເຊີນໜ້າໃນຂະນະທີ່ນຳໃຊ້ການບໍລິການຂອງສູນການຈ້າງງານ, ລວມທັງການລົງທະບຽນເປັນຜູ້ຊອກຫາວຽກ, ການສະໝັກວຽກ, ການໄດ້ຮັບການຊ່ວຍເຫຼືອສຳລັບການຈ້າງງານຂອງຕົນເອງ, ແລະ ເງື່ອນໄຂການຈ້າງງານທີ່ບໍ່ສະເໝີພາບ.<br>• ການເລືອກປະຕິບັດ / ການກີດກັນ ຫຼື ສິ່ງກີດຂວາງອື່ນໆທີ່ນັກຮຽນ/ຜູ້ສະໝັກຢູ່ສູນຝຶກອົບຮົມປະເຊີນກັບການລົງທະບຽນ, ການເຂົ້າເຖິງເງິນອຸດໜູນ, ເຄື່ອງໝາຍວິຊາ ແລະ ໃບຢັ້ງຢືນ, ແລະ ການແນະນຳອາຊີບ.<br>• ການຮ້ອງຮຽນກ່ຽວກັບເງື່ອນໄຂການເຮັດວຽກ, ເງິນເດືອນ ຫຼື ຜົນປະໂຫຍດຂອງຄູ, ພະນັກງານລັດຖະກອນ ແລະ ພະນັກງານໂຄງການອື່ນໆ.<br>• ຄວາມຮຸນແຮງທາງເພດ (GBV), ການຂູດຮີດທາງເພດ ແລະ ການລ່ວງລະເມີດທາງເພດ (SEA) ທີ່ສົ່ງຜົນກະທົບຕໍ່ນັກຮຽນ ຫຼື ຄູສອນ.<br>• ຜົນກະທົບ ຫຼື ການລົບກວນຈາກການປັບປຸງໂຄງສ້າງພື້ນຖານທີ່ສົ່ງຜົນກະທົບຕໍ່ນັກຮຽນ, ຄູສອນ ຫຼື ຊຸມຊົນທ້ອງຖິ່ນ. | • ຜູ້ຊອກຫາວຽກເຮັດງານທຳ ແລະ ພໍ່ແມ່<br>• ນາຍຈ້າງ<br>• ພະນັກງານຂອງ MoLSW, SDED ແລະ ສູນວຽກ.<br>• ພະນັກງານຮັບເໝົາວຽກໂຍທາ/ແຮງງານ.<br>• ຊຸມຊົນທ້ອງຖິ່ນ |
| ອົງປະກອບທີ 3: ການປົກຄອງທີ່ດີຂຶ້ນ, ການຄຸ້ມຄອງໂຄງການ, ແລະ ການຕິດຕາມ & ປະເມີນຜົນ (M&E). | • ພະນັກງານທີ່ປະສົບກັບການເລືອກປະຕິບັດໃນເງື່ອນໄຂຂອງການເຂົ້າຮ່ວມການຝຶກອົບຮົມ ແລະ ກິດຈະກຳໂຄງການອື່ນໆ.<br>• ຄວາມຮຸນແຮງທາງເພດ (GBV), ການຂູດຮີດທາງເພດ ແລະ ການລ່ວງລະເມີດທາງເພດ (SEA) ທີ່ສົ່ງຜົນກະທົບຕໍ່ນັກຮຽນ ຫຼື ຄູສອນ. | • MoES, MoLSW<br>• ພະນັກງານ TVET<br>• ພໍ່ແມ່ |

ອີງຕາມຂອບເຂດຂອງບັນຫາທີ່ອາດຈະນຳໄປສູ່ການຮ້ອງທຸກ, ຂັ້ນຕອນສະເພາະໄດ້ຖືກພັດທະນາສຳລັບ 3 ປະເພດຂອງການຮ້ອງທຸກ: (i) ການຮ້ອງທຸກທົ່ວໄປ, (ii) ກໍລະນີທີ່ກ່ຽວຂ້ອງກັບ GBV/SEA, ແລະ (iii) ການຮ້ອງຮຽນຈາກພະນັກງານໂຄງການ. ຂັ້ນຕອນຂອງແຕ່ລະລາຍການແມ່ນໄດ້ອະທິບາຍໄວ້ຂ້າງລຸ່ມນີ້.

ຜູ້ທີ່ໄດ້ຮັບຜົນປະໂຫຍດຈາກໂຄງການ ແລະ ພາກສ່ວນທີ່ກ່ຽວຂ້ອງໃນເຂດຊົນນະບົດຫ່າງໄກສອກຫຼີກ ອາດຈະປະເຊີນກັບອຸປະສັກທາງດ້ານພາສາ ທີ່ປ້ອງກັນບໍ່ໃຫ້ເຂົາເຈົ້າຢູ່ໃນການຮ້ອງທຸກ. ເພື່ອເອົາຊະນະອຸປະສັກທາງດ້ານພາສາ, ຂໍ້ມູນກ່ຽວກັບ GRM ຈະຖືກສະໜອງໃຫ້ໃນພາສາທີ່ຈະແຈ້ງ ແລະ ງ່າຍດາຍ ດ້ວຍການແປເປັນພາສາຊົນເຜົ່າທ້ອງຖິ່ນຕາມຄວາມຕ້ອງການ. ໂປສເຕີຈະຖືກກະກຽມເພື່ອສະແດງໃຫ້ເຫັນພາບຂະບວນການແກ້ໄຂການຮ້ອງທຸກ ແລະ ຈະລວມເອົາຊື່ຜູ້ຕິດຕໍ່ ແລະ ເບີໂທສໍາລັບຈຸດປະສານງານການຮ້ອງທຸກ.

### 10.1. ຂັ້ນຕອນການຮ້ອງຮຽນແບບທົ່ວໄປ (Procedure for General Complaints)

ກົນໄກການຮ້ອງທຸກສໍາລັບການຮ້ອງທຸກແບບທົ່ວໄປແມ່ນສະແດງຢູ່ໃນຮູບທີ 1. ເພື່ອຮັບປະກັນການເຂົ້າເຖິງໄດ້ງ່າຍ, ການຮ້ອງທຸກສາມາດຖືກລາຍງານຜ່ານຫຼາຍຊ່ອງທາງ:

- ຈຸດປະສານງານ ESF ທີ່ຢູ່ແຕ່ລະສູນ TVET, ສູນວຽກ ແລະ ສູນພັດທະນາສີມືແຮງງານ
- ຫ້ອງການສຶກສາເມືອງ/ຫ້ອງການແຮງງານເມືອງ
- ໂທລະສັບ ແລະ ສາຍດ່ວນ WhatsApp ທີ່ຄຸ້ມຄອງໂດຍ PCU MOES ແລະ MOLSW

ດັ່ງທີ່ສະແດງຢູ່ໃນຕາຕະລາງ x ຂ້າງລຸ່ມນີ້, ຊ່ອງທາງການລາຍງານຕ່າງໆເຫຼົ່ານັ້ນເຫຼົ່ານີ້ເມື່ອລວມກັນແລ້ວຈະມີທາງເລືອກທີ່ຫຼາກຫຼາຍທີ່ເຫມາະສົມສໍາລັບສະຖານະການທີ່ຫຼາກຫຼາຍ.

ຕາຕະລາງ 11: ພາບລວມຂອງຊ່ອງທາງການລາຍງານ (**Overview of Reporting Channels**)

| **ຊ່ອງທາງການລາຍງານ**<br>**Reporting Channels** | **ຈຸດແຂງ**<br>**Strengths** | **ຂໍ້ຈໍາກັດ**<br>**Limitations** |
|---|---|---|
| ສູນຝຶກອົບຮົມ ແລະ ສູນຈັດຫາວຽກ | ສາມາດເຂົ້າເຖິງນັກຮຽນ ແລະ ຄູສອນໄດ້ງ່າຍ | ຖ້າການຮ້ອງທຸກກ່ຽວຂ້ອງກັບພະນັກງານ, ຜູ້ຮ້ອງທຸກອາດຈະຮູ້ສຶກບໍ່ສະບາຍໃຈໃນການລາຍງານ. |
| ຫ້ອງການສຶກສາເມືອງ | ມີພາລະໜ້າທີ່ທີ່ຈະແຈ້ງໃນການຄຸ້ມຄອງຂະແໜງການສຶກສາ | ຫ້ອງການອາດຈະຢູ່ໄກ. |
| ໂທລະສັບສາຍດ່ວນຂອງ MoES ແລະ MoLSW | ທຸກຄົນສາມາດເຂົ້າເຖິງໄດ້ງ່າຍດ້ວຍໂທລະສັບ; ສະເໜີການບໍ່ເປີດເຜີຍຊື່ຖ້າຕ້ອງການ | ບໍ່ສາມາດເຂົ້າເຖິງໂດຍຜູ້ທີ່ບໍ່ມີໂທລະສັບ. |
| ສາຍດ່ວນ WhatsApp | ແພດຟອມສື່ນທະນາທີ່ຄຸ້ນເຄີຍ ແລະ ໃຊ້ກັນຢ່າງກວ້າງຂວາງ, ພ້ອມຕົວເລືອກໃນການແຊ້ເອກະສານ ແລະ ຮູບພາບ. | ບໍ່ມີອິນເຕີເນັດໃຫ້ບໍລິການໃນບາງເຂດທີ່ຢູ່ໃນເຂດຊົນນະບົດທ. |

ທຸກຄໍາຮ້ອງທຸກທົ່ວໄປ - ໄດ້ຮັບໂດຍແຕ່ລະຊ່ອງທາງການລາຍງານ - ຈະຖືກລາຍງານໃຫ້ຜູ້ປະສານງານ GRM ທີ່ MOES ຫຼື MoLSW (ຂຶ້ນກັບອົງປະກອບ / ກິດຈະກໍາຂອງໂຄງການ). ບົດບາດຂອງຜູ້ປະສານງານ GRM ແມ່ນເພື່ອຮັກສາບັນຊີ

ການຮ້ອງທຸກແບບລວມສູນ, ຮັບປະກັນການປະຕິບັດຄຳຮ້ອງທຸກຢ່າງເຫມາະສົມ, ແລະ ຕິດຕາມຜົນໄດ້ຮັບ. ເມື່ອໄດ້ຮັບບົດລາຍງານການຮ້ອງທຸກ, ຜູ້ປະສານງານ GRM ຈະລົງທະບຽນ, ກວດສອບ, ແລະ ມອບຫມາຍກໍລະນີຕາມຜົນກະທົບ / ຄວາມສ່ຽງ.

ຜູ້ປະສານງານ GRM ຈະມອບໝາຍແຕ່ລະຄຳຮ້ອງທຸກທົ່ວໄປໃຫ້ກັບໜ່ວຍງານທີ່ເໝາະສົມເພື່ອຕິດຕາມ. ການຮ້ອງທຸກທີ່ຖືກປະເມີນວ່າມີຜົນກະທົບ / ຄວາມສ່ຽງຕໍ່າ ແລະ ກ່ຽວຂ້ອງກັບສູນຝຶກອົບຮົມ ຫຼື ສູນວຽກຈະຖືກມອບຫມາຍໃຫ້ຈຸດປະສານງານ ESF ທີ່ຢູ່ທີ່ນັ້ນ. ເຖິງຢ່າງໃດກໍ່ຕາມ, ຖ້າກໍລະນີທີ່ກ່ຽວກັບສູນຝຶກອົບຮົມ ຫຼື ສູນວຽກງານຖືກຕີລາຄາວ່າປານກາງ, ສູງ ຫຼື ວິກິດ (ໜັກ) ຈະມອບໃຫ້ຂັ້ນເມືອງ, ແຂວງ ຫຼື ຂັ້ນສູນກາງຕາມລຳດັບ. ຄຳນິຍາມການດຳເນີນງານສຳລັບຄວາມສ່ຽງ (ຕໍ່າ, ປານກາງ, ສູງ, ວິກິດ (ໜັກ)) ຈະຖືກສ້າງຕັ້ງຂຶ້ນໃນລະຫວ່າງການປະຕິບັດໂຄງການ.

ທຸກຂໍ້ຮ້ອງທຸກຈະຖືກແກ້ໄຂທັນທີທີ່ປະຕິບັດໄດ້. ຖ້າຫາກບໍ່ໄດ້ຮັບການແກ້ໄຂພາຍໃນ 10 ວັນ, ກໍລະນີຈະຖືກຍົກລະດັບໄປສູ່ ກົນໄກການຮ້ອງທຸກໃນຂັ້ນຕໍ່ໄປ.

ຮູບທີ່ 1: ຂະບວນການສຳລັບກົນໄກການແກ້ໄຂຂໍ້ຮ້ອງທຸກ (**Process for Grievance Mechanism**)




## 10.2. ຂັ້ນຕອນສຳລັບກໍລະນີຂອງ GBV/SEA (Procedure for cases of GBV/SEA)

ຈະມີການສ້າງຕັ້ງສາຍການຊ່ວຍເຫຼືອ GBV/SEA (ໂທລະສັບ ແລະ WhatsApp) ໂດຍທີ່ປຶກສາທີ່ໄດ້ຮັບການຝຶກອົບຮົມຢູ່ສະຫະພັນແມ່ຍິງລາວ. ເມື່ອໄດ້ຮັບຄຳຮ້ອງທຸກໂດຍຜ່ານສາຍດ່ວນເຫຼືອ, ຜູ້ໃຫ້ຄຳປຶກສາ LWU ຈະລົງທະບຽນກໍລະນີໃນປຶ້ມບັນທຶກ GRM ຂອງເຂົາເຈົ້າ, ຈະມອບຫມາຍເລກປະຈຳຕົວຂອງກໍລະນີເພື່ອຮັບປະກັນຄວາມລັບ (ເພື່ອນຳໃຊ້ໃນເອກະສານທັງຫມົດແທນທີ່ຈະເປັນຊື່ ແລະ ຂໍ້ມູນສ່ວນບຸກຄົນອື່ນໆ), ແລະ ຈະລາຍງານ ໝາຍເລກປະຈຳຕົວກໍລະນີໄປຫາຜູ້ປະສານງານ

MOES/MOLSW GRM (ບໍ່ຈຳເປັນຕ້ອງແລກປ່ຽນຂໍ້ມູນອື່ນໃດ). ຖ້າຄຳຮ້ອງທຸກບໍ່ກ່ຽວຂ້ອງກັບ GBV/SEA, ທີ່ປຶກສາ LWU ຈະມອບໃຫ້ຜູ້ປະສານງານ GRM ຂອງ MOES/MOLSW ເພື່ອດຳເນີນການຕາມຂັ້ນຕອນການຮ້ອງທຸກທົ່ວໄປ. ຖ້າກໍລະນີໃດໆ ທີ່ກ່ຽວຂ້ອງກັບ GBV ແລະ SEA ທີ່ໄດ້ຮັບຜ່ານຊ່ອງທາງການລາຍງານທີ່ສ້າງຂຶ້ນສຳລັບການຮ້ອງທຸກທົ່ວໄປ (ເບິ່ງຂ້າງເທິງ), ຜູ້ປະສານງານ GRM ຈະມອບກໍລະນີໃຫ້ກັບຜູ້ໃຫ້ຄຳປຶກສາ LWU ທັນທີ. ຂັ້ນຕອນລະອຽດສຳລັບການຄຸ້ມຄອງກໍລະນີ GBV/SEA ຈະຖືກພັດທະນາໂດຍທີ່ປຶກສາ LWU. ໝາຍເລກສາຍດ່ວນ GBV/SEA ຈະຖືກເຜີຍແຜ່ໃນລະຫວ່າງການປຶກສາຫາລືກັບຜູ້ມີສ່ວນຮ່ວມ ແລະ ໃນໂປສເຕີຂໍ້ມູນ GRM.

### 10.3. ຂັ້ນຕອນສຳລັບການຮ້ອງຮຽນຈາກພະນັກງານໂຄງການ (Procedure for complaints from project workers)

ພະນັກງານໂຄງການທີ່ມີຄຳຮ້ອງທຸກຄວນແຈ້ງໃຫ້ພະແນກບຸກຄົນຂອງເຂົາເຈົ້າຢູ່ທີ່ສູນຈັດຫາວຽກ, ສູນຝຶກອົບຮົມ, ພະແນກລັດຖະບານ ຫຼື ບໍລິສັດຜູ້ຮັບເຫມົາວຽກໂຍທາທີ່ພະນັກງານໂຄງການຢູ່. ໃນກໍລະນີທີ່ບໍ່ມີພະແນກບຸກຄົນ, ພະນັກງານໂຄງການຄວນເວົ້າກັບສະມາຊິກຂອງທີມງານຄຸ້ມຄອງຂອງອົງການຈັດຕັ້ງ. ຈຸດປະສານງານ ESF ທີ່ຢູ່ TVET/JC ຕ້ອງໄດ້ຮັບການແຈ້ງໃຫ້ຊາບທັນທີວ່າໄດ້ຮັບຄຳຮ້ອງທຸກ ແລະ ຈະແຈ້ງໃຫ້ຜູ້ປະສານງານ GRM ທີ່ MOES/MOLSW ເພື່ອບັນທຶກກໍລະນີໃນທະບຽນ GRM ສູນກາງ.

ພະນັກງານໂຄງການ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງຈະພະຍາຍາມຕາມສົມຄວນ ເພື່ອແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ, ໂດຍໄດ້ຮັບການສະໜັບສະໜູນຈາກພະແນກບຸກຄົນ ແລະ/ຫຼື ທີມງານຄຸ້ມຄອງຕາມຄວາມເໝາະສົມ. ຖ້າການແກ້ໄຂບໍ່ສາມາດແກ້ໄຂໄດ້, ຫຼື ຜູ້ຮ້ອງທຸກບໍ່ພໍໃຈກັບການແກ້ໄຂທີ່ສະເໜີ, ກໍລະນີ ຕ້ອງໄດ້ຮັບການເລື່ອນຂຶ້ນໄປ.

ການຮ້ອງທຸກຈະຖືກສົ່ງຕໍ່ໄປຫາຫ້ອງການບຸກຄະລາກອນຂອງ TVED/SDED ໃນລະດັບແຂວງ. ຖ້າຫາກຍັງບໍ່ໄດ້ຮັບການແກ້ໄຂ, ກໍລະນີ ຈະໄດ້ຮັບການຍົກຂຶ້ນໄປຫາຫ້ອງການບຸກຄະລາກອນຂອງ TVED/SDED ໃນລະດັບຂອງ ກະຊວງ. ທຸກໆກໍລະນີ ທີ່ຍົກຂຶ້ນໄປສູ່ລະດັບແຂວງ ແລະ ລະດັບກະຊວງຈະຖືກຕິດຕາມຢ່າງໃກ້ຊິດໂດຍຈຸດປະສານງານ ESF ຢູ່ TVED/SDED. ຂະບວນການຍົກຂຶ້ນນີ້ຍັງໃຊ້ກັບພະນັກງານສັນຍາຈ້າງວຽກໂຍທາ ຖ້າການຮ້ອງທຸກຂອງເຂົາເຈົ້າບໍ່ໄດ້ຮັບການແກ້ໄຂໂດຍພະແນກບຸກຄະລາກອນຂອງບໍລິສັດເອງ.

**ຮູບທີ່ X – ຂະບວນການຮ້ອງທຸກຂອງຜູ້ອອກແຮງງານ (Figure x – Process for Worker Grievances)**




ຖ້າພະນັກງານໂຄງການຮູ້ສຶກບໍ່ສະບາຍໃຈບໍ່ວ່າຈະຍ້ອນເຫດຜົນໄດ້ກໍ່ຕາມໃນລາຍງານການຮ້ອງທຸກຂອງເຂົາເຈົ້າຢູ່ບ່ອນເຮັດວຽກ, ເຂົາເຈົ້າອາດຈະຕິດຕໍ່ໂດຍກົງກັບຈຸດປະສານງານ ESF ທີ່ MOES ແລະ/ຫຼື MOSLW ເຊິ່ງເປັນຜູ້ທີ່ຈະສືບສວນກໍລະນີນີ້.

ຈະມີການຝຶກອົບຮົມກ່ຽວກັບການແກ້ໄຂການຮ້ອງທຸກໃຫ້ແກ່ບຸກຄະລາກອນຫຼັກໆທີ່ມີສ່ວນຮ່ວມໃນແຕ່ລະຂັ້ນຕອນຂອງກົນໄກການແກ້ໄຂຂໍ້ຮ້ອງທຸກ. ການຝຶກອົບຮົມຈະປະກອບມີ (i) ຂັ້ນຕອນ ແລະ ວິທີການເກັບກຳຂໍ້ມູນ ແລະ ການສືບສວນການຮຽກຮ້ອງ, (ii) ຂໍ້ກຳນົດສຳລັບເອກະສານ, ການລາຍງານ, (iii) ການຮັກສາຄວາມລັບ ແລະ ການປອງກັນຂໍ້ມູນ, (iv) ຂໍ້ກຳນົດການປະຕິບັດຕາມໂດຍອ້າງອີງໃສ່ກົດຫມາຍ, ກົດລະບຽບ, ນະໂຍບາຍ ແລະ ຂໍ້ກຳນົດອື່ນໆ. (ລວມທັງ ESMF ນີ້).

ໃນທຸກໆຂັ້ນຕອນ, ພະນັກງານໂຄງການອາດຈະຂໍການແຕ່ງຕັ້ງຜູ້ໄກ່ເກ່ຍອິດສະລະຕາມດຳລັດວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງແຮງງານ ສະບັບເລກທີ 76/ກລ (2018). ໜ້າທີ່ຂອງຜູ້ໄກ່ເກ່ຍລວມມີການກວດກາ ແລະ ພິຈາລະນາຄຳຮ້ອງຂໍແກ້ໄຂທາງບໍລິຫານທີ່ໄດ້ຍື່ນໂດຍພາກສ່ວນທີ່ກ່ຽວຂ້ອງ; ການເກັບຮັກສາບັນທຶກຂໍ້ມູນທີ່ແລກປ່ຽນກັນໂດຍຝ່າຍຕ່າງໆ; ສ້າງແຜນການລະງັບຂໍ້ຜິດພາດທາງດ້ານແຮງງານ ແລະ ຮຽກຮ້ອງໃຫ້ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມໃນຂະບວນການໄກ່ເກ່ຍ; ດຳເນີນຂະບວນການໄກ່ເກ່ຍ; ຢັ້ງຢືນ ແລະ ຮັບປະກັນໃຫ້ຂະບວນການໄກ່ເກ່ຍເປັນທຳ, ທັນການ, ແລະ ມີປະສິດທິຜົນ; ບັນທຶກຂໍ້ຕົກລົງທີ່ບັນລຸໄດ້ໃນລະຫວ່າງຂະບວນການໄກ່ເກ່ຍ, ອ່ານຂໍ້ຕົກລົງໃຫ້ຝ່າຍຕ່າງໆ, ແລະ ໄດ້ຮັບລາຍເຊັນຈາກບັນດາຝ່າຍ; ລາຍງານຜົນຂອງຂະບວນການໄກ່ເກ່ຍຕໍ່ອົງການບໍລິຫານແຮງງານ; ແລະ ສົ່ງຕໍ່ເອກະສານໃຫ້ສານປະຊາຊົນລາວ ຖ້າຫາກວ່າບໍ່ສາມາດແກ້ໄຂບັນຫາດັ່ງກ່າວຜ່ານທາງບໍລິຫານ.

## 10.4. ຕິດຕາມກວດກາ,ການລາຍງານ ແລະ ການເກັບຮັກສາບັນທຶກ (Monitoring, reporting and record keeping)

- ການຕິດຕາມການຮ້ອງທຸກ ແລະ ການແກ້ໄຂຂອງພວກເຂົາໃນທຸກລະດັບແມ່ນຄວາມຮັບຜິດຊອບຂອງຜູ້ປະສານງານ PMU GRM
- ປະສິດທິຜົນຂອງກົນໄກການຮ້ອງທຸກຈະຖືກຕິດຕາມຜ່ານການລາຍງານປະຈຳເດືອນ ແລະ ປະຈຳໄຕມາດ.
- ແບບຟອມການຮ້ອງທຸກ, ບັນທຶກ ແລະ ເອກະສານທີ່ກ່ຽວຂ້ອງກັບການຮ້ອງທຸກຈະຖືກລວບລວມເປັນເອກະສານການຮ້ອງທຸກສຳລັບແຕ່ລະກໍລະນີ, ແລະ ເມື່ອສຳເລັດຈະຖືກສົ່ງຕໍ່ຫາຜູ້ປະສານງານ GRM ທີ່ MOES/MOLSW ເພື່ອຍື່ນເລື່ອງ.
- ບັນທຶກການຮ້ອງທຸກຈະຖືກປະຕິບັດເປັນຄວາມລັບ. ບັນທຶກ ແລະ ຂໍ້ມູນກ່ຽວກັບການຮ້ອງທຸກຈະຖືກສະໜອງໃຫ້ຜູ້ທີ່ໄດ້ຮັບອະນຸຍາດໃຫ້ເຂົ້າຮ່ວມການແກ້ໄຂຂອງແຕ່ລະກໍລະນີເທົ່ານັ້ນ.

**ເອກະສານຊ້ອນທ້າຍ a: ລາຍຊື່ ຜູ້ທີ່ເຂົ້າຮ່ວມປຶກສາຫາລື ສຳລັບການສ້າງ ESF**

| | **ຊື່** | **ໜ້າທີ່** | **ທີ່ຕັ້ງ** |
|---|---|---|---|
| **ຜູ້ເຂົ້າຮ່ວມການປຶກສາຫາລື ຜ່ານທາງໂທລະສັບມືຖື.** | | | |
| **ຊົນເຜົ່າໄວໜຸ່ມ, ຜູ້ປະກອບການຂະແໜງກະສິກຳໄວໜຸ່ມ** | | | |
| 1 | ທ່ານ ຄຳຈັນ ສີງຫາລາດ, ລາວລຸ່ມ, ອາຍຸ27<br>Tel: 020 99734099 | ນັກທຸລະກິດໜຸ່ມ- ລ້ຽງປາ ແລະກົບ | ເມືອງຄູນ, ແຂວງ ຊຽງຂວາງ |

| | | | |
|---|---|---|---|
| 2 | ທ່ານ ລິນ ສຸກ ຈະເລີນ, ອາຍຸ 25<br>Tel: 020 98119112 | ນັກທຸລະກິດໜຸ່ມ- ລ້ຽງປາ ແລະກົບ | ເມືອງ ຄຳ, ແຂວງ ຊຽງຂວາງ |
| 3 | ທ່ານ ນາງ ນິດ ເພັດ ແສງທອງ, ອາຍຸ 22, ເຜົ່າ ຂະມູ<br>Tel: 030 9416509 | ນັກທຸລະກິດໜຸ່ມ- ຟາມໄກ່ | ຜາໄຊ, ເມືອງ ຊຽງຂວາງ |
| 4 | ທ່ານ ນາງ ສຸດໃຈ ພິມມາວົງ, ອາຍຸ 23, ເຜົ່າ ລາວລຸ່ມ<br>Tel: 020 91911715 | ນັກທຸລະກິດໜຸ່ມ–<br>ອາຫານແຫ້ງ ແລະກວນໝາກໄມ້ | ເມືອງ ຊຽງຂວາງ |
| 5 | ທ່ານ ນາງ ເຢີມາວ ມັກກູ, ອາຍຸ 23, ເຜົ່າ ມົ້ງ<br>Tel: 020 23539554, 02054977596 | ນັກທຸລະກິດໜຸ່ມ–<br>ຟາມໝູ, | ເມືອງ ຊຽງຂວາງ |
| **ສຳພາດ ໄວໜຸ່ມ ແລະທີ່ພົວພັນກັບ IT** | | | |
| 6 | ທ່ານ ບຸນນຳ, ອາຍຸ 19<br>Tel: 2095778794 | ນັກສຶກສາ, ວິທະຍາໄລດົງໂດກ | ນະຄອນຫຼວງວຽງຈັນ |
| 7 | ທ່ານ ນາງ ປູນາ ພິມມາບູດ, ອາຍຸ 20<br>Tel: 2054393967 | ນັກສຶກສາ IT ແລະທຸລະກິດ | ນະຄອນຫຼວງວຽງຈັນ |
| 8 | ທ່ານ ສົມສຸກ ສີດາ ວົງ, ອາຍຸ 21<br>Tel 2092349895 | ບໍ່ມີວຽກເຮັດ/ຮຽນບໍ່ຈົບ | ແຂວງ ຈຳປາສັກ |

| | | | |
|---|---|---|---|
| 9 | Lee Min Yang, ອາຍຸ 21<br>Tel: 2094485646 | | ແຂວງ ຫົວພັນ |
| **ຜູ້ທີ່ເຮັດວຽກສົ່ງເສີມ/ການມີສ່ວນຮ່ວມ ຂອງໄວໜຸ່ມ ໃນການພັດທະນາເສດຖະກິດສັງຄົມ** | | | |
| 10 | ທ່ານ ນາງ ນິດພາ ພອນ ນາມປັນຍາ<br>Tel: 20 56 324 154 | ຜູ້ປະສານໂຄງການ ຂອງໂຄງການ Helvetas, ຮັບຜິດຊອບ ການລົງທຶນໃນກະຊິກໍາແບບມີຄວາມຮັບຜິດຊອບ-ການມີສ່ວນຮ່ວມ ຂອງຊາວໜຸ່ມ ແລະ ແມ່ຍິງ | ວຽງຈັນ (ຮັບຜິດຊອບໂຄງການ ຢູ່ ພົ້ງສາລີ) |
| | ທ່ານ ບຸນເຮັງ ສຸດທິຈັກ,<br>Tel: 20 55 400 099 | ວິດທະຍຸໄວໜຸ່ມ | ນະຄອນຫຼວງວຽງຈັນ |
| 12 | ທ່ານ ນາງ ພອນແກ້ວ ວັນນາ, 26 ປີ<br>Tel: 2097048843 | ເຮັດວຽກ ຢູ່ ເຄືອຄ່າຍຊາວກະສິກອນ,<br>CSO | ແຂວງສະຫວັນນະເຂດ<br>ບໍ່ມີວຽກເຮັດ/ບໍ່ຈົບການສຶກສາ<br>ເຄີຍເປັນກໍາມະກອນ ຢູ່ ປະເທດ ໄທ |
| **ລາຍຊື່ຜູ້ເຂົ້າຮ່ວມ ການປຶກສາຫາລືກ່ຽວກັບ E&S ທາງ ອອນລາຍ, ການເປີດເຜີຍຂໍ້ມູນຂ່າວສານ ແລະການອອກແບບການຄຸ້ມຄອງຄວາມສ່ຽງ.** | | | |
| 13 | ທ່ານ ອານຸສິດ ບຸນສຸລັດ | 1. ການປຶກສາຫາລື ກ່ຽວກັບ E&S ກັບ TVET 8 ແຫ່ງ ຜ່ານ ທີມ MS<br> | |
| 14 | ທ່ານ ນາງ ບົວແສງ ຄໍາມູນຕີ | | |
| 15 | ທ່ານ ບຸນທອງ ໄຊຍະວົງ | | |
| 16 | ທ່ານ ຈິດທາກອນ ສີສະນິນ | | |
| 17 | ທ່ານ ດວງດີ ສີລິບັງ (ໂຮງຮຽນປາກປາສັກ TVET) | | |

| | | |
|---|---|---|
| 18 | ທ່ານ ເພັດຈິນດາ ສີສົມຫວັງ | 2. ການປຶກສາຫາລື ກ່ຽວກັບ E&S ກັບອົງການຈັດຕັ້ງປະຕິບັດໂຄງກາ, MoES ແລະ MoLSW ແລະTVET ຜ່ານ Zoom.  |
| 19 | ທ່ານ ໂພໄຊ ບູລົມ | |
| 20 | ທ່ານ ແສງທອງ ອິນຊານ (MOES, ຜູ້ປະສານງານ) | |
| 21 | ທ່ານ ແສງອາລຸນ ວົງພະຫອມ (Vientiane – Hanoi TVET) | |
| 22 | ທ່ານ ສິງສະວິພາ ສອນພັນ | |
| 23 | ທ່ານ ສົມສີ ໄຊຍະລາດ | |
| 24 | ທ່ານ ຖາວອນ ວົງນວນສີ | |
| 25 | ທ່ານ ວັນນະເຂກ ເລີວັງ | |
| 26 | ທ່ານ ທອງສາ ອິນທະວົງ | |
| 27 | ທ່ານ ວຽງສະຫວັນ ພັດທະວົງ | |
| 28 | ອາຈານ ບຸນເຫຼືອ | |
| 29 | ທ່ານ ກາວສັກດາ ອິນປັນຍາ | |
| 30 | ທ່ານ ສຸລະສິດ ສິຣິບັງ | |